ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ **5141** /ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ **10 ພະຈິກ 2026**

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,
ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນຄັ້ງທີ 01/2026.

- ອີງຕາມ ໜັງສືລາຍງານແຈ້ງມະຕິສຳຄັນຂອງສະພາບໍລິຫານ, ສະບັບເລກທີ 4793/ຜ-ຟຟລ, ລົງວັນທີ 09 ຕຸລາ 2026.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ບໍລິສັດ) ຫຼື (ຜ-ຟຟລ) ຂໍຖືເປັນກຽດຮຽນເຊີນບັນດາທ່ານ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນຄັ້ງທີ 01/2026 ໃນວັນທີ **19 ພະຈິກ 2026** ເວລາ **14:00** ໂມງ. ພ້ອມດຽວກັນນີ້, ຂໍຖືເປັນກຽດແຈ້ງໃຫ້ບັນດາທ່ານຊາບວ່າ ກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນຄັ້ງທີ 01/2026 ຈະໄດ້ຈັດຂຶ້ນເປັນ 02 ລະບົບ ຄື: ລະບົບປະຊຸມຊ່ອງໜ້າ **ທີ່ຫ້ອງປະຊຸມ 01 ສຳນັກງານໃຫຍ່ ບໍລິສັດ ລັດວິສາຫະກິດໄຟຟ້າລາວ** ແລະ ລະບົບປະຊຸມອອນລາຍ

ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມແບບອອນລາຍ ສາມາດສຶກສາຂັ້ນຕອນ ແລະ ວິທີການເຂົ້າຮ່ວມໄດ້ຕາມ **ເອກະສານຄັດຕິດທີ 8.** ສ່ວນຜູ້ຖືຮຸ້ນທີ່ຈະເຂົ້າປະຊຸມແບບຊ່ອງໜ້າແມ່ນ ບໍລິສັດຈະເລີ່ມເປີດຮັບລົງທະບຽນເວລາ **13:00** ໂມງ, ທີ່ຫ້ອງປະຊຸມ **01 ສຳນັກງານໃຫຍ່ ບໍລິສັດ ລັດວິສາຫະກິດໄຟຟ້າລາວ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.

ພ້ອມນີ້, ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນຄັ້ງທີ 01/2026 ຜ່ານເວັບໄຊທ໌ຂອງບໍລິສັດ (www.edlgen.com.la)ແລະ ລະບົບເປີດເຜີຍຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la) ເພື່ອໃຫ້ຜູ້ຖືຮຸ້ນໄດ້ຮັບຊາບຢ່າງທົ່ວເຖິງ.

ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນຄັ້ງທີ 01/2026 ໃນວັນທີ **23 ຕຸລາ 2026**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,
ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈູມຄຳ

ເອກະສານຄັດຕິດ:

1) ວາລະກອງປະຊຸມ ຜູ້ຖືຮຸ້ນ ສະໄໝວິສາມັນ ຄັ້ງທີ 01/2026.
2) ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025.
3) ຊີວະປະຫວັດຫຍໍ້ ຂອງທ່ານຮັກສາການຜູ້ອຳນວຍການໃຫຍ່ ຜ-ຟຟລ.
4) ບົດລາຍງານການໂອນຮຸ້ນ ທີ່ ຜ-ຟຟລ ຖືຄອງ ໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໃນສັດສ່ວນ 60% ຈາກ LDB-S
5) ບົດລາຍງານກ່ຽວກັບຄຳເຫັນຂອງທີ່ປຶກສາດ້ານກົດໝາຍກ່ຽວກັບການໂອນຮຸ້ນ ທີ່ ຜ-ຟຟລ ຖືຄອງ ໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໃນສັດສ່ວນ 60% ຈາກ LS Horizon.
6) ໃບມອບສັນທະ.
7) ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຈຳເປັນຕ້ອງໃຊ້ ເພື່ອການຢັ້ງຢືນຕົວຕົນເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
8) ຄຳແນະນຳຂັ້ນຕອນການເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍ ແລະ ໃຫ້ລົງທະບຽນກ່ອນວັນທີ **19 ພະຈິກ 2026.**
9) ແຜນທີ່ຂອງສະຖານທີ່ຈັດກອງປະຊຸມ .

ໝາຍເຫດ:

1. ເພື່ອເປັນການອຳນວຍຄວາມສະດວກໃຫ້ກັບບັນດາທ່ານຜູ້ຖືຮຸ້ນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂໍແຈ້ງມາຍັງບັນດາທ່ານຊາບຄື:

1.1 ຜູ້ຖືຮຸ້ນທຸກໆທ່ານ ສາມາດດາວໂຫຼດໜັງສືເຊີນປະຊຸມພ້ອມເອກະສານຄັດຕິດໃນເວັບໄຊທ໌ ຂອງບໍລິສັດ www.edlgen.com.la ແລະ ເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ www.lsx.com.la ຫຼື ສາມາດໄປຮັບໜັງສືເຊີນ ພ້ອມເອກະສານຄັດຕິດຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +856 (21) 454361-4, ເລີ່ມແຕ່ວັນທີ **10 ພະຈິກ 2026**.

1.2 ຜູ້ຖືຮຸ້ນທີ່ມີຈຸດປະສົງຈະເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍສາມາດສົ່ງຄຳຖາມທີ່ຕິດພັນກັບວາລະກອງປະຊຸມມາກ່ອນວັນທີ **19 ພະຈິກ 2026** ຜ່ານອີເມວ: agm-egm@edlgen.com.la ແລະ ບໍລິສັດຂໍແຈ້ງໃຫ້ຜູ້ຖືຮຸ້ນທີ່ປະຊຸມຜ່ານລະບົບອອນລາຍນັ້ນຊາບວ່າ ບໍ່ໄດ້ສິດຕັ້ງຄຳຖາມໃນເວລາທີ່ດຳເນີນກອງປະຊຸມ.

1.3 ສະເໜີຜູ້ຖືຮຸ້ນມອບໝາຍໃຫ້ກຳມະການອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ (ກໍລະນີບໍ່ສາມາດເຂົ້າຮ່ວມໄດ້ດ້ວຍຕົນເອງ), ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **ເອກະສານຄັດຕິດ 6** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ ແລະ ໝາຍຖືກ (☑) ເພື່ອເລືອກເອົາກຳມະການສະພາບໍລິຫານອິດສະຫຼະ ຂອງບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບມາທາງທີ່ຢູ່ອີເມລຂອງບໍລິສັດ: proxy-register@edlgen.com.la ຫຼື ໄປສະນີເຖິງ ຜ-ຟຟລ, ຊັ້ນ 07, ພະແນກເລຂາສະພາບໍລິຫານ ແລະ ຄຸ້ມຄອງບໍລິຫານ, ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ ກະລຸນາສົ່ງກ່ອນວັນທີ **18 ພະຈິກ 2026.**

2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **ເອກະສານຄັດຕິດ 7** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານໃນກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
4. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ບຸນທະໜອມ ວົງເດືອນ ໂທ: (856-20) 58 848 144 ແລະ ທ່ານ ນາງ ຈັນໄຊ ພິລາລິມ (856-20) 56 294 465 ໃນໂມງລັດຖະການ.

ວາລະທີ 1: ພິຈາລະນາຮັບຮອງ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025.

ລາຍລະອຽດ:

ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ໄດ້ຈັດຂຶ້ນໃນວັນທີ **29 ເມສາ 2026**, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 01/2026 ພິຈາລະນາຮັບຮອງ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025, ທີ່ໄດ້ຈັດຂຶ້ນໃນວັນທີ **29 ເມສາ 2026**.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດ ໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2 : ພິຈາລະນາຮັບຮອງການແຕ່ງຕັ້ງ ຮັກສາການຜູ້ອຳນວຍການໃຫຍ່ (ຜູ້ໃຫມ່) ເພື່ອປ່ຽນແທນ ຜູ້ອຳນວຍການໃຫຍ່ (ຜູ້ເກົ່າ) ທີ່ຖືກແຕ່ງຕັ້ງໄປຮັບໜ້າທີ່ໃຫມ່.

ລາຍລະອຽດ:

ເນື່ອງຈາກມີການປ່ຽນແປງຄະນະຜູ້ບໍລິຫານ ແລະ ອີງຕາມໜັງສືລາຍງານແຈ້ງມະຕິສຳຄັນຂອງການຕົກລົງເຫັນດີຂອງສະພາບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ສະບັບເລກທີ 4187/ຜ-ຟຟລ, ຄົ້ງວັນທີ 27 ສິງຫາ 2026, ເພື່ອຮັບປະກັນໃຫ້ການຄຸ້ມຄອງບໍລິຫານບໍລິສັດໄດ້ດຳເນີນໄປຢ່າງຕໍ່ເນື່ອງ ບໍລິສັດເຫັນສົມຄວນສະເໜີກອງປະຊຸມ ພິຈາລະນາຮັບຮອງການແຕ່ງຕັ້ງຮັກສາການຜູ້ອຳນວຍການໃຫຍ່ (ຜູ້ໃໝ່) ເພື່ອປ່ຽນແທນຜູ້ອຳນວຍການໃຫຍ່ (ຜູ້ເກົ່າ) ທີ່ຖືກແຕ່ງຕັ້ງໄປຮັບໜ້າທີ່ໃຫມ່, ໂດຍມີຊີວະປະຫວັດຫຍໍ້ ໃນ**ເອກະສານຄັດຕິດ 3** ແລະ ມີລາຍລະອຽດດັ່ງລຸ່ມນີ້:

1. ຮັບຮອງການແຕ່ງຕັ້ງ ທ່ານ ດາວວຽງ ສຸນັນທະລາດ ເປັນຮັກສາການຜູ້ອຳນວຍການໃຫຍ່ ເພື່ອສືບຕໍ່ປະຕິບັດ ໜ້າທີ່ບໍລິຫານບໍລິສັດ ແທນຜູ້ອຳນວຍການໃຫຍ່ຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາການແຕ່ງຕັ້ງທ່ານຮັກສາການຜູ້ອຳນວຍການໃຫຍ່ (ຜູ້ໃໝ່) ເພື່ອປ່ຽນແທນທ່ານ ຜູ້ອຳນວຍການໃຫຍ່ (ຜູ້ເກົ່າ) ທີ່ຖືກແຕ່ງຕັ້ງໄປຮັບໜ້າທີ່ໃໝ່.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3 : ພິຈາລະນາຮັບຮອງຂະບວນການໂອນຮຸ້ນ ຜ-ຟຟລ ທີ່ຖືຄອງ ໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໃນສັດສ່ວນ 60%.

ລາຍລະອຽດ:

ການໂອນຮຸ້ນຈຳນວນ 60% ຂອງ ຜ-ຟຟລ ທີ່ມີຢູ່ໃນ ບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໄດ້ຜ່ານການຄົ້ນຄວ້າ ແລະ ປະກອບຄຳເຫັນຕາມຂະບວນການພາຍໃນບໍລິສັດ. ການໂອນຮຸ້ນດັ່ງກ່າວມີຈຸດປະສົງ ເພື່ອເພີ່ມສະພາບຄ່ອງທາງການເງິນ ແລະ ເຮັດໃຫ້ບໍລິສັດມີຄວາມຄ່ອງຕົວໃນການຈັດ

ສັນເງິນທຶນ ໃນການລົງທຶນໃນໂຄງການຜະລິດໄຟຟ້າຈາກແຫຼ່ງໃໝ່ທີ່ມີປະສິດທິຜົນ, ເຊິ່ງມີລາຍລະອຽດດັ່ງນີ້:

1. ຊັບສິນ ແລະ ຜູ້ຊື້ຂາຍ

ຊັບສິນທີ່ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດການໂອນ ແມ່ນຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ທີ່ຖືຄອງໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ຈຳນວນ 660,000 ຮຸ້ນ ຄິດເປັນສັດສ່ວນ 60% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ.

ໃນການໂອນຮຸ້ນຄັ້ງນີ້ ຜ-ຟຟລ ເປັນຜູ້ຂາຍ ແລະ ຜູ້ໂອນຮຸ້ນ ສ່ວນຜູ້ຊື້ ແລະ ຜູ້ຮັບໂອນຮຸ້ນ ແມ່ນ ກຸ່ມບໍລິສັດ ພີງຊັບທະວີ ຈຳກັດຜູ້ດຽວ ໂດຍການໂອນຮຸ້ນຈະຕ້ອງດຳເນີນການຕາມຂັ້ນຕອນ, ເງື່ອນໄຂ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ລາຄາ, ວິທີການ ແລະ ບ່ອນອີງໃນການກຳນົດລາຄາ ແລະ ແຜນການປັບປຸງລາຄາ

ການກຳນົດລາຄາໂອນຮຸ້ນຂອງ ຜ-ຟຟລ ທີ່ຖືຄອງໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໃນສັດສ່ວນ 60% ໄດ້ອີງໃສ່ຜົນການປະເມີນມູນຄ່າຮຸ້ນຂອງ ບໍລິສັດ ເອເຊຍ ໂລຕັດ ປະເມີນມູນຄ່າ ຊັບສິນ ຈຳກັດເຊິ່ງໄດ້ນຳໃຊ້ວິທີການຄິດໄລ່ກະແສເງິນສົດໃນອະນາຄົດກັບຄືນມາເປັນມູນຄ່າ ປັດຈຸບັນ (Discounted Cash Flow: DCF) ໂດຍໃຊ້ອັດຕາຄິດຫຼຸດ (WACC) ເທົ່າກັບ 10.62% ແລະ ອີງໃສ່ຂໍ້ມູນການເງິນຊ່ວງປີ 2021–2025 ປະກອບກັບການຄາດຄະເນກະແສເງິນສົດໃນອະນາຄົດ.

ຜົນການປະເມີນດັ່ງກ່າວ ໄດ້ກຳນົດມູນຄ່າກິດຈະການ (Enterprise Value) ເທົ່າກັບ 858,440,713 ໂດລາສະຫະລັດ, ແຕ່ເນື່ອງຈາກຜ່ານມາໄດ້ມີການປະເມີນຄືນດ້ານການຜະລິດໄຟຟ້າ ແລະ ລາຍຮັບ ມີການຜັນຜວນ 20%-30%, ຈຶ່ງໄດ້ມີການຄິດໄລ່ຫຼຸດ 27.20% ເພື່ອໃຫ້ສອດຄ່ອງກັບຄວາມເປັນຈິງ. ດັ່ງນັ້ນ, ມູນຄ່າຮຸ້ນໃນສັດສ່ວນ 60% ທີ່ ຜ-ຟຟລ ຖືຄອງ ຄິດເປັນ 374,966,903 ໂດລາສະຫະລັດ.

ພ້ອມດຽວກັນນີ້, ທີ່ປຶກສາດ້ານຫຼັກຊັບ ໄດ້ພິຈາລະນາ ແລະ ໃຫ້ຄຳເຫັນຕໍ່ຜົນການປະເມີນມູນຄ່າຮຸ້ນຂອງບໍລິສັດ ເອເຊຍ ໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ ເພື່ອເປັນຂໍ້ມູນປະກອບການພິຈາລະນາກຳນົດລາຄາໂອນຮຸ້ນ.

ບົນພື້ນຖານຜົນການປະເມີນ ແລະ ຄຳເຫັນດັ່ງກ່າວ ຈຶ່ງໄດ້ກຳນົດລາຄາໂອນຮຸ້ນໃນສັດສ່ວນ 60% ເປັນຈຳນວນ 375,000,000 ໂດລາສະຫະລັດ (ສາມຮ້ອຍເຈັດສິບຫ້າລ້ານໂດລາສະຫະລັດ) ໂດຍກຳນົດເປັນ ລາຄາຄົງທີ່ ແລະ ບໍ່ມີແຜນການປັບປຸງລາຄາພາຍຫຼັງ.

3. ຮູບແບບການຊຳລະ

ກຳນົດໃຫ້ຊຳລະຄ່າໂອນຮຸ້ນເປັນເງິນສົດ ໃນສະກຸນເງິນໂດລາສະຫະລັດ ໂດຍລາຍລະອຽດການຊຳລະ ຈະກຳນົດໃນສັນຍາຊື້-ຂາຍຮຸ້ນ.

ລາຍລະອຽດຂໍ້ມູນ ແລະ ບົດລາຍງານການປະເມີນຂອງບໍລິສັດຫຼັກຊັບ **ເອກະສານຄັດຕິດ 4** ແລະ ບົດລາຍງານຂອງທີ່ປຶກສາດ້ານກິດໝາຍ **ເອກະສານຄັດຕິດ 5** ກ່ຽວກັບ ການໂອນຮຸ້ນໂຄງການດັ່ງກ່າວ ເຊິ່ງການປະເມີນ ໄດ້ອີງຕາມຖານຂໍ້ມູນຊ່ວງປີ 2025.

ສຳລັບເງື່ອນໄຂອື່ນໆ ຜ-ຟຟລ ຈະດຳເນີນການໃຫ້ສອດຄ່ອງກັບຂໍ້ຕົກລົງວ່າດ້ວຍການໄດ້ມາ ແລະ ຊີ້ຂາດຊັບສິນ ແລະ ອາດຈະໄດ້ຂໍຜ່ອນຜັນໃນບາງເງື່ອນໄຂເປັນຕົ້ນແມ່ນບົດລາຍງານທີ່ປຶກສາດ້ານການເງິນອິດສະຫຼະ. ພ້ອມດຽວກັນນີ້ ຈະດຳເນີນການໃຫ້ສອດຄ່ອງກັບນິຕິກຳການອອກຮຸ້ນກູ້ ຂອງບໍລິສັດ.

ສະນັ້ນ, ສະພາບໍລິຫານຈຶ່ງສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດການໂອນຮຸ້ນຄັ້ງນີ້ດ້ວຍ ລາຍລະອຽດດັ່ງນີ້:

1. ອະນຸມັດການໂອນຮຸ້ນຂອງ ຜ-ຟຟລ ທີ່ຖືຄອງໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ຈຳນວນ 660,000 ຮຸ້ນ ຄິດເປັນສັດສ່ວນ 60% ໃນມູນຄ່າຄົງທີ່ 375,000,000 ໂດລາສະຫະລັດ ໂດຍຮັບຊຳລະເປັນເງິນສົດ ຕາມລາຍລະອຽດ ແລະ ເງື່ອນໄຂທີ່ໄດ້ນຳສະເໜີຂ້າງເທິງ
2. ສະເໜີກອງປະຊຸມມອບອຳນາດໃຫ້ ສະພາບໍລິຫານ ແລະ/ຫຼື ຜູ້ອຳນວຍການໃຫຍ່ ຜ-ຟຟລ ເປັນຜູ້ມີອຳນາດໃນການຕິດຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ດັດແກ້, ເພີ່ມເຕີມ, ຕີກລົງ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການໂອນຮຸ້ນໃນໂຄງການດັ່ງກ່າວ ແລະ/ຫຼື ບຸກຄົນທີ່ກ່ຽວຂ້ອງກັບການຮັບໂອນຮຸ້ນຂອງໂຄງການ ເຊິ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາໂອນຮຸ້ນ, ການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານລັດ ແລະ/ຫຼື ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດການກະກຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງ ທີ່ຈະຕ້ອງເປີດເຜີຍ ແລະ/ຫຼື ການດຳເນີນການຈັດກອງປະຊຸມຜູ້ຖືຮຸ້ນກູ້ ທີ່ປະເທດໄທ ລວມເຖິງແຕ່ບໍ່ຈຳກັດການຄັດເລືອກ, ແຕ່ງຕັ້ງ, ວ່າຈ້າງທີ່ປຶກສາການເງິນ, ທີ່ປຶກສາກົດໝາຍ ແລະ ພາກສ່ວນ ອື່ນໆທີ່ກ່ຽວຂ້ອງ ຕາມຄວາມເໝາະສົມຂອງໜ້າວຽກທີ່ຈຳເປັນ ແລະ ກ່ຽວຂ້ອງກັບການດຳເນີນການດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ.
3. ການໂອນຮຸ້ນຈະສາມາດດຳເນີນການໃຫ້ສຳເລັດໄດ້ ກໍ່ຕໍ່ເມື່ອໄດ້ຮັບການເຫັນດີຈາກຜູ້ຖືຮຸ້ນກູ້ ຕາມຂໍ້ກຳນົດ ແລະ ເງື່ອນໄຂທີ່ກ່ຽວຂ້ອງ.

ຄຳເຫັນຂອງສະພາບໍລິຫານ:

ຄະນະສະພາບໍລິຫານ ຜ-ຟຟລ ໄດ້ມີການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາເຫັນດີທາງດ້ານຫຼັກການ ເພື່ອນຳສະເໜີຜູ້ຖືຮຸ້ນ ຮັບຮອງການອະນຸມັດຂະບວນການໂອນຮຸ້ນຈຳນວນ 60% ຂອງ ຜ-ຟຟລ ທີ່ມີຢູ່ໃນ ບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໃຫ້ຜູ້ຊື້, ເຊິ່ງຂະບວນການໂອນຮຸ້ນຄັ້ງນີ້ ແມ່ນຕ້ອງຮັບປະກັນໃຫ້ສອດຄ່ອງຕາມກົດໝາຍ, ນິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງ, ພ້ອມທັງຕ້ອງໄດ້ຮັບການອະນຸມັດຈາກຜູ້ຖືຮຸ້ນກູ້ຂອງບໍລິສັດ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດ ໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຢ່າງໜ້ອຍ ແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ບັນທຶກກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມສາມັນຜູ້ຖືຮຸ້ນ

ເລກທີ 001 - /ຜ-ຟຟລ.ຜຖຮ
ນະຄອນຫຼວງວຽງຈັນ, ວັນທີ 11 MAY 2026

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ກອງປະຊຸມໄດ້ຈັດຂຶ້ນເມື່ອວັນທີ 29 ເມສາ 2026 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ປອ. ອາຄົມເດດ ວົງໄຊ, ຮອງປະທານສະພາບໍລິຫານ ບໍລິສັດ ເປັນປະທານກອງປະຊຸມ, ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ **22** ທ່ານ ແລະ ມອບສັນທະຈຳນວນ **10** ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ ທັງໝົດ **32** ທ່ານ ຖືຮຸ້ນລວມກັນທັງໝົດ **1,475,493,572** ຮຸ້ນ ເທົ່າກັບ **87.86** ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວ ທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳກຳມະການສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້ :

1. ທ່ານ ປອ.ອາຄົມເດດ ວົງໄຊ	ຕຳແໜ່ງ:	ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
2. ທ່ານ ວິເລດ ກົມນາວົງ	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຫົວໜ້າກົມຄຸ້ມຄອງໜີ້ສິນ ສາທາລະນະ, ກະຊວງການເງິນ;
3. ທ່ານ ສຸກສະຫວາດ ໂສສຸພັນ	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ຜ-ຟຟລ;
4. ທ່ານ ຊົນລະວິດ ວິນິດໄສ	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຕາງໜ້າ ບໍລິສັດ ຣາຊ໌ລາວ ບໍລິການ ຈຳກັດ;
5. ທ່ານ ສຈ.ປອ ພູເພັດ ກ້ຽວພິລາວົງ	ຕຳແໜ່ງ:	ກຳມະການສະພາບໍລິຫານອິດສະຫຼະ/ຮອງຜູ້ອຳນວຍການໃຫຍ່ ມະຫາວິທະຍາໄລແຫ່ງຊາດ;
6. ທ່ານ ພັນປານີ ສິດທິລາດ	ຕຳແໜ່ງ:	ກຳມະການສະພາບໍລິຫານອິດສະຫຼະ/ວ່າການແທນຫົວໜ້າສາຂາສະຫວັນນະເຂດ, ທະນາຄານແຫ່ງ ສປປ ລາວ; (ເຂົ້າຮ່ວມກອງປະຊຸມທາງອອນລາຍ)

ໂດຍກຳມະການສະພາບໍລິຫານ ອົງປະຊຸມມີທັງໝົດ **06** ທ່ານ, ຂາດປະຊຸມ **01** ທ່ານ (ທ່ານ ສຸລິວັດ ສຸວັນນະຈູມຄຳ , ປະທານສະພາບໍລິຫານ ເນື່ອງຈາກຕິດພາລະກິດທາງການອັນຈຳເປັນ ແລະ ຮີບດ່ວນ). ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຄະນະຜູ້ອຳນວຍການຝ່າຍຂອງບໍລິສັດ, ຜູ້ກວດສອບພາຍນອກ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ພ້ອມທັງບັນດາທ່ານຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນໄດ້ຈັດກອງປະຊຸມທັງແບບຊ້ອງໜ້າ ແລະ ແບບອອນລາຍ ເພື່ອໃຫ້ຜູ້ຖືຮຸ້ນ ສາມາດເຂົ້າຮ່ວມໄດ້ຕາມຄວາມສະດວກຂອງແຕ່ລະທ່ານ, ສະເພາະບັນດາທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບອອນລາຍ ແມ່ນໄດ້ປະຕິບັດຕາມຄູ່ມືທີ່ໄດ້ແຈກຢາຍໃຫ້ພ້ອມກັບບັດເຊີນປະຊຸມ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ສຸກສະຫວາດ ໂສສຸພັນ, ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ ຊຶ່ງລາຍລະອຽດມີດັ່ງນີ້ :

1. ການລົງຄະແນນສຽງ

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

ທ່ານປະທານໄດ້ກ່າວໄປແລ້ວໃນເບື້ອງຕົ້ນ ກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ຜ-ຟຟລ ໃນປີນີ້ ແມ່ນຈະມີການຈັດກອງປະຊຸມແບບຊ່ອງໜ້າ ແລະ ແບບອອນລາຍ. ຕໍ່ໄປຂໍແນະນຳວິທີການລົງຄະແນນໃນແຕ່ລະຮູບແບບການເຂົ້າປະຊຸມດັ່ງນີ້:

ທ່ານທີ່ເຂົ້າຮ່ວມກອງປະຊຸມແບບຊ່ອງໜ້າ : ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ. ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ແຕ່ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

ທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມແບບອອນລາຍ : ສາມາດລົງຄະແນນສຽງຜ່ານລະບົບປະຊຸມອອນລາຍ ໂດຍລາຍລະອຽດຂັ້ນຕອນ ແລະ ວິທີການຕ່າງໆ ແມ່ນທ່ານສາມາດເຂົ້າເບິ່ງໄດ້ໃນຄູ່ມືທີ່ໄດ້ຄັດຕິດໃນໜັງສືແຈ້ງເຊີນ ແລະ ໄດ້ເປີດເຜີຍໃຫ້ຊາບແລ້ວ ແລະ ບັນດາຄຳຖາມທີ່ບັນດາທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມແບບອອນລາຍທີ່ໄດ້ສົ່ງ ຕາມການແນະນຳທີ່ໄດ້ລະບຸໄວ້ລະອຽດໃນໜັງສືຮຽນເຊີນປະຊຸມຜູ້ຖືຮຸ້ນ ທີ່ໄດ້ເປີດເຜີຍໄປແລ້ວ ແລະ ບໍລິສັດຈະຕອບຄຳຖາມຂອງແຕ່ລະທ່ານໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນ.

ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ

ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ແມ່ນໄດ້ນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີມາຫັກລົບອອກ ຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບ

ຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມສາມັນຜູ້ຖືຮຸ້ນ ຂອງບໍລິສັດໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ຫຼັງຈາກນັ້ນ, ຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້ :

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024

ລາຍລະອຽດ :

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ໄດ້ຈັດຂຶ້ນໃນວັນທີ **25 ເມສາ 2025**, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024, ທີ່ໄດ້ຖືກຈັດຂຶ້ນ ວັນທີ **25 ເມສາ 2025**.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ໂດຍໄດ້ມີຜູ້ຖືຮຸ້ນ ຈຳນວນ 1 ທ່ານ ປະກອບຄຳເຫັນ, ລາຍລະອຽດດັ່ງນີ້:

- **ການປະກອບຄຳເຫັນ:**

- Mr. KRAIWAL KADAVANICH (ຖືຮຸ້ນຈຳນວນ: 100 ຮຸ້ນ) ໃຫ້ຄຳເຫັນ ຕໍ່ກັບ ການຮ່າງບົດບັນທຶກກອງປະຊຸມ ໂດຍສະເພາະ ສະບັບພາສາອັງກິດ ແມ່ນ ຢາກໃຫ້ເອົາໃຈໃສ່ ກ່ຽວກັບ ຮູບແບບ ແລະ ວິທີການໃນການຂຽນ ເພື່ອໃຫ້ສອດຄ່ອງກັບ ສະບັບພາສາລາວ ເພີ່ມເຕີມ. ເພື່ອບໍ່ໃຫ້ຜູ້ຖືຮຸ້ນ ເກີດຄວາມເຂົ້າໃຈຜິດ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ : ກອງປະຊຸມມີມະຕິເຫັນດີ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024, ທີ່ໄດ້ຈັດຂຶ້ນເມື່ອວັນທີ 25 ເມສາ 2025. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍ ກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 2. ພິຈາລະນາຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ລວມທັງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025.

ລາຍລະອຽດ :

ການດຳເນີນທຸລະກິດຂອງ ຜ-ຟຟລ ໃນປີ 2025 ແມ່ນໄດ້ຜະລິດກະແສໄຟຟ້າຂາຍຍົກໃຫ້ລັດວິສາຫະກິດໄຟຟ້າລາວ (ຟຟລ) ຕາມສັນຍາຊື້-ຂາຍໄຟຟ້າ (PPA) ແລະ ດຳເນີນການຕາມກົດໝາຍ ແລະ ກົດລະບຽບຕ່າງໆ ຂອງບໍລິສັດ ມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຜ-ຟຟລ ມີທຶນຈົດທະບຽນ ຈຳນວນ 6,717.21 ຕື້ກີບ ແລະ ມີຮຸ້ນສາມັນເທົ່າກັບ 1,679,303,697 ຮຸ້ນ (ໜຶ່ງພັນ ຫົກຮ້ອຍເຈັດສິບເກົ້າລ້ານ ສາມແສນ ສາມພັນຫົກຮ້ອຍເກົ້າສິບເຈັດຮຸ້ນ). ຜົນການດຳເນີນທຸລະກິດໃນປີ 2025 ສາມາດສັງລວມໄດ້ດັ່ງນີ້:

1. **ກຳລັງຕິດຕັ້ງ, ການຈັດຕັ້ງ ແລະ ຈຳນວນພົນ**

ໃນທ້າຍປີ 2025 ຜ-ຟຟລ ມີເຂື່ອນພະລັງງານນ້ຳຢູ່ໃນການຄຸ້ມຄອງທັງໝົດ 10 ເຂື່ອນ ລວມກຳລັງຕິດຕັ້ງ 637.00 MW (ກວມ 38.45%). ເຂົ້າຖືຮຸ້ນໃນເຂື່ອນໄຟຟ້າຂອງຜູ້ຜະລິດໄຟຟ້າເອກະລາດທັງໝົດ 16 ເຂື່ອນ ລວມກຳລັງຕິດຕັ້ງ ຕາມສັດສ່ວນຖືຮຸ້ນ 1,019.72 MW (ກວມ 61.55%) ລວມກຳລັງຕິດຕັ້ງທັງໝົດ 1,656.72 MW.

ຄະນະ ຜູ້ອຳນວຍການໃຫຍ່ທັງໝົດ 5 ທ່ານ ແລະ ມີ 10 ຝ່າຍ, ດ້ານຈຳນວນພະນັກງານ ມີຈຳນວນທັງໝົດ 819 ຄົນ, ຍິງ 160 ຄົນ, ເພີ່ມຂຶ້ນ 21 ຄົນ ເມື່ອທຽບໃສ່ ທ້າຍປີ 2024.

2. **ການຜະລິດພະລັງງານໄຟຟ້າທຽບກັບແຜນການ**

ໃນປີ 2025 ແຜນການຜະລິດທົ່ວ ຜ-ຟຟລ ແມ່ນເທົ່າກັບ 6,756.19 GWh, ປະຕິບັດຕົວຈິງໄດ້ 8,038.45 GWh ຫຼື ເທົ່າກັບ 118.98% ຂອງແຜນການ. ສຳລັບການຜະລິດຂອງເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ 100% ແມ່ນສາມາດປະຕິບັດ ໄດ້ 3,036.90 GWh ລື່ນແຜນການ 18.20%.

3. **ຜົນການດຳເນີນທຸລະກິດທາງດ້ານການເງິນ ແລະ ໜີ້ຕ້ອງຮັບ ປະຈຳປີ 2025**

1) ດ້ານລາຍຮັບ-ລາຍຈ່າຍ ປະຈຳປີ 2025:

- ພາກລາຍຮັບລວມ: ໃນປີ 2025 ຜ-ຟຟລ ມີແຜນລາຍຮັບເທົ່າກັບ 3,873 ຕື້ກີບ, ປະຕິບັດຕົວຈິງໄດ້ 6,842 ຕື້ ກີບ ເທົ່າກັບ 176.66% ຂອງແຜນການ.
- ພາກລາຍຈ່າຍລວມ: ໃນປີ 2025 ຜ-ຟຟລ ມີແຜນລາຍຈ່າຍເທົ່າກັບ 4,756 ຕື້ກີບ, ປະຕິບັດຕົວຈິງໄດ້ 5,018 ຕື້ກີບ ເທົ່າກັບ 105.51% ຂອງແຜນການ.
- ກຳໄລ/(ຂາດທຶນ): ຜ-ຟຟລ ມີກຳໄລຈາກຜົນການດຳເນີນທຸລະກິດ ເທົ່າກັບ 1,824 ຕື້ກີບ.

2) ໜີ້ຕ້ອງຮັບ ຈາກ ຟຟລ ແລະ ອື່ນໆ 2025:

ນັບຕັ້ງແຕ່ ເດືອນ 1-12 ປີ 2025 ເຫັນວ່າ ການຈ່າຍເງິນຄ່າກະແສໄຟຟ້າຂອງ ຟຟລ ແມ່ນໄດ້ຮັບການຊຳລະ ຕົວຈິງຈຳນວນທັງໝົດ 1,448 ຕື້ກີບ (ເປັນເງິນສົດ 697 ຕື້ກີບ ແລະ 21.8 ລ້ານໂດລາ ສຫລ, ສ່ວນທີ່ເຫຼືອແມ່ນ ຫັກລົບທາງບັນຊີລະຫວ່າງກັນ) ຫຼື ເທົ່າກັບ 52.3% ຂອງຍອດໜີ້ຄ້າງທັງໝົດ. ສະນັ້ນ, ຈຶ່ງເຮັດໃຫ້ມີຍອດຄ້າງໜີ້ ຕ້ອງຮັບ ທັງໝົດ ປະມານ 60.1 ລ້ານໂດລາ ສະຫະລັດ (ລວມໜີ້ຄ້າງບໍລິສັດ ເທີນ-ຫີນບຸນ ພາວເວີ ຈຳກັດ).

4. **ດ້ານອັດຕາສ່ວນທາງການເງິນ:**

ອັດຕາສ່ວນໜີ້ສິນທາງການເງິນ ເປັນຕົ້ນແມ່ນ ອັດຕາສ່ວນ ໜີ້ສິນສຸດທິຕໍ່ທຶນ (Net Debt IBD/E) ໃນປີ 2025 (31 ທັນວາ 2025) ຫຼຸດລົງມາເປັນ 0.64 ເທົ່າ ຈາກ 1.71 ເທົ່າ ໃນປີ 2024. ສາເຫດຫຼັກແມ່ນມາຈາກ ມີການບັນທຶກ ສ່ວນເກີນຈາກການຕີມູນຄ່າຊັບສິນຄືນໃໝ່ ເຮັດໃຫ້ຕົວເລກຂອງສ່ວນຂອງຜູ້ຖືຮຸ້ນມີການເພີ່ມຂຶ້ນ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ບົດລາຍງານ ຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງລາຍງານການເງິນຂອງບໍລິສັດ ປະຈຳປີ 2025.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ໃຫ້ ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ລວມທັງລາຍງານການເງິນຂອງບໍລິສັດ ປະຈຳປີ 2025, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ : **ກອງປະຊຸມໄດ້ ເຫັນດີ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງລາຍງານການເງິນ ຂອງບໍລິສັດ ປີ 2025, ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າ ຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງ ປະຊຸມ.**

ວາລະທີ 3. ພິຈາລະນາຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2026

<u>ລາຍລະອຽດ</u> :

ຜ-ຟຟລ ມີເຂື່ອນໄຟຟ້າພະລັງງານນ້ຳຄຸ້ມຄອງ (HPP) ທັງໝົດ 12 ເຂື່ອນ (ໃນປີ 2025 ມີທັງໝົດ 10 ເຂື່ອນ + ແຜນປີ 2026 ຈຳນວນ 02 ເຂື່ອນ: ເຂື່ອນໄຟຟ້ານ້ຳຄານ 3 ແລະ ເຊເສັດ 3) ແລະ ໄດ້ເຂົ້າຖືຮຸ້ນໃນໂຄງການຜູ້ຜະລິດໄຟຟ້າເອກະລາດ (IPPs) ທັງໝົດ 16 ເຂື່ອນ ລວມກຳລັງຕິດຕັ້ງທັງໝົດ ເທົ່າກັບ 1,688.72 MW ຫຼຸດລົງ 16.50% ເມື່ອທຽບປີຜ່ານມາ ເນື່ອງຈາກຈະມີແຜນການໂອນຊັບສິນ ເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ ຈັກເບີ 6,7,8, ເຂື່ອນໄຟຟ້າ ນ້ຳຈຽນ, ເຂື່ອນໄຟຟ້າຫ້ວຍລຳພັນ ຕອນລຸ່ມ ຄືນໃຫ້ ຟຟລ ແລະ ໄດ້ມີການໂອນຊັບສິນ ເຂື່ອນໄຟຟ້ານ້ຳເທີນ 1. ຈຳນວນບຸກຄະລາກອນ ຄາດວ່າຈະມີທັງໝົດ 898 ທ່ານ (ບໍ່ລວມພະນັກງານສັນຍາຈ້າງ), ເພີ່ມຂຶ້ນ 64 ທ່ານ ເມື່ອທຽບກັບປີຜ່ານມາ.

1. ໃບລາຍງານ ຜົນການດຳເນີນງານ

- **ແຜນລາຍຮັບລວມ:** ໃນປີ 2026 ຜ-ຟຟລ ມີແຜນລາຍຮັບເທົ່າກັບ 4,807 ຕື້ກີບ, ເພີ່ມຂຶ້ນ 24.10% ເມື່ອທຽບກັບແຜນປີຜ່ານມາ.
- **ແຜນລາຍຈ່າຍລວມ:** ໃນປີ 2026 ຜ-ຟຟລ ມີແຜນລາຍຈ່າຍເທົ່າກັບ 4,679 ຕື້ກີບ, ຫຼຸດລົງ 1.63% ເມື່ອທຽບກັບປີຜ່ານມາ.

<u>ສະຫຼຸບ:</u> ອີງຕາມສົມມຸດຕິຖານດ້ານລາຍຮັບ ແລະ ລາຍຈ່າຍທັງໝົດຂ້າງເທິງນີ້, ຄາດວ່າປີ 2026 ຜ-ຟຟລ ຈະມີກຳໄລສຸດທິ ປະມານ 128 ຕື້ກີບ.

2. ດ້ານການຄາດຄະເນ ກະແສເງິນສົດ

- ກະແສເງິນສົດ ຈາກກິດຈະກຳການດຳເນີນງານ (Operating Activities) ແມ່ນ ຄາດວ່າຈະເຫຼືອ ປະມານ 1,151 ຕື້ກີບ ເພີ່ມຂຶ້ນ 54.05% ທຽບປີຜ່ານມາ.
- ກະແສເງິນສົດ ຈາກກິດຈະກຳການລົງທຶນ (Investing Activities) ແມ່ນ ຄາດວ່າຈະເຫຼືອຢູ່ ປະມານ 941 ຕື້ກີບ ຫຼຸດ 21.8% ທຽບປີຜ່ານມາ.
- ກະແສເງິນສົດ ຈາກກິດຈະກຳທາງການເງິນ (Financing Activities) ແມ່ນຄາດວ່າ ຈະຕິດລົບ (7,280) ຕື້ກີບ ຫຼຸດລົງ 7.29% ທຽບປີ ຜ່ານມາ.

<u>ສະຫຼຸບ:</u> ການຄາດຄະເນ ກະແສເງິນສົດທ້າຍປີ ບວກ ກັບ ກະແສເງິນສົດຕົ້ນປີ 2026 (ປະມານ 414 ຕື້ກີບ) ຈະເຮັດໃຫ້ຕິດລົບ ປະມານ (4,773) ຕື້ກີບ ຫຼຸດ ລົງ ປະມານ 16.4%

3. ແຜນການແກ້ໄຂສະພາບຄ່ອງ ແລະ ໜີ້ຕ້ອງຮັບ

ການຄາດຄະເນກະແສເງິນສົດທ້າຍປີ 2026 ເຫັນວ່າ ຜ-ຟຟລ ຈະຂາດສະພາບຄ່ອງ ປະມານ 4,773 ຕື້ກີບ, ເພື່ອຮັກສາກະແສເງິນສົດທ້າຍປີ 2026 ໃຫ້ຢູ່ລະດັບປະມານ **155 ຕື້ກີບ.** ຈຶ່ງໄດ້ມີການສ້າງແຜນການແກ້ໄຂສະພາບຄ່ອງ ເຊິ່ງປະກອບດ້ວຍ: ລັດວິສາຫະກິດໄຟຟ້າລາວ ຊ່ວຍຊຳລະໜີ້ຄ່າກະແສໄຟຟ້າຄ້າງທັງໝົດ ປີ 2025; ລັດວິສາຫະກິດໄຟຟ້າລາວ ຊ່ວຍຊຳລະເງິນຈາກການໂອນຊັບສິນຄືນສ່ວນໜຶ່ງ, ການຂາຍໂຄງການນ້ຳບີ 1, 2, 3 , ຂາຍໂຄງການຫ້ວຍລຳພັນ ຕອນລຸ່ມ, ການລະດົມທຶນຜ່ານການຖືຮຸ້ນ ເຂື່ອນໄຟຟ້ານ້ຳງື່ມ 2 ລວມທັງການຈັດອັນດັບຄວາມໜ້າເຊື່ອຖືສາກົນ (International rating) ເພື່ອໄປລະດົມທຶນຢູ່ຕ່າງປະເທດ (Offshore market).

ນອກຈາກນີ້, ຜ-ຟຟລ ສາມາດຫາທາງເລືອກອື່ນເສີມ ໃນແຜນການແກ້ໄຂດັ່ງກ່າວອີກໄດ້ເຊັ່ນ: ໜີ້ຕ້ອງຮັບຈາກການຂາຍກະແສໄຟຟ້າ ທີ່ຍັງຄ້າງ, ໜີ້ຕ້ອງຮັບເງິນປັນຜົນຂອງບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ, ການຂໍເງິນສະໜັບສະໜູນຈາກ ກະຊວງການເງິນ, ການກູ້ຢືມທະຄານພາຍໃນ-ຕ່າງປະເທດ, ການຂາຍໂຄງການອື່ນໆ ທີ່ບໍ່ມີປະສິດທິພາບ, ການສະລໍການຊຳລະໜີ້ຄ້າງຈ່າຍຜູ້ສະໜອງ, ການເລື່ອນການຊຳລະລົງທຶນໃໝ່ຕ່າງໆ ລວມເຖິງ ການຄວບຄຸມແຜນລາຍຈ່າຍຕ່າງໆທີ່ໄດ້ຮັບອະນຸມັດ ຫຼື ວຽກສຸກເສີນທີ່ຢູ່ນອກແຜນ ເພື່ອໄປປັບປຸງແຜນໃນ 6 ເດືອນທ້າຍປີ 2026.

ສຳລັບການຄາດຄະເນ ໜີ້ຄ່າກະແສໄຟໃນທ້າຍປີ 2026 ແມ່ນປະມານ 2,773 ຕື້ກີບ (ຍັງບໍ່ໄດ້ລວມໂຄງການໃໝ່ໃນທ້າຍປີ 2025). ນອກຈາກນີ້ ຍັງມີໜີ້ຕ້ອງຮັບອື່ນໆ (ບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ) ຮອດໄຕມາດ 3/2025 ປະມານ 3.05 ລ້ານໂດລາ ສຫລ ທຽບເທົ່າ 67 ຕື້ກີບ.

4. ການພັດທະນາຊັບພະຍາກອນມະນຸດ

ເພື່ອສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການດຳເນີນທຸລະກິດໃນອະນາຄົດ, ບໍລິສັດ ໄດ້ເອົາໃຈໃສ່ວາງແຜນໄລຍະສັ້ນ (1 ປີ) ເພື່ອຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແກ່ພະນັກງານກຳມະກອນຢ່າງເປັນລະບົບ , ຜ-ຟຟລ ມີແຜນຝຶກອົບຮົມໃຫ້ພະນັກງານທັງໝົດ 3 ຮູບແບບຄື: in-house Training, ການຝຶກອົບຮົມຮ່ວມກັບສະຖາບັນການສຶກສາ ທັງພາຍໃນ ແລະ ຕ່າງປະເທດ, ການຝຶກອົບຮົມຜ່ານໂຄງການຮ່ວມມືລະຫວ່າງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ແລະ ມະຫາວິທະຍາໄລຊຽງໃໝ່.

5. ວຽກງານສິ່ງແວດລ້ອມ ແລະ ສັງຄົມ

ຜ-ຟຟລ ໄດ້ປະກອບພັນທະໃນການຄຸ້ມຄອງສິ່ງແວດລ້ອມ ແລະ ພັດທະນາຊຸມຊົນ ປະກອບດ້ວຍສອງພາກສ່ວນຫຼັກ ດັ່ງນີ້:

- ການປະຕິບັດພັນທະຕາມສັນຍາສຳປະທານລວມມີ: ວຽກງານຄຸ້ມຄອງອ່າງໂຕ່ງ, ວຽກງານຄຸ້ມຄອງສິ່ງແວດລ້ອມ ອ້ອມຂ້າງເຂື່ອນ ແລະ ວຽກງານຄຸ້ມຄອງຄຸນນະພາບນ້ຳ.
- ສິ່ງເສີມການມີສ່ວນຮ່ວມ ຂອງຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2026.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2026, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ : **ກອງປະຊຸມ ເຫັນດີ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປີ 2026, ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາຮັບຮອງ ການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2025.

ລາຍລະອຽດ :

ອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ, ເຊິ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ. ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ວັນທີ **30 ເມສາ 2026** ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນອັດຕາ **50 ກີບ ຕໍ່ຮຸ້ນ**, ລວມເປັນເງິນປັນຜົນຈ່າຍທັງໝົດ **83.97 ຕື້ກີບ** (ມີການປັບປຸງຕົວເລກຄືນ ເນື່ອງຈາກເບື້ອງຕົ້ນໄດ້ຄິດໄລ່ເປັນຕົວເລກລວມ ແລະ ເປັນການຄຳນວນເອົາອັດຕາປັນຜົນຕໍ່ຮຸ້ນມາເປັນຕົວຄູນຈຳນວນຮຸ້ນທັງໝົດແທນ) ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **29 ພຶດສະພາ 2026**.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2025, ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ແລະ ວັນທີຈ່າຍເງິນປັນຜົນດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດໂອ

ກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2025, ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ແລະ ວັນທີຈ່າຍເງິນປັນຜົນ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ : **ກອງປະຊຸມ ເຫັນດີ ຮັບຮອງ ການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2025 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ວັນທີ 30 ເມສາ 2026 ໃນອັດຕາ 50 ກີບ ຕໍ່ຮຸ້ນ, ລວມເປັນເງິນ ປັນຜົນຈ່າຍທັງໝົດ 83.97 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ 29 ພຶດສະພາ 2026, ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :**

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5. ພິຈາລະນາຮັບຮອງ ການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນຕົ້ນປີ 2025.

ລາຍລະອຽດ :

ຜົນການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2025 ເຫັນວ່າບໍລິສັດມີກຳໄລຈາກຜົນການດຳເນີນທຸລະກິດ ເປັນຈຳນວນ 534 ຕື້ກີບ ອີງຕາມເອກະສານລາຍງານການເງິນແບບລວມ, ເຊິ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ ຂອງບໍລິສັດ. ແຕ່ເນື່ອງຈາກຍັງມີພັນທະໃນການຊຳລະຮຸ້ນກູ້ ແລະ ເງິນກູ້ ທີ່ຈະຄົບກຳນົດໃນໄຕມາດ 03 ແລະ ໄຕມາດ 04 ປີ 2025, ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນຕົ້ນປີ 2025 ແລະ ພິຈາລະນາຮັບຮອງ ການຈ່າຍເງິນປັນຜົນ ປີລະຄັ້ງ (ຖ້າກໍລະນີ ບໍລິສັດ ມີຜົນກຳໄລຈາກການດຳເນີນທຸລະກິດ).

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນຕົ້ນປີ 2025 ແລະ ຮັບຮອງ ການອະນຸມັດຈ່າຍເງິນປັນຜົນຈາກ 2 ຄັ້ງ/ປີ ເປັນ 1 ຄັ້ງ/ປີ (ຖ້າກໍລະນີ ບໍລິສັດ ມີຜົນກຳໄລຈາກການດຳເນີນທຸລະກິດ).

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 06 ເດືອນຕົ້ນປີ 2025 ແລະ ຮັບຮອງ ການອະນຸມັດຈ່າຍເງິນປັນຜົນຈາກ 2 ຄັ້ງ/ປີ ເປັນ 1 ຄັ້ງ/ປີ (ຖ້າກໍລະນີ ບໍລິສັດ ມີຜົນກຳໄລຈາກການດຳເນີນທຸລະກິດ), ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ : **ກອງປະຊຸມ ເຫັນດີ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 06 ເດືອນຕົ້ນປີ 2025 ແລະ ຮັບຮອງ ການອະນຸມັດຈ່າຍເງິນປັນຜົນຈາກ 2 ຄັ້ງ/ປີ ເປັນ 1 ຄັ້ງ/ປີ (ຖ້າກໍລະນີ ບໍລິສັດ ມີຜົນກຳໄລຈາກການດຳເນີນທຸລະກິດ), ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :**

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 6. ພິຈາລະນາຮັບຮອງ ການແຕ່ງຕັ້ງກຳມະການສະພາບໍລິຫານ 01 ທ່ານທີ່ຈະຄົບອາຍຸການ.

ລາຍລະອຽດ :

ອີງຕາມບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023, ຄັ້ງວັນທີ 26/04/2024 ວາລະທີ 8 ໄດ້ລະບຸໄວ້ວ່າ ອາຍຸການຂອງສະມາຊິກສະພາບໍລິຫານ ຂອງບໍລິສັດທັງໝົດມີກຳນົດ 02 ປີ ໂດຍເລີ່ມແຕ່ວັນຈັດກອງປະຊຸມ ຜູ້ຖືຮຸ້ນ ປະຈຳປີ 2023 ເປັນຕົ້ນມາ, ເຊິ່ງມາຮອດປັດຈຸບັນ ເຫັນວ່າອາຍຸການຂອງກຳມະການສະພາບໍລິຫານ 01 ທ່ານໄດ້ປະຕິບັດວຽກງານຄົບວາລະແລ້ວ. ສະເໜີກອງປະຊຸມພິຈາລະນາຮັບຮອງ ການແຕ່ງຕັ້ງກຳມະການສະພາບໍລິຫານ ເພື່ອສືບຕໍ່ປະຕິບັດວຽກງານອີກໜຶ່ງສະໄໝ, ໂດຍມີລາຍຊື່ດັ່ງນີ້:

- **ທ່ານ ຊົນລະວິດ ວິນິດໄສ , ກຳມະການສະພາບໍລິຫານ,** ຕາງໜ້າຈາກບໍລິສັດຮາຊ-ລາວ ຈຳກັດ ສືບຕໍ່ດຳລົງວາລະອີກ 1 ສະໄໝ;
- ກຳນົດອາຍຸການຂອງກຳມະການສະພາບໍລິຫານ 2 ປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເປັນຕົ້ນໄປ, ເຊິ່ງຊີວະປະຫວັດຫຍໍ້ຂອງກຳມະການສະພາບໍລິຫານ ໄດ້ມີລາຍລະອຽດໃນ **ເອກະສານຄັດຕິດ 4** ທີ່ໄດ້ຄັດຕິດຢູ່ໃນບັດເຊີນ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງກຳມະການສະພາບໍລິຫານ 01 ທ່ານທີ່ຈະຄົບອາຍຸການ (ທ່ານ ຊົນລະວິດ ວິນິດໄສ), ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ : **ກອງປະຊຸມ ເຫັນດີ ຮັບຮອງ ການແຕ່ງຕັ້ງກຳມະການສະພາບໍລິຫານ 01 ທ່ານທີ່ຈະຄົບອາຍຸການ (ທ່ານ ຊົນລະວິດ ວິນິດໄສ) ເພື່ອສືບຕໍ່ດຳລົງວາລະອີກ 01 ສະໄໝ (02 ປີ) ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເປັນຕົ້ນໄປ, ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :**

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 7. ພິຈາລະນາຮັບຮອງ ຄ່າຕອບແທນຂອງສະມາຊິກສະພາບໍລິຫານ.

ລາຍລະອຽດ :

ເນື່ອງຈາກສະມາຊິກສະພາບໍລິຫານ ຂອງ ຜ-ຟຟລ ບໍ່ມີນະໂຍບາຍເບີກຈ່າຍຄ່າຕອບແທນເປັນລາຍເດືອນ ແຕ່ຈະໄດ້ຮັບຄ່າຕອບແທນເປັນເບ້ຍປະຊຸມສະພາບໍລິຫານ. ອີງໃສ່ນະໂຍບາຍປະຢັດໃນປັດຈຸບັນ ກໍຄືການເພີ່ມລາຍຮັບ ຫຼຸດຜ່ອນລາຍຈ່າຍ, ບໍລິສັດຈຶ່ງໄດ້ມີການຄົ້ນຄວ້າປັບຫຼຸດອັດຕາເບ້ຍປະຊຸມລົງ ຂອງສະມາຊິກສະພາບໍລິຫານ ແລະ ປັບປຸງເບ້ຍປະຊຸມຂອງຄະນະຜູ້ອຳນວຍການໃຫຍ່, ຜູ້ເຂົ້າຮ່ວມກອງປະຊຸມ, ກອງເລຂາສະພາບໍລິຫານ ແລະ ຜູ້ສັງເກດການ, ເຊິ່ງມີລາຍລະອຽດດັ່ງນີ້:

- ປະທານສະພາບໍລິຫານ ຈາກ ເທົ່າກັບ 100% ຂອງເງິນເດືອນ ຂອງຜູ້ອຳນວຍການໃຫຍ່ກ່ອນຫັກອາກອນຄູນ ໜຶ່ງຈຸດຫ້າ ມາເປັນ **ເທົ່າກັບ ອັດຕາສ່ວນຄູນ 67% ຂອງເງິນເດືອນຜູ້ອຳນວຍການໃຫຍ່ກ່ອນຫັກອາກອນຄູນໃຫ້ 1.5 ເດືອນ;**
- ຮອງປະທານສະພາບໍລິຫານ ຈາກ ເທົ່າກັບ 75% ຂອງເງິນເດືອນ ຂອງຜູ້ອຳນວຍການໃຫຍ່ກ່ອນຫັກອາກອນຄູນໜຶ່ງຈຸດຫ້າ ມາເປັນ **ເທົ່າກັບ ອັດຕາສ່ວນຄູນ 75% ຂອງເບ້ຍປະຊຸມປະທານສະພາບໍລິຫານ;**
- ກຳມະການສະພາບໍລິຫານ ຈາກ ເທົ່າກັບ 50% ຂອງເງິນເດືອນ ຂອງຜູ້ອຳນວຍການໃຫຍ່ກ່ອນຫັກອາກອນຄູນໜຶ່ງຈຸດຫ້າ ມາເປັນ **ເທົ່າກັບ ອັດຕາສ່ວນຄູນ 50% ຂອງເບ້ຍປະຊຸມປະທານສະພາບໍລິຫານ;**

- ຄະນະຜູ້ອຳນວຍການໃຫຍ່ ຈາກ ເທົ່າກັບ 80% ຂອງເງິນເບ້ຍປະຊຸມຂອງກຳມະການສະພາບໍລິຫານ ມາເປັນ **ເທົ່າກັບ ອັດຕາສ່ວນຄຸນ 96% ຂອງເບ້ຍປະຊຸມກຳມະການສະພາບໍລິຫານ**;
- ເງິນເບ້ຍປະຊຸມ ຂອງຄະນະຝ່າຍ (ຜູ້ເຂົ້າຮ່ວມກອງປະຊຸມ), ກອງເລຂາ ຈາກເທົ່າກັບ 75% ຂອງເງິນເບ້ຍປະຊຸມກຳມະການສະພາບໍລິຫານ ມາເປັນ **ເທົ່າກັບ ອັດຕາສ່ວນຄຸນ 90% ຂອງເບ້ຍປະຊຸມກຳມະການສະພາບໍລິຫານ**;
- ເງິນເບ້ຍປະຊຸມ ຂອງຜູ້ສັງເກດການທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ ແມ່ນຄິດໄລ່ອັດຕາເດີມ ເທົ່າກັບ 30% ຂອງເງິນເບ້ຍປະຊຸມກອງເລຂາສະພາບໍລິຫານ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ການປັບຫຼຸດຄ່າຕອບແທນຂອງສະມາຊິກສະພາບໍລິຫານ ແລະ ການປັບປຸງເບ້ຍປະຊຸມຂອງ ຄະນະຜູ້ອຳນວຍການໃຫຍ່, ຜູ້ເຂົ້າຮ່ວມກອງປະຊຸມ, ກອງເລຂາສະພາບໍລິຫານ ແລະ ຜູ້ສັງເກດການ. ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ : **ກອງປະຊຸມໄດ້ ເຫັນດີ ຮັບຮອງ ການປັບຫຼຸດຄ່າຕອບແທນຂອງສະມາຊິກສະພາບໍລິຫານ ແລະ ການປັບປຸງເບ້ຍປະຊຸມຂອງ ຄະນະຜູ້ອຳນວຍການໃຫຍ່, ຜູ້ເຂົ້າຮ່ວມກອງປະຊຸມ, ກອງເລຂາສະພາບໍລິຫານ ແລະ ຜູ້ສັງເກດການ, ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :**

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 8. ພິຈາລະນາຮັບຮອງ ການດັດແກ້ກົດລະບຽບບໍລິສັດ (ສະບັບປັບປຸງຄັ້ງທີ 16).

ລາຍລະອຽດ :

ການປັບປຸງກົດລະບຽບຄັ້ງນີ້ ແມ່ນອີງຕາມວຽກງານປະຕິຮູບລັດວິສາຫະກິດຂະແໜງພະລັງງານ ແລະ ບໍ່ແຮ່ ປະຈຳປີ ຜ-ຟຟລ, ເພື່ອເປັນການປັບປຸງໃຫ້ສອດຄ່ອງຕາມຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານພາຍໃນ ສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ລະບຽບກົດໝາຍຂອງ ສປປ ລາວ ທີ່ກ່ຽວຂ້ອງ. ດັ່ງນັ້ນ, ຜ-ຟຟລ ຈຶ່ງໄດ້ປັບປຸງກົດລະບຽບຂອງບໍລິສັດ ເພື່ອໃຫ້ມີເນື້ອໃນ ແລະ ຫຼັກການຄົບຖ້ວນສົມບູນຍິ່ງຂຶ້ນ, ເຊິ່ງໄດ້ມີການປັບປຸງກົດລະບຽບບໍລິສັດ ຈາກ 9 ໝວດ ແລະ 28 ມາດຕາ ມາເປັນທັງໝົດ 14 ໝວດ ແລະ 71 ມາດຕາ ມີໝວດສ້າງໃໝ່ ທັງໝົດ 5 ໝວດ, ມາດຕາໃໝ່ ມີທັງໝົດ 47 ມາດຕາ ແລະ ມາດຕາປັບປຸງ ມີທັງໝົດ 9 ມາດຕາ (ເຊິ່ງລາຍລະອຽດຕາມຮ່າງກົດລະບຽບໃນເອກະສານຄັດຕິດ 5 ຂອງໜັງສືແຈ້ງເຊີນຜູ້ຖືຮຸ້ນ) ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນແຕ່ລະມາດຕາທີ່ໄດ້ມີການປັບປຸງ ແລະ ເພີ່ມໃໝ່ທັງໝົດຕາມທີ່ໄດ້ລາຍງານຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອ ໃນກົດລະບຽບຂອງບໍລິສັດ ຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 8 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ໂດຍ ມີຜູ້ຖືຮຸ້ນ ຈຳນວນ 01 ທ່ານ ປະກອບຄຳເຫັນ ລາຍລະອຽດດັ່ງນີ້:

ການປະກອບຄຳເຫັນ:

- Mr. KRAIWAL KADAVANICH (ຖືຮຸ້ນຈຳນວນ: 100 ຮຸ້ນ) ປະກອບຄຳເຫັນດັ່ງລາຍລະອຽດລຸ່ມນີ້:
  - ໃຫ້ ຜ-ຟຟລ ສ້າງຕາຕະລາງປຽບທຽບ ເນື້ອໃນ ລະຫວ່າງ ກົດລະບຽບບໍລິສັດ (ສະບັບເກົ່າ) ແລະ ຮ່າງກົດລະ

ບຽບບໍລິສັດ (ສະບັບປັບປຸງ ຄັ້ງທີ 16) ເພື່ອໃຫ້ເຫັນຄວາມແຕກຕ່າງ, ມາດຕາ ທີ່ດັດແກ້ ຫຼື ມາດຕາ ທີ່ສ້າງໃໝ່ ເພື່ອສ້າງຄວາມເຂົ້າໃຈໃຫ້ຜູ້ຖືຮຸ້ນ ເພີ່ມເຕີມ.

- ສະເໜີ ໃຫ້ ຜ-ฟฟล ภอดภา ເນື້ອໃນ ຮ່າງກົດລະບຽບບໍລິສັດ (ສະບັບປັບປຸງ ຄັ້ງທີ 16) ສະບັບພາສາລາວ ແລະ ພາສາອັງກິດ ຄືນໃໝ່ ເນື່ອງຈາກ ເນື້ອໃນ ສະບັບພາສາອັງກິດ ແມ່ນ ມີຂໍ້ແຕກຕ່າງຈາກ ສະບັບພາສາລາວ ໃນການໃຊ້ຄຳສັບຕ່າງໆ.

- ປະທານກອງປະຊຸມ ໄດ້ໃຫ້ຄຳເຫັນ ຕໍ່ກັບ ຂໍ້ຊັກຖາມຕ່າງໆ ແລະ ໄດ້ຊີ້ນຳໃຫ້ ກອງເລຂາ ແລະ ພາກສ່ວນທີ່ຮັບຜິດຊອບ ດຳເນີນການເຮັດເອກະສານລາຍງານ ເພື່ອປຽບທຽບໃຫ້ເຫັນ ເຖິງ ຂໍ້ແຕກຕ່າງ ລະຫວ່າງ ກົດລະບຽບບໍລິສັດ (ສະບັບເກົ່າ) ແລະ ຮ່າງກົດລະບຽບບໍລິສັດ (ສະບັບປັບປຸງ ຄັ້ງທີ 16) ແລະ ໃຫ້ນຳສົ່ງ ໃຫ້ຜູ້ຖືຮຸ້ນ ຮັບຊາບ ເພີ່ມເຕີມ ຜ່ານການລາຍງານລົງໃນລະບົບເປີດເຜີຍຂໍ້ມູນຂອງບໍລິສັດ ແລະ ຕະຫຼາດຫຼັກຊັບລາວ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ການດັດແກ້ກົດລະບຽບບໍລິສັດ (ສະບັບປັບປຸງ ຄັ້ງທີ 16) ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ມະຕິ : **ກອງປະຊຸມ ເຫັນດີ ຮັບຮອງ ການດັດແກ້ກົດລະບຽບບໍລິສັດ (ສະບັບປັບປຸງ ຄັ້ງທີ 16), ທັງໝົດ 14 ໝວດ ແລະ 71 ມາດຕາ, ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ແລະ ມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :**

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 87.863415 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ວາລະທີ 9. ພິຈາລະນາ ແລະ ອະນຸມັດ ການລະດົມທຶນຜ່ານການອອກຮຸ້ນກູ້ທີ່ຕະຫຼາດຕ່າງປະເທດ.

<u>ລາຍລະອຽດ</u> :

ເພື່ອໃຫ້ບໍລິສັດ ສາມາດຊອກຫາແຫຼ່ງທຶນ ໂດຍຜ່ານການລະດົມທຶນຜ່ານການອອກຈຳໜ່າຍຮຸ້ນກູ້ ທີ່ຕະຫຼາດຕ່າງປະເທດ (Offshore Market) ເພື່ອມາຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດໃນປີ 2026-2027 (ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້) ແລະ/ຫຼື ເພື່ອມາລົງທຶນໃນການຂະຫຍາຍທຸລະກິດໃຫ້ນັບມື້ນັບເຕີບໃຫຍ່ ຕະຫຼອດເຖິງຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝຸນວຽນຂອງບໍລິສັດ, ດັ່ງນັ້ນ ບໍລິສັດເຫັນສົມຄວນສະເໜີ ກອງປະຊຸມພິຈາລະນາຮັບຮອງແຜນການລະດົມທຶນຜ່ານການອອກຈຳໜ່າຍຮຸ້ນກູ້ ທີ່ຕະຫຼາດຕ່າງປະເທດ, ຊຶ່ງມີລາຍລະອຽດດັ່ງນີ້:

ຈຳນວນວົງເງິນ:	ບໍ່ເກີນ 300 ລ້ານໂດລາສະຫະລັດ (ໂດລາ ສຫລ) ຫຼື ທຽບເທົ່າໃນສະກຸນເງິນອື່ນໆ.
ຈຸດປະສົງ:	ເພື່ອໃຊ້ສຳລັບຈຸດປະສົງໃດໜຶ່ງ ຫຼື ຫຼາຍຢ່າງລວມກັນ ເຊັ່ນ: ການຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດໃນປີ 2026-2027 (ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້), ການລົງທຶນໃນການຂະຫຍາຍທຸລະກິດ, ຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດຂອງບໍລິສັດ ລວມເຖິງ ເງິນທຶນໝຸນວຽນຂອງບໍລິສັດ.
ສະກຸນເງິນ:	ດ້ວຍສະກຸນເງິນໃດກໍ່ໄດ້ (ລວມທັງ ສະກຸນເງິນບາດ ແລະ ສະກຸນເງິນໂດລາສະຫະລັດ).
ອັດຕາດອກເບ້ຍ:	ຂຶ້ນຢູ່ກັບຜົນການຈັດລະດັບຄວາມໜ້າເຊື່ອຖືຂອງບໍລິສັດ ແລະ ສະພາວະຕະຫຼາດ ໃນຂະນະທີ່ສະເໜີຂາຍຮຸ້ນກູ້ ໃນແຕ່ລະຄັ້ງ.
ອາຍຸຂອງຮຸ້ນກູ້:	ກຳນົດຕາມສະພາບຂອງຕະຫຼາດໃນໄລຍະເວລາທີ່ສະເໜີຂາຍຮຸ້ນກູ້ ໃນແຕ່ລະຄັ້ງ.
ວິທີການສະເໜີຂາຍ:	ດ້ວຍວິທີການໃດໜຶ່ງ ຫຼື ຫຼາຍວິທີລວມກັນ ເຊັ່ນ: ບໍລິສັດ ສາມາດອອກແລະຈຳໜ່າຍຮຸ້ນກູ້ ທັງໝົດ ຫຼື ບາງສ່ວນ, ໃນຄັ້ງດຽວເຕັມຈຳນວນເງິນ ຫຼື ຫຼາຍຄັ້ງ, ເປັນຊຸດດຽວ ຫຼື ຫຼາຍຊຸດ ຕາມຄວາມຈຳເປັນໃນການໃຊ້ເງິນຂອງບໍລິສັດ ເຊິ່ງອາດຈະສະເໜີຂາຍໃນຕະຫຼາດຕ່າງປະເທດ (Offshore Market) ໂດຍຜ່ານຮູບແບບການສະເໜີຂາຍໃຫ້ແກ່ຜູ້ລົງທຶນທົ່ວໄປ ແລະ/ຫຼື ນັກລົງທຶນສະເພາະເຈາະຈົງ ແລະ ສະເໜີ

	ຂາຍໃຫ້ແກ່ນັກລົງທຶນລາຍໃຫຍ່ ແລະ/ຫຼື ນັກລົງທຶນສະຖາບັນ ໂດຍປະຕິບັດຕາມກົດໝາຍແລະກົດລະບຽບທີ່ກ່ຽວຂ້ອງ ແລະ ມີຜົນບັງຄັບໃນເວລາທີ່ອອກແລະສະເໜີຂາຍຮຸ້ນກູ້ ໃນແຕ່ລະຄັ້ງ.

ແລະ ສະເໜີກອງປະຊຸມສາມັນຜູ້ຖືຮຸ້ນ ມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້; ມີລາຍລະອຽດດັ່ງຕໍ່ໄປນີ້:

(1) ພິຈາລະນາ ແລະ ກຳນົດວົງເງິນທີ່ຈະອອກຈຳໜ່າຍຮຸ້ນກູ້, ລາຍລະອຽດທີ່ກ່ຽວຂ້ອງ ເຊັ່ນ: ປະເພດຂອງຮຸ້ນກູ້, ຂໍ້ກຳນົດແລະເງື່ອນໄຂ, ອາຍຸຂອງຮຸ້ນກູ້, ມູນຄ່າການອອກຈຳໜ່າຍຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີຂາຍ;

(2) ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ເຈລະຈາ, ຕົກລົງ, ລົງນາມ, ການສົ່ງມອບ ຄຳຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ ກັບການອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນ ຫຼື ບຸກຄົນໃດ ທີ່ກ່ຽວຂ້ອງ;

(3) ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈຳໜ່າຍຫຼັກຊັບ, ຜູ້ຮັບປະກັນການອອກຈຳ ໜ່າຍຫຼັກຊັບ, ທີ່ປຶກສາກົດໝາຍ, ຕົວແທນຊຳລະ, ຕົວແທນອື່ນ ແລະ/ຫຼື ບຸກຄົນອື່ນໆ ທີ່ຈຳເປັນ ແລະ ກ່ຽວຂ້ອງໃຫ້ແກ່ການດຳເນີນທຸລະກຳຈົນສຳເລັດ;

(4) ປະຕິບັດ ແລະ ດຳເນີນວຽກງານອື່ນໆທີ່ຈຳເປັນແລະກ່ຽວຂ້ອງທັງໝົດຕາມທີ່ກຳນົດ ເພື່ອການດຳເນີນທຸລະກຳດັ່ງກ່າວ ໃຫ້ສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດໃນການດຳເນີນການໃດໜຶ່ງ ດັ່ງກ່າວຂ້າງເທິງນີ້ໄດ້ທຸກປະການ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ, ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດການລະດົມທຶນຜ່ານການອອກຮຸ້ນກູ້ ທີ່ຕະຫຼາດຕ່າງປະເທດ ໃນວົງເງິນບໍ່ເກີນ 300 ລ້ານໂດລາ ສຫລ (ຫຼື ທຽບເທົ່າໃນສະກຸນເງິນອື່ນໆ) ເພື່ອນຳມາເປັນແຫຼ່ງທຶນສຳຮອງໃນການຊຳລະໜີ້ສິນທີ່ຈະຄົບກຳນົດ ໃນໄລຍະປີ 2026-2027, ການລົງທຶນໃນການຂະຫຍາຍທຸລະກິດ ລວມທັງ ເປັນ ຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດ ລວມທັງເປັນທຶນໝຸນວຽນຂອງບໍລິສັດ ແລະ ພ້ອມດ້ວຍການມອບອຳນາດດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 9 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງ ການລະດົມທຶນຜ່ານການອອກຮຸ້ນກູ້ທີ່ຕະຫຼາດຕ່າງປະເທດ. ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ມະຕິ : **ກອງປະຊຸມໄດ້ ເຫັນດີ ຮັບຮອງ ການລະດົມທຶນຜ່ານການອອກຮຸ້ນກູ້ທີ່ຕະຫຼາດຕ່າງປະເທດ ໃນວົງເງິນບໍ່ເກີນ 300 ລ້ານໂດລາ ສຫລ (ຫຼື ທຽບເທົ່າໃນສະກຸນເງິນອື່ນໆ) ເພື່ອມາຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດໃນປີ 2026-2027 (ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້) ແລະ/ຫຼື ເພື່ອມາລົງທຶນໃນການຂະຫຍາຍທຸລະກິດໃຫ້ນັບມື້ນັບເຕີບໃຫຍ່ ຕະຫຼອດເຖິງຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝຸນວຽນຂອງບໍລິສັດ. ແລະ ກອງປະຊຸມ ເຫັນດີ ມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ດັ່ງນີ້: ພິຈາລະນາ ແລະ ກຳນົດວົງເງິນທີ່ຈະອອກຈຳໜ່າຍຮຸ້ນກູ້, ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ເຈລະຈາ, ຕົກລົງ, ລົງນາມ, ການສົ່ງມອບ ຄຳຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ ກັບການອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ ສຳນັກງານ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການ ຂອງລັດ ຫຼື ນິຕິບຸກຄົນ ຫຼື ບຸກຄົນໃດ ທີ່ກ່ຽວຂ້ອງ, ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ ຈັດຈຳໜ່າຍຫຼັກຊັບ, ຜູ້ຮັບປະກັນການອອກຈຳໜ່າຍຫຼັກຊັບ, ທີ່ປຶກສາກົດໝາຍ, ຕົວແທນຊຳລະ, ຕົວແທນ ອື່ນ ແລະ/ຫຼື ບຸກຄົນອື່ນໆ ທີ່ຈຳເປັນ ແລະ ກ່ຽວຂ້ອງໃຫ້ແກ່ການດຳເນີນທຸລະກຳຈົນສຳເລັດ. ປະຕິບັດ ແລະ ດຳເນີນວຽກງານອື່ນໆທີ່ຈຳເປັນ ແລະ ກ່ຽວຂ້ອງທັງໆຕາມທີ່ກຳນົດ ເພື່ອການດຳເນີນທຸລະກຳດັ່ງກ່າວໃຫ້ ສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດໃນການດຳເນີນການ ໃດໜຶ່ງ ດັ່ງກ່າວຂ້າງເທິງນີ້ໄດ້ທຸກປະການ. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນ ສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້ :

- **ເຫັນດີຈຳນວນ 1,475,493,572 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງ ປະຊຸມ ແລະ ເທົ່າກັບ 87.863415 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ພາຍຫຼັງການຮັບຟັງການລາຍງານຂອງຜູ້ອຳນວຍການໃຫຍ່ ແລະ ຄະນະສະພາບໍລິຫານ, ຖືວ່າໄດ້ພິຈາລະນາຄົບ ວາລະກອງປະຊຸມແລ້ວ, ທ່ານປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດຄຳເຫັນຕື່ມ ແລະ ຊັກຖາມຂໍ້ຂ້ອງໃຈອື່ນໆ. ເຊິ່ງໄດ້ມີການປະກອບຄຳຄິດ-ຄຳເຫັນ ຈາກບັນດາຜູ້ຖືຮຸ້ນ ຂອງບໍລິສັດ ພ້ອມທັງ ການແລກປ່ຽນບັນດາຄຳຄິດ-ຄຳເຫັນ ຈາກຄະນະຜູ້ອຳນວຍການໃຫຍ່ ແລະ ຄະນະສະພາບໍລິຫານ ລາຍລະອຽດດັ່ງນີ້:

- Mr. KRAIWAL KADAVANICH (ຖືຮຸ້ນຈຳນວນ: 100 ຮຸ້ນ) ໄດ້ຍົກປະເດັ່ນ ກ່ຽວກັບ ການຮັບການ ລົງທະບຽນ ເພື່ອເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດ ຄວນ ມີການດຳເນີນການ ຈົນກວ່າ ກອງປະຊຸມ ຈະ ດຳເນີນການສິ້ນສຸດ ເພື່ອຮັບປະກັນ ໃຫ້ຜູ້ຖືຮຸ້ນ ທີ່ມີຄວາມປະສົງເຂົ້າຮ່ວມກອງປະຊຸມ ສາມາດເຂົ້າຮ່ວມກອງ ປະຊຸມ ແລະ ມີຄຳເຫັນ ຕໍ່ກັບ ວາລະພິຈາລະນາຕ່າງໆໄດ້ຕາມສິດທີ່ຕົນຄວນໄດ້ຮັບ.
- Mr. KRAIWAL KADAVANICH (ຖືຮຸ້ນຈຳນວນ: 100 ຮຸ້ນ) ໄດ້ໃຫ້ສະເໜີ ແລະ ໃຫ້ຄຳເຫັນ ກ່ຽວກັບ ເນື້ອໃນຂອງ ບັດເຊີນກອງປະຊຸມຜູ້ຖືຮຸ້ນ ຄວນມີການປັບປຸງ ໃຫ້ມີຄວາມເຂົ້າໃຈງ່າຍຂຶ້ນກວ່າເກົ່າ ທັງສະບັບ ພາສາລາວ ແລະ ພາສາອັງກິດ ໂດຍສະເພາະ ແມ່ນ ຄູ່ມື ແລະ ຄຳແນະນຳ ກ່ຽວກັບ ການເຂົ້າຮ່ວມກອງປະຊຸມ ທັງ ຮູບແບບ ຊ່ອງໜ້າ ແລະ ອອນລາຍ.
- ປະທານກອງປະຊຸມ ໄດ້ແລກປ່ຽນຄຳຄິດ-ຄຳເຫັນ ຕໍ່ຂໍ້ຊັກຖາມຂອງຜູ້ຖືຮຸ້ນ ແລະ ຈະນຳເອົາຂໍ້ສະເໜີດັ່ງກ່າວ ນຳ ມາປັບປຸງ ເພື່ອເຮັດໃຫ້ການຈັດກອງປະຊຸມ ໃນຄັ້ງຕໍ່ໄປ ມີໝາກຜົນທີ່ດີກ່ວາເກົ່າ.

ໃນຕອນທ້າຍຂອງການປະຊຸມ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າ ຮ່ວມກອງປະຊຸມມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ **22** ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມ ແທນຜູ້ຖືຮຸ້ນຈຳນວນ **10** ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ **32** ຄົນ ຖືຮຸ້ນລວມກັນ **1,475,493,572** ຮຸ້ນ ເທົ່າກັບ **87.86** ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງ ປະຊຸມ ໄດ້ກ່າວປິດກອງປະຊຸມເວລາ **16:20** ໂມງ.

ປະທານກອງປະຊຸມ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ປອ. ອາຄົມເດດ ວົງໄຊ

ຮັບຮອງຖືກຕ້ອງ

ສຸກສະຫວາດ ໂສສຸພັນ

ຊີ້ອະປະຫວັດຫຍໍ້ ຂອງທ່ານຮັກສາການ ຜູ້ອຳນວຍການໃຫຍ່ ຜ-ຟຟລ

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ດາວວຽງ ສຸນັນທະລາດ

ວັນ/ເດືອນ/ປີເກີດ: 03/05/1972

ອາຍຸ: 54 ປີ

ສັນຊາດ: ລາວ

ທີ່ຢູ່ປັດຈຸບັນ: ບ້ານ ເມືອງນ້ອຍ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ

ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາວິຊາ ວິສະວະກຳພະລັງງານ, ມະຫາວິທະຍາໄລຊຽງໃໝ່, ຈັງຫວັດຊຽງໃໝ່, ປະເທດໄທ

ຄວາມຮູ້ພາສາຕ່າງປະເທດ: ພາສາລາວ, ພາສາອັງກິດ, ພາສາຣັດເຊຍ ແລະ ພາສາໄທ

<u>ການຝຶກອົບຮົມ:</u>

- 2008 ຝຶກອົບຮົມວິຊາ " ການບໍລິຫານຈັດການນ້ຳໃນອ່າງນ້ຳງື່ມ 1 ໂດຍໃຊ້ໂປຼແກຼມ PARSIFAL" ຢູ່ສູນຝຶກອົບຮົມ EDF, ເມືອງ ກິນນອບເບີ, ແຂວງ ລີຢົງ, ປະເທດ ຝຣັ່ງ
- 2010 ຝຶກອົບຮົມວິຊາ " Hydro power and the Environment HE210 " ຢູ່ສູນຝຶກອົບຮົມ ICH, ເມືອງ ໂທລນ ແຮມ, ປະເທດ ນໍເວ
- 2010 ບຳລຸງທິດສະດີການເມືອງໄລຍະສັ້ນ 45 ວັນ, ການເມືອງ ແລະ ການປົກຄອງ ແຂວງ ວຽງຈັນ.
- 2015 ທັກສະໃນການເປັນຜູ້ນຳ ແລະ ການສ້າງທີມງານ.
- 2017 ຝຶກອົບຮົມຜູ້ກວດສອບພາຍນອກສຳລັບການອັບເດດ ISO 14001.2015 EMS ຢູ່ເຂື່ອນໄຟຟ້ານ້ຳງື່ມ 1, ແຂວງວຽງຈັນ ໂດຍ Mr. HO Yoon Sin ຊ່ຽວຊານປະເທດມາເລເຊຍ.
- 2017 Analysis of Hydroelectric Project Feasibility Study (FS).
- 2018 Capacity Building on IWRM Master Plan for NamNgum River Basin in Lao PDR" ຢູ່ K-Water Center, ປະເທດ ສ. ເກົາຫຼີ.
- 2020 ການບັນຊີ ໃນຫົວຂໍ້ "ເຜີຍແຜ່ຮູບແບບເອກະສານລາຍງານການເງິນ ການບັນຊີ ວິສາຫະກິດ ປັບປຸງປີ 2020" ໂດຍວິທະຍາກອນຈາກກົມບັນຊີກະຊວງການເງິນ.
- 2022 ກະກຽມສັນຍາ ແລະ ປະເມີນການບໍລິການວຽກ O&M ໃຫ້ກັບລູກຄ້າ Hydro power O&M Contract Management and O&M Cost Estimate.
- 2023 ການບໍລິຫານຄວາມສ່ຽງ ແລະ non-finance ໂດຍ ບໍລິສັດ ອີແອມອີ ເອັນຈີເນຍຣິ້ງ ແອນເຊີວິດ ຈຳກັດ.
- 2023 ການບໍລິຫານແຜນສຳລັບວິຊາການ.

<u>ປະສົບການ:</u>

- 2010 - 2015 ຫົວໜ້າພະແນກຜະລິດ-ຄວບຄຸມ, ເຂື່ອນໄຟຟ້ານ້ຳງື່ມ 1, ຜ-ຟຟລ.
- 03/2014 - 2016 ຮອງຫົວໜ້າໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ ຈັກເບີ 7-8, ແລະ ຫົວໜ້າພະແນກ ຜະລິດ-ຄວບຄຸມ, ເຂື່ອນໄຟຟ້ານ້ຳງື່ມ 1, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 06/2016 - 06/2020 ຮອງຜູ້ອຳນວຍການເຂື່ອນໄຟຟ້ານ້ຳງື່ມ 1, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 06/2020 - 09/2021 ວ່າການຜູ້ອຳນວຍການຝ່າຍພັດທະນາທຸລະກິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 09/2021 - 08/2022 ຜູ້ອຳນວຍການຝ່າຍແຜນການ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 08/2022 - 11/2023 ຜູ້ອຳນວຍການຝ່າຍເຕັກນິກ, ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ.
- 11/2023 – 10/2024 ຮອງຜູ້ອຳນວຍການໃຫຍ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 11/2024 – 03/2025 ຮັກສາການ ຜູ້ອຳນວຍການໃຫຍ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 03/2025 ຮອງຜູ້ອຳນວຍການໃຫຍ່ ສາຍງານພັດທະນາທຸລະກິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- 08/2026-ປັດຈຸບັນ ຮັກສາການ ຜູ້ອຳນວຍການໃຫຍ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານການໂອນຮຸ້ນ ທີ່ ຜ-ຟຟລ ຖືຄອງ ໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໃນສັດສ່ວນ 60%

ໂດຍ ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ

ບົດລາຍງານການໂອນ (ຂາຍ)

ຮຸ້ນ 60% ຂອງ ບໍລິສັດ ເຫີນຫີນບູນ ພາວເວີ ຈຳກັດ

(ທີ່ຖືຄອງໂດຍ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ)

ກະກຽມໂດຍ: ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ

ສາລະບານ

ນິຍາມຄຳສັບ IV

ພາກທີ I 1

1. ຄວາມເປັນມາ ແລະ ວັດຖຸປະສົງຂອງການຊີ້ຂາດຊັບສິນ 1

2. ລັກສະນະທົ່ວໄປຂອງລາຍການ 1

3. ຂັ້ນຕອນ ແລະ ການອະນຸມັດຕ່າງໆທີ່ຕິດພັນ 3

4. ຄູ່ສັນຍາ ແລະ ຄວາມສຳພັນກັບບໍລິສັດ 4

5. ຜົນປະໂຫຍດ ແລະ ຜົນກະທົບຕໍ່ບໍລິສັດຈົດທະບຽນ 4

ພາກທີ II 6

1. ຂໍ້ມູນກ່ຽວກັບຝ່າຍຊື້ 6

1.1 ຂໍ້ມູນທົ່ວໄປກ່ຽວກັບຝ່າຍຊື້ 6

1.2 ປະຫວັດການເຄື່ອນໄຫວກິດຈະການ 6

1.3 ການດຳເນີນທຸລະກິດ 7

1.4 ທຶນຈົດທະບຽນ 9

1.5 ໂຄງສ້າງການຖືຮຸ້ນ 9

1.6 ຜູ້ມີອຳນາດຄວບຄຸມຂອງບໍລິສັດ 10

1.7 ສະພາບໍລິຫານ 10

1.8 ໂຄງປະກອບການຈັດຕັ້ງ 10

1.9 ຄະນະຜູ້ບໍລິຫານ 10

1.10 ຖານະການເງິນ ແລະ ອັດຕາສ່ວນທາງການເງິນ 11

2. ຂໍ້ມູນກ່ຽວກັບຝ່າຍຂາຍ 12

2.1 ຂໍ້ມູນທົ່ວໄປກ່ຽວກັບຝ່າຍຂາຍ 12

2.2 ປະຫວັດຄວາມເປັນມາ ແລະ ພັດທະນາການຂອງບໍລິສັດ 12

2.3 ການດຳເນີນທຸລະກິດ 15

2.4 ທຶນຈົດທະບຽນ 16

2.5 ໂຄງສ້າງການຖືຮຸ້ນ 16
2.6 ຜູ້ມີອຳນາດຄວບຄຸມຂອງບໍລິສັດ 17
2.7 ສະພາບໍລິຫານ 17
2.8 ໂຄງປະກອບການຈັດຕັ້ງ 18
2.9 ຄະນະອຳນວຍການ 18
2.10 ຕົວເລກຖານະການເງິນ ແລະ ອັດຕາສ່ວນທາງການເງິນ 19
ພາກທີ III 23
1. ຂໍ້ມູນທົ່ວໄປກ່ຽວກັບ ຊັບສິນ 23
2. ການດຳເນີນທຸລະກິດ 23
3. ໂຄງສ້າງການຖືຮຸ້ນ 25
4. ສະພາບໍລິຫານ 25
5. ໂຄງຮ່າງການຈັດຕັ້ງ 26
6. ຄະນະອຳນວຍການ 26
7. ຕົວເລກຖານະການເງິນ ແລະ ອັດຕາສ່ວນທາງການເງິນ 27
7.1 ໃບລາຍງານຖານະການເງິນ 27
7.2 ໃບລາຍງານຜົນການດຳເນີນງານ 28
7.3 ໃບລາຍງານກະແສເງິນສົດ 29
7.4 ອັດຕາສ່ວນການເງິນທີ່ສຳຄັນ 29
ພາກທີ IV 30
1. ວິທີການ ແລະ ຜົນການປະເມີນ 30
2. ສົມມຸດຖານ ແລະ ປັດໄຈທີ່ສົ່ງຜົນກະທົບ 35
3. ຂໍ້ມູນ ແລະ ບ່ອນອີ່ງໃນການປະເມີນ ຫຼື ການກຳນົດລາຄາ 36
4. ຂໍ້ມູນກ່ຽວກັບຜູ້ປະເມີນ ຄຳເຫັນຂອງສະພາບໍລິຫານຕໍ່ການປະເມີນ ຫຼື ການກຳນົດລາຄາ ແລະ ອື່ນໆ 36
5. ຄຳເຫັນຂອງສະພາບໍລິຫານຕໍ່ການປະເມີນ ຫຼື ການກຳນົດລາຄາ 36
ພາກທີ V 38

1. ຂໍ້ຈຳກັດໃນການໂອນຮຸ້ນ (Restrictions on transfer) ແລະ ເງື່ອນໄຂບັງຄັບໃຊ້ກ່ອນ ໃນສັນຍາຂາຍ (Conditions Precedent) 38
ພາກທີ VI 39
1. ຄຳເຫັນຂອງສະພາບໍລິຫານ ກ່ຽວກັບການຊີ້ຂາດຊັບສິນ 39
ພາກທີ VII 40
1. ຄວາມສ່ຽງໃນການດຳເນີນທຸລະກິດ 40
2. ຄວາມສ່ຽງທາງດ້ານການເງິນ 40
3. ຄວາມສ່ຽງໃນການຄຸ້ມຄອງບໍລິຫານ 40
ພາກທີ VIII 41
ແຜນການນຳໃຊ້ທຶນທີ່ໄດ້ຈາກການຊີ້ຂາດຊັບສິນ 41
ພາກທີ IX 42
1. ການຢັ້ງຢືນຈາກທີ່ປຶກສາທາງດ້ານການເງິນ 42

ນິຍາມຄຳສັບ

ຄຳສັບ	ຄວາມໝາຍ
ฟฟล ຫຼື EDL	ລັດວິສາຫະກິດ ไฟฟ้าลาว
ບໍລິສັດ, ผ-ฟฟล ຫຼື EDL-Gen	ບໍລິສັດ ผะลิด-ไฟฟ้าลาว มะหาชิน
ทหบ ຫຼື THPC	ບໍລິສັດ เหินหินบูน พาอเวิ จำกัด
กพຊอ ຫຼື PSTG	กุ่มบໍລິสัด พึงชับทะวิ จำกัด ผู้ดียว
ถถช	ถะนะกำมะกานถุ้มถองหลักชับ
สถถช	สำนักงานถะนะกำมะกานถุ้มถองหลักชับ
ตลชล	ตะหลาดหลักชับลาว
ที่ปึกสาทางด้านกานเงิน	บໍລິสัดหลักชับ แอล์ดิบิ จำกัดผู้ดียว
ບໍລິสัดปะเมินชับสิน	ບໍລິสัด เอเชย โลตัด ปะเมินมูนถ่าชับสิน จำกัด
ບໍລິสัดกาดสอบ	ບໍລິสัด เอิมแอมยังลาว จำกัด
CAPEX	ถ่าใช้จ่ายกานลิงทึน (Capital expenditures)
CP	เงื่อมไขที่บังถับใช้ก่อม (Condition Precedent)
DCF	กะแสเงินสิดถิดหลุด (Discounted Cash Flow)
Discount Rate	อัดตาส่อมหลุด
EGAT	กานไฟฟ้าฝ่ายผะลิดแห่งปะเทดไท
FCFE	กะแสเงินสิดสำลับส่อมของทึน (Free Cash Flow to Equity)
FCFF	กะแสเงินสิดสำลับกิดจะกาน (Free Cash Flow to Firm)
FV	มูนถ่ายุดติทำ (Fair Value)
GMS	GMS LAO COMPANY LIMITED
GWh	หิอหม่อยใช้อัดพะลังงานไฟฟ้า (Gigawatt-hour)
HPP	โถงกานพะลังงานน้ำ (Hydro Power Project)
IPO	กานออกจำหม่ายรุ้นถั้งทำอิดให้แก่มอนชุม
IPPs	ผู้ผะลิดไฟฟ้าอิดสะละ (Independent Power Producers)
IVS	มาดถานกานปะเมินสากิม
Ke	ติ้นทึนของส่อมทึน (cost of equity)
MW	Mega watt
Nordics	NORDIC HYDROPOWER AB
OPEX	ถ่าใช้จ่ายในกานดำเนินงาน (Operating Expenditures)
OPGW	สายสิ่ง (Optical Ground Wire)
PPA	สันยาซื้-ขายไฟ (Power Purchase Agreement)
PV	มูนถ่าปะจุบัน (Present value)
ROT	ข้อจำกัดในกานโอนรุ้น (Restrictions on transfer)

SHA	ສັນຍາຮ່ວມຮຸ້ນ (Shareholder Agreement)
SPA	ສັນຍາຂາຍ (Share Purchase Agreement)
USD	ໂດລາ ສະຫະລັດ (United States Dollars)
WACC	ຕົ້ນທຶນສະເລ່ຍຖ່ວງນ້ຳໜັກ (weighted average cost of capital)

ພາກທີ I
ຂໍ້ມູນທົ່ວໄປ ກ່ຽວກັບການຊື້ຂາດຊັບສິນ

1. ຄວາມເປັນມາ ແລະ ວັດຖຸປະສົງຂອງການຊື້ຂາດຊັບສິນ

ຕາມທີ່ ບໍດຍັນທຶກກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 01/2026, ລົງວັນທີ 04 ກຸມພາ 2026 ຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ ໄດ້ມີມະຕິໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນຕໍ່ກັບ ວາລະ ການພິຈາລະນາໂອນຮຸ້ນ 60% ຂອງ ຜ-ຟຟລ ທີ່ມີຢູ່ໃນ ບໍລິສັດ ເທີນຫີນບູນ ພາວເວີ ຈຳກັດ ໃຫ້ກຸ່ມບໍລິສັດ ພົງຊັບທະວີ ຈຳກັດຜູ້ດຽວ ຊຶ່ງເປັນນິຕິບຸກຄົນທີ່ບໍ່ມີຄວາມກ່ຽວຂ້ອງກັບບໍລິສັດ ໂດຍມີມູນຄ່າການໂອນ (ຂາຍ)ຮຸ້ນ 375,000,000 ໂດລາ ສະຫະລັດ (ສາມຮ້ອຍເຈັດສິບຫ້າ ລ້ານໂດລາ ສະຫະລັດ) ຊຶ່ງມີຈຸດປະສົງເພື່ອປັບປຸງໂຄງ ສ້າງທາງການເງິນເຊັ່ນ: ຊັບສິນ, ໜີ້ສິນ ແລະ ທຶນຂອງ ຜ-ຟຟລ.

ການດຳເນີນການລາຍການດັ່ງກ່າວເຂົ້າເງື່ອນໄຂເປັນການຊື້ຂາດຊັບສິນຂອງບໍລິສັດຈົດທະບຽນ ຕາມຂໍ້ ຕົກລົງວ່າດ້ວຍການໄດ້ມາ ແລະ ການຊື້ຂາດຊັບສິນ ຂອງບໍລິສັດຈົດທະບຽນ ສະບັບເລກທີ 09/ຄຄຊ ລົງວັນທີ 22 ກໍລະກົດ 2022, ສຳລັບການຄິດໄລ່ຮູບແບບອັດຕາສ່ວນລາຍການໄດ້ມາ ແລະ ຊື້ຂາດຊັບສິນ ຊຶ່ງມີຂະໜາດ ລາຍການສູງສຸດຕາມຮູບແບບ ມູນຄ່າຊັບສິນສຸດທິ ໃນອັດຕາສ່ວນ ຫົກສິບເອັດຈຸດສາມສິບຫົກສ່ວນຮ້ອຍ (61.36%) ຊຶ່ງຄິດໄລ່ຈາກເອກະສານລາຍງານການເງິນຂອງບໍລິສັດ ສິ້ນສຸດວັນທີ 31 ທັນວາ 2024 ທີ່ຜ່ານການ ກວດສອບຈາກບໍລິສັດກວດສອບພາຍນອກທີ່ໄດ້ຮັບການຮັບຮອງຈາກ ຄຄຊ ແລະ ເອກະສານລາຍງານການເງິນ ຂອງ ບໍລິສັດ ເທີນຫີນບູນ ພາວເວີ ຈຳກັດ ສິ້ນສຸດວັນທີ 31 ທັນວາ 2024 ຊຶ່ງເປັນລາຍການທີ່ມີອັດຕາສ່ວນ ລາຍການໄດ້ມາ ແລະ ຊື້ຂາດຊັບສິນ ແຕ່ ຫ້າສິບສ່ວນຮ້ອຍ (50%) ຂຶ້ນໄປ ແຕ່ບໍ່ເກີນ ຮ້ອຍສ່ວນຮ້ອຍ (100%) ຊຶ່ງຕ້ອງໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. ພ້ອມນັ້ນ ບໍລິສັດຈົດທະບຽນ ຕ້ອງແຕ່ງຕັ້ງ ບໍລິສັດຫຼັກຊັບ ເປັນ ທີ່ປຶກສາທາງດ້ານການເງິນ, ແຕ່ງຕັ້ງ ທີ່ປຶກສາທາງດ້ານການເງິນອິດສະລະ, ແຕ່ງຕັ້ງ ທີ່ປຶກສາດ້ານກົດໝາຍ ແລະ ແຕ່ງຕັ້ງ ຜູ້ປະເມີນມູນຄ່າຊັບສິນ ເພື່ອໃຫ້ຄຳປຶກສາ, ກະກຽມຄວາມພ້ອມຮອບດ້ານ ແລະ ມີຄຳເຫັນຕໍ່ ການໄດ້ມາ ຫຼື ການຊື້ຂາດຊັບສິນ.


ທັ້ງນີ້ ຝ່າຍຊື້ບໍ່ແມ່ນບຸກຄົນ ຫຼື ນິຕິບຸກຄົນທີ່ກ່ຽວພັນກັບບໍລິສັດ ການດຳເນີນລາຍການດັ່ງກ່າວນີ້ຈຶ່ງບໍ່ ແມ່ນລາຍການທີ່ກ່ຽວພັນ ຕາມຂໍ້ຕົກລົງວ່າດ້ວຍລາຍການທີ່ກ່ຽວພັນ ສະບັບເລກທີ 0023/ຄຄຊ ລົງວັນທີ 26 ຕຸລາ 2016.

2. ລັກສະນະທົ່ວໄປຂອງລາຍການ

2.1 ຂໍ້ມູນຂອງລາຍການ

ບໍລິສັດໄດ້ເຮັດສັນຍາໂອນ (ຂາຍ) ຮຸ້ນ ຊຶ່ງລາຍການດັ່ງກ່າວຈະສຳເລັດໄດ້ກໍ່ຕໍ່ເມື່ອຜ່ານຂະບວນການດັ່ງນີ້: 1) ພາຍຫຼັງທີ່ໄດ້ຮັບມະຕິເຫັນດີໃຫ້ດຳເນີນການໂອນ (ຂາຍ) ຮຸ້ນດັ່ງກ່າວ ຈາກກອງປະຊຸມຜູ້ຖືຮຸ້ນຂອງ ຜ-ຟຟລ; ແລະ 2) ພາຍຫຼັງທີ່ປະຕິບັດເງື່ອນໄຂບັງຄັບກ່ອນທັງໝົດທີ່ລະບຸໃນສັນຍາຊື້ຂາຍ ແລະ ໄດ້ດຳເນີນການຕ່າງໆ ເພື່ອ ໃຫ້ລາຍການດັ່ງກ່າວສຳເລັດ.

ໂຄງສ້າງຜູ້ຖືຮຸ້ນຂອງ ບໍລິສັດ ເທີນຫິນບຸນ ພາວເວີ ຈຳກັດ



2.2 ຂະໜາດຂອງລາຍການ

ການຄິດໄລ່ອັດຕາສ່ວນຂອງລາຍການ ອີງຕາມຂໍ້ຕົກລົງວ່າດ້ວຍການໄດ້ມາ ແລະ ການຊີ້ຂາດຊັບສິນ ໂດຍອີງໃສ່ຂໍ້ມູນເອກະສານລາຍງານການເງິນປະຈຳປີ 2024 ຂອງບໍລິສັດ ທີ່ຜ່ານການກວດສອບຈາກບໍລິສັດກວດສອບເອີນແອນຢັ້ງລາວ ຈຳກັດ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ແລະ ເອກະສານລາຍງານການເງິນປະຈຳປີ 2024 ຂອງບໍລິສັດ ເທີນຫິນບຸນ ພາວເວີ ຈຳກັດ ໂດຍມີລາຍລະອຽດການຄິດໄລ່ດັ່ງຕໍ່ໄປນີ້:

ຮູບແບບທີ່ໃຊ້ໃນການຄິດໄລ່	ສູດຄິດໄລ່
1.ມູນຄ່າຊັບສິນສຸດທິ	(ຊັບສິນສຸດທິຂອງນິຕິບຸກຄົນອື່ນ ທີ່ບໍລິສັດຈົດທະບຽນມີລາຍການໄດ້ມາ ແລະ ການຊີ້ຂາດຊັບສິນ x ອັດຕາສ່ວນຂອງຮຸ້ນ ທີ່ຊື້ ຫຼື ຂາຍ) / (ກຳໄລສຸດທິຂອງບໍລິສັດຈົດທະບຽນ) x ໜຶ່ງຮ້ອຍ.
2.ມູນຄ່າຂອງຊັບສິນລວມ	ມູນຄ່າຂອງຊັບສິນລວມ / ຊັບສິນລວມຂອງບໍລິສັດຈົດທະບຽນ) x ໜຶ່ງຮ້ອຍ.
3.ມູນຄ່າກຳໄລສຸດທິ	(ກຳໄລສຸດທິຂອງນິຕິບຸກຄົນອື່ນ ທີ່ບໍລິສັດຈົດທະບຽນມີລາຍການໄດ້ມາ ແລະ ການຊີ້ຂາດຊັບສິນ x ອັດຕາສ່ວນຂອງຮຸ້ນ ທີ່ຊື້ ຫຼື ຂາຍ) / ກຳໄລສຸດທິຂອງບໍລິສັດຈົດທະບຽນ) x ໜຶ່ງຮ້ອຍ.
4.ມູນຄ່າການອອກຈຳໜ່າຍຮຸ້ນເພື່ອຊຳລະຄ່າຊັບສິນ	(ຈຳນວນຮຸ້ນທີ່ຈະອອກຈຳໜ່າຍຂອງບໍລິສັດຈົດທະບຽນເພື່ອຊຳລະຄ່າຊັບສິນ) / ຈຳນວນຮຸ້ນທີ່ຖອກເຕັມແລ້ວ) x ໜຶ່ງຮ້ອຍ.

ຮູບແບບທີ່ໃຊ້ໃນການຄິດໄລ່	ຜົນການຄິດໄລ່ (%)
1.ມູນຄ່າຊັບສິນສຸດທິ	$\frac{(8{,}915{,}565{,}298{,}356 \text{ ກີບ } x\ 60\%)}{8{,}717{,}531{,}000{,}000 \text{ ກີບ}} = 61.36\%$
2.ມູນຄ່າຂອງຊັບສິນລວມ;	$\frac{8{,}187{,}750{,}000{,}000 \text{ ກີບ}}{29{,}549{,}445{,}000{,}000 \text{ ກີບ}} = 27.71\%$
3.ມູນຄ່າກຳໄລສຸດທິ;	ບໍ່ເໝາະສົມໃນການຄິດໄລ່ ເນື່ອງຈາກຜົນການດຳເນີນງານຂອງ ຜ-ຟຟລ ໃນປີ 2024 ຂາດທຶນ
4.ມູນຄ່າການອອກຈຳໜ່າຍຮຸ້ນເພື່ອຊຳລະຄ່າຊັບສິນ.	ບໍ່ເໝາະສົມໃນການຄິດໄລ່ ເນື່ອງຈາກບໍລິສັດບໍ່ໄດ້ອອກຮຸ້ນໃໝ່

ແຫຼ່ງຂໍ້ມູນ:

- ເອກະສານລາຍງານການເງິນຂອງບໍລິສັດ ສິ້ນສຸດວັນທີ 31 ທັນວາ 2024;
- ເອກະສານລາຍງານການເງິນຂອງ ບໍລິສັດ ເທີນຫິນບູນ ພາວເວີ ຈຳກັດ ສິ້ນສຸດວັນທີ 31 ທັນວາ 2024.
- ອັດຕາແລກປ່ຽນມະວັນທີ 31 ທັນວາ 2024: 21,834 ກີບ/ໂດລາ ສະຫະລັດ.

3. ຂັ້ນຕອນ ແລະ ການອະນຸມັດຕ່າງໆທີ່ຕິດພັນ

ຈາກຕາຕະລາງຂ້າງເທິງ ສາມາດຄິດໄລ່ຂະໜາດຂອງລາຍການໄດ້ສູງສຸດຕາມຮູບແບບມູນຄ່າຊັບສິນສຸດທິ ເທົ່າກັບ 61.36% ຊຶ່ງບໍລິສັດຕ້ອງດຳເນີນການຕາມຂັ້ນຕອນດັ່ງຕໍ່ໄປນີ້:

1) ລາຍງານໃຫ້ແກ່ ສຄຄຊ ພ້ອມທັງເປີດເຜີຍຜ່ານເວັບໄຊຂອງ ຕະຫຼາດຫຼັກຊັບລາວ ແລະ ເວັບໄຊຂອງ ບໍລິສັດ;
2) ແຕ່ງຕັ້ງບໍລິສັດຫຼັກຊັບ ເພື່ອເຮັດປຶດລາຍງານການໂອນ (ຂາຍ) ຮຸ້ນ, ແຕ່ງຕັ້ງທີ່ປຶກສາການເງິນອິດສະລະ ເພື່ອໃຫ້ຄຳເຫັນຕໍ່ຜູ້ຖືຮຸ້ນ ກ່ຽວກັບຄວາມເໝາະສົມ ແລະ ປະໂຫຍດຕໍ່ບໍລິສັດຈົດທະບຽນ, ແລະ ແຕ່ງຕັ້ງທີ່ປຶກສາດ້ານກົດໝາຍ ເພື່ອມີຄຳເຫັນກ່ຽວກັບຄວາມສອດຄ່ອງຕໍ່ລະບຽບທີ່ກ່ຽວຂ້ອງຂອງ ລາຍການໄດ້ມາ ແລະ ການຊື້ຂາດຊັບສິນ;
3) ຈັດກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ເພື່ອຂໍອະນຸມັດການໂອນ (ຂາຍ) ຮຸ້ນ ໂດຍບໍລິສັດຈະຕ້ອງໄດ້ຮັບ ອະນຸມັດດ້ວຍຄະແນນສຽງສອງສ່ວນສາມ (2/3) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຢ່າງ ໜ້ອຍແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ;

ນອກຈາກນັ້ນ, ບໍລິສັດຕ້ອງໄດ້ຮັບການເຫັນດີ (Consent) ຫຼື ການຜ່ອນຜັນ (Waiver) ຈາກຕົວແທນຜູ້ ຖືຮຸ້ນກູ້ (Bondholders' Representative) ທີ່ກ່ຽວຂ້ອງກັບເອກະສານຮຸ້ນກູ້ (Bond Documents) ຂອງ ຜ-ຟຟລ.

4. ຄູ່ສັນຍາ ແລະ ຄວາມສຳພັນກັບບໍລິສັດ

ຊັບສິນ	:	ຮຸ້ນສາມັນຈຳນວນ 60% ໃນບໍລິສັດ ເທີນຫົວນູນ ພາວເວີ ຈຳກັດ
ຝ່າຍຊື້	:	ກຸ່ມບໍລິສັດ ພິງຊັບທະວີ ຈຳກັດຜູ້ດຽວ
ຝ່າຍຂາຍ	:	ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ
ມູນຄ່າລາຍການ	:	375,000,000 ໂດລາ
ຄວາມສຳພັນກັບບໍລິສັດ	:	ຝ່າຍຊື້ໄດ້ສິ້ນສຸດການເປັນບຸກຄົນທີ່ກ່ຽວພັນ ນັບຕັ້ງແຕ່ທີ່ໄດ້ຂາຍຮຸ້ນ ຜ-ຟຟລ ໃນອັດຕາສ່ວນ 24%* ແລະ ພົ້ນຕຳແໜ່ງຈາກການເປັນກຳມະການສະພາບໍລິຫານຂອງ ຜ-ຟຟລ.

ໝາຍເຫດ: *ຝ່າຍຊື້ເຄີຍຖືຮຸ້ນ ຜ-ຟຟລ ໃນອັດຕາສ່ວນ 24% ຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງໃນບໍລິສັດ ແລະ ໄດ້ສະເໜີ ທ່ານ ພິງສະຫວັດ ເສນາພອນ ປະທານສະພາບໍລິຫານກຸ່ມບໍລິສັດ ພິງຊັບທະວີ ຈຳກັດຜູ້ດຽວ ເຂົ້າເປັນກຳມະການສະພາບໍລິຫານຂອງ ຜ-ຟຟລ. ມາຮອດວັນທີ 28 ກຸມພາ 2024, ຝ່າຍຊື້ໄດ້ຂາຍຮຸ້ນ ຜ-ຟຟລ ໃນອັດຕາສ່ວນ 24% ຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງໃນບໍລິສັດ ແລະ ທ່ານ ພິງສະຫວັດ ເສນາພອນ ປະທານສະພາບໍລິຫານກຸ່ມບໍລິສັດ ພິງຊັບທະວີ ຈຳກັດຜູ້ດຽວ ໄດ້ພົ້ນຕຳແໜ່ງການເປັນກຳມະການສະພາບໍລິຫານຂອງ ຜ-ຟຟລ ຕາມມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ວັນທີ 26 ເມສາ 2024 (ໄລຍະເວລາເກີນ 1 ປີ ນັບແຕ່ມື້ພົ້ນຕຳແໜ່ງ ຈົນມາຮອດປະຈຸບັນ) ຊຶ່ງຖືວ່າປະຈຸບັນ ຝ່າຍຊື້ບໍ່ມີຄວາມສຳພັນໃດໆ ແລະ ບໍ່ໄດ້ເປັນບຸກຄົນທີ່ກ່ຽວພັນກັບບໍລິສັດ ຕາມຂໍ້ຕົກລົງວ່າດ້ວຍລາຍການທີ່ກ່ຽວພັນ.

5. ຜົນປະໂຫຍດ ແລະ ຜົນກະທົບຕໍ່ບໍລິສັດຈົດທະບຽນ

➢ ຜົນປະໂຫຍດ ຕໍ່ບໍລິສັດຈົດທະບຽນ

- ການຂາຍຮຸ້ນ 60% ຈະເຮັດໃຫ້ບໍລິສັດມີສະພາບຄ່ອງດ້ານຖານະການເງິນທີ່ດີຂຶ້ນ ແລະ ເພີ່ມຄວາມສາມາດໃນການບໍລິຫານໜີ້ສິນໂດຍສະເພາະແມ່ນຮຸ້ນກູ້ ທີ່ຈະຄົບກຳນົດ;
- ການນຳເງິນທີ່ໄດ້ຮັບ ເພື່ອປັບປຸງໂຄງສ້າງທາງການເງິນເຊັ່ນ: ຊັບສິນ, ໜີ້ສິນ ແລະ ທຶນຂອງ ຜ-ຟຟລ ຈະຊ່ວຍຫຼຸດພາລະຜູກພັນທາງດ້ານລາຍຈ່າຍການເງິນຢ່າງມີສາລະສຳຄັນ ຊຶ່ງອາດສົ່ງຜົນດີຕໍ່ກຳໄລສຸດທິ (Net Profit) ຂອງບໍລິສັດໃນໄລຍະຍາວ;
- ເປັນການຮັກສາຄວາມເຊື່ອໝັ້ນຕໍ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອບໍ່ໃຫ້ບໍລິສັດປະສົບກັບຄວາມສ່ຽງຈາກການຜິດນັດຊຳລະໜີ້ (Default Risk).

➢ ຜົນກະທົບ ຕໍ່ບໍລິສັດຈົດທະບຽນ

ກໍລະນີຂາຍຮຸ້ນ 60% ຂອງໂຄງການເຂື່ອນເທີນຫົວນູນອອກ ຊຶ່ງເປັນເຂື່ອນຂະໜາດໃຫຍ່, ມີລາຍຮັບ ແລະ ປັນຜົນສູງໃນແຕ່ລະປີ, ຖ້າຂາຍອອກຄາດວ່າອາດຈະສົ່ງຜົນກະທົບຕໍ່ກັບ ຜ-ຟຟລ ເຊັ່ນ:

- ສົ່ງຜົນຕໍ່ເອກະສານລາຍງານການເງິນຂອງ ຜ-ຟຟລ ທີ່ອາດມີແນວໂນ້ມຫຼຸດລົງ;

- ເຮັດໃຫ້ນັກລົງທຶນຂາດຄວາມເຊື່ອໝັ້ນໃນການດຳເນີນທຸລະກິດຂອງ ຜ-ຟຟລ ລວມທັງການຕັ້ງຄຳຖາມຕໍ່ກັບທິດທາງ, ຍຸດທະສາດ ແລະ ແຜນທຸລະກິດຂອງບໍລິສັດ ເນື່ອງຈາກເປັນໂຄງການທີ່ຂາຍໄຟສົ່ງອອກໄປປະເທດໄທ (EGAT) ແມ່ນເປັນແຫຼ່ງລາຍຮັບທີ່ໝັ້ນຄົງ. ນອກຈາກນີ້, ສຳລັບນັກລົງທຶນທີ່ຖືຮຸ້ນກູ້ໄລຍະຍາວ ຈະມີຄວາມກັງວົນເຖິງຄວາມສາມາດໃນການຊຳລະໜີ້ໃນອະນາຄົດ;
- ໃຊ້ເວລາໃນການດຳເນີນເອກະສານ ເພາະຈຳເປັນຕ້ອງໄດ້ຮັບການອະນຸມັດເຫັນດີຈາກສະພາຜູ້ບໍລິຫານ, ຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນກູ້ ຫຼື ເຈົ້າໜີ້ກ່ອນ ຈຶ່ງຈະສາມາດດຳເນີນການຂາຍຊັບສິນຂະໜາດໃຫຍ່ໄດ້.

ພາກທີ II

ຂໍ້ມູນ ກ່ຽວກັບຝ່າຍຊື້ ແລະ ຝ່າຍຂາຍຊັບສິນ

1. ຂໍ້ມູນກ່ຽວກັບຝ່າຍຊື້

1.1 ຂໍ້ມູນທົ່ວໄປກ່ຽວກັບຝ່າຍຊື້

- ຊື່ຝ່າຍຊື້ : ກຸ່ມບໍລິສັດ ພົງຊັບທະວີ ຈຳກັດຜູ້ດຽວ
- ປະເພດທຸລະກິດ : ກໍ່ສ້າງ ແລະ ສ້ອມແປງເຄຫາສະຖານ, ກໍ່ສ້າງ-ສ້ອມແປງຂົວທາງ ແລະ ສຳຫຼວດ, ອອກແບບ ເຄຫາ, ຂົວທາງ ແລະ ຊົນລະປະທານ
- ວັນທີສ້າງຕັ້ງ : 2001
- ສັນຍາລັກ : ກພຊອ ຫຼື PSTG
- ສຳນັກງານໃຫຍ່ : ບ້ານ ໜອງບົກໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ
- ໃບທະບຽນວິສາຫະກິດ : 0768/ຈທວ, ລົງວັນ 05 ສິງຫາ 2021
- ເລກປະຈຳຕົວຜູ້ເສຍອາກອນ : 885221286-9-00
- ທຶນຈົດທະບຽນ : 3,000,000,000,000 ກີບ
- ມູນຄ່າກຳນົດຮຸ້ນລະ : 3,000,000 ກີບ
- ຈຳນວນຮຸ້ນ : 1,000,000 ຮຸ້ນ
- ເວັບໄຊ : www.phongsupthavy.la
- ໂທລະສັບ : (+856-21) 618 088
- ແຟັກສ : (+856-21) 618 077

1.2 ປະຫວັດການເຄື່ອນໄຫວກິດຈະການ

ກຸ່ມບໍລິສັດ ພົງຊັບທະວີ ຈຳກັດຜູ້ດຽວ (ກພຊອ) ໄດ້ກໍ່ຕັ້ງຂຶ້ນໃນປີ 2001 ໂດຍມີຊື່ວ່າ ບໍລິສັດ ພົງຊັບທະວີ ກໍ່ສ້າງ ຂົວ-ທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເລີ່ມຕົ້ນຈາກການດຳເນີນທຸລະກິດກໍ່ສ້າງ ແລະ ໄດ້ຮັບເໝົາກໍ່ສ້າງເສັ້ນທາງເຂດພູດອຍຈຳນວນຫຼາຍໂຄງການຈາກລັດຖະບານ. ມາເຖິງປີ 2010, ກພຊອ ໄດ້ ປ່ຽນຮູບແບບສັນຍາຮັບເໝົາກໍ່ສ້າງ ແບບດັ້ງເດີມ ມາເປັນ ແບບທັນສະໄໝຂຶ້ນຄື: ຮູບແບບຮັບເໝົາກໍ່ສ້າງທັງ ໝົດແລ້ວສົ່ງມອບໃຫ້ເຈົ້າຂອງໂຄງການ ແລ້ວເກັບເງິນຄືນຈາກເຈົ້າຂອງໂຄງການ ຫຼື ລັດຖະບານ, ຮູບແບບສັນຍາ ໄດ້ປະຕິບັດໃນໂຄງການຕ່າງໆເຊັ່ນ: ໂຄງການກໍ່ສ້າງເສັ້ນທາງ, ໂຄງການກໍ່ສ້າງອາຄານ ແລະ ອື່ນໆ ກັບພາກລັດ, ລັດ ວິສາຫະກິດ ແລະ ເອກະຊົນ ຄຽງຄູ່ກັນນັ້ນກໍ່ໄດ້ດຳເນີນທຸລະກິດດ້ານອະສັງຫາລິມະຊັບຕື່ມອີກ.

ໃນປີ 2011, ກພຊອ ໄດ້ລິເລີ່ມດຳເນີນໂຄງການດ້ານພະລັງງານໄຟຟ້ານ້ຳຕົກຄັ້ງທຳອິດ, ໂດຍມີການສົ່ງເສີມ ຊັບພະຍາກອນໃນດ້ານການອອກແບບ, ການພັດທະນາ ແລະ ການກໍ່ສ້າງ. ສິ່ງນີ້ໄດ້ກາຍເປັນພື້ນຖານອັນສຳຄັນໃນ ດ້ານການລົງທຶນຂອງ ກພຊອ. ກພຊອ ມີໂຮງງານພະລັງງານໄຟຟ້ານ້ຳຕົກ ຈຳນວນ 4 ແຫ່ງ ໂດຍມີກຳລັງຕິດຕັ້ງ

110 MW, ແລະ ມີໂຮງງານໄຟຟ້ານ້ຳຕົກ ທີ່ກຳລັງດຳເນີນການກໍ່ສ້າງ ຈຳນວນ 3 ແຫ່ງ ຊຶ່ງສາມາດຕິດຕັ້ງໄດ້ເພີ່ມອີກ 102 MW. ຄາດຄະເນວ່າ ບໍລິສັດຈະສາມາດເພີ່ມກຳລັງຕິດຕັ້ງຂຶ້ນໄດ້ອີກ 293 MW ຈາກໂຮງງານໄຟຟ້າອີກ 5 ແຫ່ງ ທີ່ກຳລັງຈະກໍ່ສ້າງ. ໃນປີດຽວກັນ ກພຊອ ໄດ້ເພີ່ມທຶນຈົດທະບຽນຈາກທຶນ 1.5 ຕື້ກີບ ເປັນທຶນ 15 ຕື້ກີບ, ແລະ ໄດ້ຂະຫຍາຍທຸລະກິດໃຫ້ມີຫຼາຍຂະແໜງເຊັ່ນ: ຂະແໜງບໍ່ແຮ່, ອຸດສາຫະກຳ, ກະສິກຳ, ອະສັງຫາລິມະຊັບ, ການທ່ອງທ່ຽວ ແລະ ພະລັງງານ.


ນັບແຕ່ປີ 2014, ກພຊອ ໄດ້ມີການຂະຫຍາຍທຸລະກິດອອກເພີ່ມຕື່ມ ໄປສູ່ທຸລະກິດການຄ້າ ແລະ ທຸລະກິດ ກະສິກຳ, ຊຶ່ງສະທ້ອນໃຫ້ເຫັນເຖິງແນວທາງໃນການດຳເນີນທຸລະກິດທີ່ທັນສະໄໝ ແລະ ຕອບສະໜອງຕໍ່ຄວາມຕ້ອງການຂອງສັງຄົມ. ແຕ່ປີ 2014 – 2019, ກພຊອ ໄດ້ສຳເລັດການກໍ່ສ້າງ 8 ໂຄງການ ຊຶ່ງມີກຳລັງຕິດຕັ້ງທັງໝົດ 233.3 MW.

ໃນປີ 2021, ໄດ້ປ່ຽນຊື່ບໍລິສັດເປັນ ກຸ່ມບໍລິສັດ ພົງຊັບທະວີ ຈຳກັດຜູ້ດຽວ (ກພຊອ) ແລະ ໄດ້ເພີ່ມທຶນຈົດທະບຽນຈາກ 15 ຕື້ກີບ ເປັນ 3,000 ຕື້ກີບ.

ໃນປີ 2023, ກພຊອ ມີໂຄງການເຂື່ອນໄຟຟ້ານ້ຳຕົກ 12 ແຫ່ງ ທີ່ກຳລັງຢູ່ໃນລະຫວ່າງການກໍ່ສ້າງ, ໂດຍມີກຳລັງການຕິດຕັ້ງທັງໝົດ 436.5 MW ແລະ ໃນແຜນການທີ່ວາງໄວ້ ຈະປະກອບມີໂຄງການເຂື່ອນໄຟຟ້ານ້ຳຕົກ ຈຳນວນ 55 ແຫ່ງ, ຊຶ່ງຈະມີກຳລັງການຕິດຕັ້ງທັງໝົດ 6,027.2 MW ແລະ ນອກຈາກນີ້ ຍັງມີໂຄງການໄຟຟ້າພະລັງງານລົມຈຳນວນ 8 ໂຄງການ ທີ່ໄດ້ວາງແຜນໄວ້ເຊັ່ນກັນ, ຊຶ່ງກຳລັງຕິດຕັ້ງທັງໝົດ 4,700 MW. ນອກຈາກນັ້ນແລ້ວ ກພຊອ ຍັງກຳລັງດຳເນີນທຸລະກິດພັດທະນາຮັກສາສິ່ງແວດລ້ອມແບບຍືນຍົງເຊັ່ນ: ຂະແໜງການພະລັງງານ, ພື້ນຖານໂຄງລ່າງ, ທະນາຄານ, ອະສັງຫາລິມະຊັບ, ການທ່ອງທ່ຽວ, ບໍ່ແຮ່, ການຄ້າ, ອະສັງຫາລິມະຊັບ ແລະ ກະສິກຳແບບຍືນຍົງ. ແຕ່ລະຂະແໜງທຸລະກິດແມ່ນໄດ້ບົ່ງບອກໃຫ້ເຫັນເຖິງຄວາມມຸ່ງໝັ້ນຢ່າງຕັ້ງໜ້າຂອງ ກພຊອ ເພື່ອການເຕີບໃຫຍ່ຂະຫຍາຍຕົວ ແລະ ສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງຂອງໂລກ, ເພື່ອຍົກລະດັບ ກພຊອ ໃຫ້ຢູ່ໃນແຖວໜ້າຂອງການພັດທະນາແບບຍືນຍົງຢູ່ໃນຂົງເຂດ.

1.3 ການດຳເນີນທຸລະກິດ

ກພຊອ ດຳເນີນທຸລະກິດຫຼາຍຮູບແບບ ນອກຈາກທຸລະກິດດ້ານພະລັງງານໄຟຟ້າແລ້ວຍັງມີທຸລະກິດປະເພດອື່ນໆອີກເຊັ່ນ: ທຸລະກິດດ້ານກໍ່ສ້າງ, ທຸລະກິດດ້ານການຄ້າ, ທຸລະກິດອະສັງຫາລິມະຊັບ, ທຸລະກິດກະສິກຳ, ທຸລະກິດດ້ານການທະນາຄານ, ທຸລະກິດດ້ານການທ່ອງທ່ຽວ ແລະ ທຸລະກິດດ້ານສະກຸນເງິນດິຈິຕອລ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:



- **ທຸລະກິດດ້ານພະລັງງານ**

ດ້ວຍຄວາມມຸ່ງໝັ້ນໃນການເສີມຂະຫຍາຍພະລັງງານແບບຍືນຍົງ, ກພຊອ ຈຶ່ງໄດ້ຫັນປ່ຽນທຸລະກິດຫຼາຍດ້ານກາຍເປັນ ຂະແໜງພະລັງງານນ້ຳ, ຂະແໜງພະລັງງານແສງຕາເວັນ, ຂະແໜງພະລັງງານລົມ, ຊຶ່ງວ່າແຕ່ລະຂະແໜງພະລັງງານໃກ້ຈະບັນລຸເປົ້າໝາຍທີ່ຍິ່ງໃຫຍ່ຂອງ ກພຊອ ໄດ້ສະທ້ອນໃຫ້ເຫັນເຖິງແນວທາງດ້ານພະລັງງານສະອາດທີ່ເນັ້ນໃສ່ອະນາຄົດ.

- **ທຸລະກິດດ້ານພື້ນຖານໂຄງລ່າງ**

ດ້ວຍຄວາມຊ່ຽວຊານທີ່ເປັນພື້ນຖານ, ກພຊອ ໄດ້ດຳເນີນວຽກງານດ້ານພື້ນຖານໂຄງລ່າງທີ່ກວມເອົາທຸກຢ່າງ ຊຶ່ງນັບຕັ້ງແຕ່ເສັ້ນທາງ ແລະ ຂົວຕ່າງໆ ທີ່ຊ່ວຍໃນການເຊື່ອມຈອດບັນດາຊຸມຊົນຕ່າງໆເຂົ້າຫາກັນ ໄປຈົນເຖິງ ບັນດາຜົນງານອັນພົ້ນເດັ່ນທາງດ້ານສະຖາປັດຕະຍະກຳຂອງບໍລິສັດ.

- **ທຸລະກິດດ້ານການທະນາຄານ**

ໂດຍການກ້າວເຂົ້າສູ່ຂະແໜງການເງິນ, ທະນາຄານສົ່ງເສີມກະສິກຳ ໄດ້ກາຍເປັນຜູ້ສະໜັບສະໜຸນດ້ານເຄື່ອງມືຂອງຂະແໜງການກະສິກຳ ແລະ ປ່າໄມ້. ໂດຍໄດ້ສະແດງໃຫ້ເຫັນຄວາມມຸ່ງໝັ້ນຢ່າງສຸດໃຈ ໃນການພັດທະນາອຸດສາຫະກຳທີ່ສຳຄັນເຫຼົ່ານີ້, ທະນາຄານ ຈຶ່ງໄດ້ດຳເນີນຢູ່ບົນພື້ນຖານທີ່ບໍ່ຫວັງຜົນກຳໄລ. ພາລະກິດຫຼັກຂອງຕົນ ແມ່ນເພື່ອສົ່ງເສີມການເຕີບໂຕແບບຍືນຍົງ ໂດຍການສະໜອງສິນເຊື່ອທີ່ມີດອກເບ້ຍຕ່ຳໃຫ້ແກ່ຊາວກະສິກອນ, ໂດຍຮັບປະກັນວ່າເຂົາເຈົ້າມີຊັບພະຍາກອນທາງດ້ານການເງິນທີ່ຈຳເປັນ ເພື່ອສ້າງຄວາມຈະເລີນເຕີບໂຕ.

- **ທຸລະກິດອະສັງຫາລິມະຊັບ**

ກພຊອ ໄດ້ສ້າງຊື່ສຽງທີ່ສຳຄັນໃນຂົງເຂດອະສັງຫາລິມະຊັບ, ໂດຍມີການພັດທະນາຄຸນສົມບັດທີ່ປະສົມປະສານລະຫວ່າງ ການໃຊ້ງານເຂົ້າກັບຄວາມງາມ ເພື່ອຕອບສະໜອງຕໍ່ກັບການຂະຫຍາຍຕົວຂອງປະຊາກອນໃນຕົວເມືອງ.

- **ທຸລະກິດດ້ານການທ່ອງທ່ຽວ**

ດ້ວຍຄວາມຊ່ຽວຊານໃນການພັດທະນາຊັບພະຍາກອນການທ່ອງທ່ຽວ, ກພຊອ ໄດ້ສະໜອງການບໍລິການດ້ານທີ່ພັກພາອາໄສທີ່ມີຄວາມຫຼູຫຼາ ແລະ ຫຼາກຫຼາຍປະເພດ ຊຶ່ງລວມມີ: ຣີສອດ ແລະ ໂຮງແຮມ, ຄ່ຽງຄູ່ໄປກັບການສະໜອງປະສົບການດ້ານການຮັບປະທານອາຫານທີ່ດີເລີດໃນຮ້ານອາຫານຂອງ ກພຊອ. ແນວທາງແບບລວມເອົາທຸກສິ່ງຢ່າງໄວ້ດ້ວຍກັນນີ້ ຊ່ວຍຮັບປະກັນໄດ້ວ່ານັກທ່ອງທ່ຽວຈະໄດ້ຮັບຄວາມເພີດເພີນກັບຄວາມສະດວກສະບາຍທີ່ບໍ່ເຄີຍພົບພໍ້ມາກ່ອນ ແລະ ໃຫ້ເປັນຊ່ວງເວລາທີ່ໜ້າຈົດຈຳຕໍ່ຜູ້ເຂົ້າມາໃຊ້ບໍລິການ.

- **ທຸລະກິດດ້ານບໍ່ແຮ່**

ປະຈຸບັນນີ້, ກພຊອ ໄດ້ສຸມໃສ່ການຂຸດຄົ້ນສຳລັບແຮ່ຫາຍາກ ແລະ ໂປຕັສ. ມີສາມພື້ນທີ່ໂຄງການສຳລັບແຮ່ຫາຍາກ, ພື້ນທີ່ໂຄງການທີໜຶ່ງແມ່ນຢູ່ເມືອງຄູນ, ແຂວງ ຊຽງຂວາງ ແລະ ສອງພື້ນທີ່ໂຄງການແມ່ນຢູ່ແຂວງ

ຫົວພັນ ຊຶ່ງແມ່ນເມືອງ ຫົວເມືອງ ແລະ ເມືອງຮ້ຽມ. ສຳລັບພື້ນທີ່ສຳຫຼວດໂຄງການໂປຕັສແມ່ນມີຢູ່ ເມືອງ ທຸລະຄົມ ແລະ ເມືອງ ວຽງຄຳ, ແຂວງ ວຽງຈັນ.

- **ທຸລະກິດດ້ານການຄ້າ**

ເພື່ອໃຫ້ສອດຄ່ອງກັບເປົ້າໝາຍດ້ານສິ່ງແວດລ້ອມລະດັບໂລກ, ກພຊອ ໄດ້ທຸ່ມເທກຳລັງແຮງຕໍ່ກັບການສ້າງ ມາດຕະຖານແບບພ້ອມຮັບມືເຂົ້າໃນການຄຸ້ມຄອງ ແລະ ຫຼຸດຜ່ອນການປ່ອຍກາກບອນ. ໃນຖານະຜູ້ນຳທາງດ້ານ ອຸດສາຫະກຳທີ່ມີຄວາມຮັບຜິດຊອບ, ກພຊອ ໃຫ້ບຸລິມະສິດຕໍ່ກັບຄວາມຍືນຍົງໃນທົ່ວທຸກຂົງເຂດວຽກງານການ ບໍລິການທີ່ຫຼາກຫຼາຍຂອງພວກເຮົາ, ຊຶ່ງລວມມີ ທາງເລືອກທາງດ້ານພະລັງງານ, ການພັດທະນາພື້ນຖານໂຄງລ່າງ ແລະອື່ນໆ...

- **ທຸລະກິດກະສິກຳ**

ດ້ວຍວິໄສທັດໃນດ້ານການເຮັດກະສິກຳແບບຍືນຍົງ, ກພຊອ ໄດ້ປະກອບສ່ວນເຂົ້າໃນການຄ້ຳປະກັນສະ ບຽງອາຫານ ແລະ ສິ່ງເສີມການກະສິກຳທີ່ເປັນມິດກັບສິ່ງແວດລ້ອມ. ກພຊອ ໄດ້ລະດົມທີມງານມືອາຊີບໃນການ ວາງແຜນ ແລະ ດຳເນີນການພັດທະນາພື້ນທີ່. ປະຈຸບັນນີ້, ໄດ້ມີການປູກທຸລຽນໃນພື້ນທີ່ 65 ເຮັກຕ້າ ໃນເມືອງ ສະໜາມໄຊ ແຂວງ ອັດຕະປື ແລະ ພື້ນທີ່ການປູກກາເຟແມ່ນ 50 ເຮັກຕ້າ ໃນເມືອງ ປາກຊ່ອງ, ແຂວງ ຈຳປາ ສັກ.

- **ທຸລະກິດດ້ານສະກຸນເງິນດິຈິຕອລ**

ສະຖານທີ່ຕັ້ງຢູ່ ບ້ານແສງສະຫວ່າງ, ເມືອງແກ້ວອຸດົມ, ແຂວງວຽງຈັນ, ຊຶ່ງຫ່າງຈາກນະຄອນຫຼວງວຽງຈັນ ປະມານ 86 ກິໂລແມັດ, ແຕ່ຫາກນຳໃຊ້ທາງດ່ວນ ຈະໃຊ້ເວລາ 1 ຊົ່ວໂມງ 30 ນາທີ, ພາຍໃນໂຮງງານປະກອບມີ 4 ອາຄານ. ມີເຄື່ອງຂຸດຈານວນ 24,010 ເຄື່ອງ, ໂດຍນຳໃຊ້ອິນເຕີເນັດຄວາມໄວສູງ lease line ຜ່ານສາຍສົ່ງ OPGW ຂອງສາມເຄືອຂ່າຍ.

ແຫຼ່ງທີ່ມາ: ເວັບໄຊຂອງ ກພຊອ

1.4 ທຶນຈົດທະບຽນ

ກພຊອ ມີທຶນຈົດທະບຽນມູນຄ່າ 3,000,000,000,000 ກີບ (ສາມພັນຕື້ກີບ) ໂດຍແບ່ງເປັນຮຸ້ນສາມັນທັງ ໝົດ 1,000,000 ຮຸ້ນ ແຕ່ລະຮຸ້ນມີມູນຄ່າກຳນົດ (Par Value) 3,000,000 ກີບ/ຮຸ້ນ.

1.5 ໂຄງສ້າງການຖືຮຸ້ນ

ໂຄງສ້າງຜູ້ຖືຮຸ້ນຂອງ ກພຊອ ມີລາຍລະອຽດດັ່ງລຸ່ມນີ້:

ລຳດັບ	ຜູ້ຖືຮຸ້ນ	ຈຳນວນຮຸ້ນ	(%)
1	ທ່ານ ພິງສະຫວັດ ເສນາພອນ	1,000,000	100
	ລວມ	**1,000,000**	**100**

<u>ໝາຍເຫດ:</u> ມີຜູ້ຖືຮຸ້ນພຽງຜູ້ດຽວ ເນື່ອງຈາກບໍລິສັດດຳເນີນທຸລະກິດໃນຮູບແບບຈຳກັດຜູ້ດຽວ.

1.6 ຜູ້ມີອຳນາດຄວບຄຸມຂອງບໍລິສັດ

ອີງຕາມໂຄງສ້າງຜູ້ຖືຮຸ້ນຂອງ ກພຊ ທີ່ມີຜູ້ຖືຮຸ້ນພຽງແຕ່ຜູ້ດຽວ. ດັ່ງນັ້ນ, ຜູ້ມີອຳນາດຄວາມຄຸມຈຶ່ງມີພຽງ ແຕ່ຜູ້ດຽວ ຄື: ທ່ານ ພົງສະຫວັດ ເສນາພອນ ຖືຮຸ້ນ ຮ້ອຍສ່ວນຮ້ອຍ (100%).


1.7 ສະພາບໍລິຫານ

ສະພາບໍລິຫານຂອງ ກພຊ ປະກອບມີສະມາຊິກທັງໝົດ 4 ທ່ານ ມີລາຍລະອຽດດັ່ງນີ້:

ລຳດັບ	ລາຍຊື່	ຕຳແໜ່ງ
1	ທ່ານ ພົງສະຫວັດ ເສນາພອນ	ປະທານສະພາບໍລິຫານ
2	ທ່ານ ບຸນທ່ຽງ ດວງປະເສີດ	ຮອງປະທານສະພາບໍລິຫານ
3	ທ່ານ ນາງ ວຽງສະຫວັນ ເສນາພອນ	ຮອງປະທານສະພາບໍລິຫານ
4	ທ່ານ ກຸນລະພັນ ວົງນາທີ	ຮອງປະທານສະພາບໍລິຫານ

1.8 ໂຄງປະກອບການຈັດຕັ້ງ

ໂຄງຮ່າງການຈັດຕັ້ງຂອງ ກພຊ ປະກອບມີລາຍລະອຽດດັ່ງນີ້:



1.9 ຄະນະຜູ້ບໍລິຫານ

ຄະນະຜູ້ບໍລິຫານຂອງ ກພຊ ປະກອບມີລາຍລະອຽດດັ່ງນີ້:

ລຳດັບ	ລາຍຊື່	ຕຳແໜ່ງ
1	ທ່ານ ບຸນເລີດ ສິນລາດຊະວົງ	ຜູ້ອຳນວຍການ ຝ່າຍການເງິນ-ບັນຊີ
2	ທ່ານ ຄຳຕັນ ວົງພັນປະເສີດ	ຜູ້ອຳນວຍການ ຝ່າຍແຮ່ທາດ
3	ທ່ານ ສົມລັດ ເມກອາກາດ	ຜູ້ອຳນວຍການ ຝ່າຍນິຕິກຳ-ສັນຍາ ແລະ ພະລັງງານນ້ຳ
4	ທ່ານ ໝອນ ນວນສີວົງ	ຜູ້ອຳນວຍການ ຝ່າຍສິນເຊື່ອການບອນ ແລະ ສິ່ງແວດລ້ອມ
5	ທ່ານ ພິລາວັດ ພຸ້ມທອງ	ຜູ້ອຳນວຍການ ຝ່າຍພະລັງງານຄວາມຮ້ອນ
6	ທ່ານ ຄູນ ບົວແພງພັນ	ຜູ້ອຳນວຍການ ຝ່າຍພະລັງງານລົມ

1.10 ຖານະການເງິນ ແລະ ອັດຕາສ່ວນທາງການເງິນ

1.1.1 ໃບລາຍງານຖານະການເງິນ

ຫົວໜ່ວຍ (ລ້ານກີບ)

ໃບລາຍງານຖານະການເງິນ	2023	2024	2025
ລວມຊັບສິນບໍ່ ໝຸນວຽນ	6,207,403	11,859,865	24,247,182
ລວມຊັບສິນໝຸນວຽນ	9,099,791	7,223,044	4,885,465
ລວມຊັບສິນທັ້ງໝົດ	**15,307,195**	**19,082,909**	**29,132,647**
ລວມໜີ້ສິນບໍ່ໝຸນວຽນ	7,892,294	10,580,044	16,185,929
ລວມໜີ້ສິນໝຸນວຽນ	259,923	257,465	2,856,837
ລວມໜີ້ສິນທັ້ງໝົດ	**8,152,217**	**10,837,509**	**19,042,766**
ລວມສ່ວນຂອງຜູ້ຖືຮຸ້ນ	**7,154,978**	**8,245,400**	**10,089,881**

ໝາຍເຫດ: ແຫຼ່ງຂໍ້ມູນຈາກ ກພຊ.

1.1.2 ໃບລາຍງານຜົນການດຳເນີນງານ

ຫົວໜ່ວຍ (ລ້ານກີບ)

ໃບລາຍງານຜົນການດຳເນີນງານ	2023	2024	2025
ລວມລາຍຮັບ	33,734	1,705,471	157,109
ຕົ້ນທຶນການຂາຍ	(31,540)	(719,820)	(1,435,746)
ຜົນໄດ້ຮັບກ່ອນການເສຍອາກອນ	2,194	985,651	(1,278,637)
ຜົນໄດ້ຮັບສຸດທິ	**2,194**	**985,651**	**(1,278,637)**

ໝາຍເຫດ: ແຫຼ່ງຂໍ້ມູນຈາກ ກພຊ.

1.1.3 ອັດຕາສ່ວນທາງການເງິນທີ່ສຳຄັນ

ອັດຕາສ່ວນທາງການເງິນ	ຫົວໜ່ວຍ	2023	2024	2025
ອັດຕາສ່ວນເງິນທຶນໝຸນວຽນ (Current ratio)	ເທົ່າ	35.01	28.05	1.71
ອັດຕາຜົນຕອບແທນຕໍ່ຊັບສິນ (ROA)	%	0.01	5.17	(4.39)
ອັດຕາຜົນຕອບແທນຕໍ່ສ່ວນຂອງຜູ້ຖືຮຸ້ນ (ROE)	%	0.03	11.95	(12.67)
ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ(D/E)	ເທົ່າ	1.14	1.31	1.89
ກຳໄລຕໍ່ຮຸ້ນ (EPS)	ກີບ	0.002	0.986	(1.279)
ມູນຄ່າຕາມບັນຊີ (BV)	ລ້ານກີບ	7,154,978	8,245,400	10,089,881

2. ຂໍ້ມູນກ່ຽວກັບຝ່າຍຂາຍ

2.1 ຂໍ້ມູນທົ່ວໄປກ່ຽວກັບຝ່າຍຂາຍ

- ຊື່ຝ່າຍຂາຍ : ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
- ປະເພດທຸລະກິດ : ຜະລິດໄຟຟ້າເພື່ອຂາຍຍົກໃຫ້ກັບ ຟຟລ ແລະ ລວມທັງ ດຳເນີນການພັດທະນາລະບົບສາຍສົ່ງ ແລະ ສະຖານີໄຟຟ້າຫາກມີຄວາມຈຳເປັນ; ລົງທຶນ ຫຼື ຮ່ວມທຶນ ໃນໂຄງການຜະລິດໄຟຟ້າອື່ນໆ; ໃຫ້ບໍລິການໃນການບໍລິຫານ ແລະ ບຳລຸງຮັກສາໂຄງການຜະລິດໄຟຟ້າອື່ນໆ.
- ວັນທີສ້າງຕັ້ງ : 15 ທັນວາ 2010
- ສັນຍາລັກ : ຜ-ຟຟລ ຫຼື EDL-Gen
- ສຳນັກງານໃຫຍ່ : ຊັ້ນ 7, ສຳນັກງານໃຫຍ່ຕຶກອາຄານ ລັດວິສາຫະກິດ ໄຟຟ້າລາວ, ຖະໜົນ ມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ.
- ໃບທະບຽນວິສາຫະກິດ : 651/ຈທວ
- ເລກປະຈຳຕົວຜູ້ເສຍອາກອນ : 502956560-9-00
- ທຶນຈົດທະບຽນ : 6,717,214,788,000 ກີບ
- ມູນຄ່າກຳນົດຮຸ້ນລະ : 4,000 ກີບ
- ຈຳນວນຮຸ້ນ : 1,679,303,697 ຮຸ້ນ
- ເວັບໄຊ : http://www.edlgen.com.la
- ໂທລະສັບ : (+856-21) 316-142

2.2 ປະຫວັດຄວາມເປັນມາ ແລະ ພັດທະນາການຂອງບໍລິສັດ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 15 ທັນວາ 2010 ໂດຍລັດວິສາຫະກິດໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດ ມາເປັນຊັບສິນສ້າງຕັ້ງ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2, ເຂື່ອນໄຟຟ້າແຊລະບ ແລະ ເຂື່ອນໄຟຟ້ານ້ຳຊອງ, ລວມມີກຳລັງຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະ ພະນັກງານສຳນັກງານໃຫຍ່ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2,605,792,200,000 ກີບ ແລະ ຄິດເປັນຮຸ້ນ 651,448,050 ຮຸ້ນ (ຮຸ້ນລະ 4,000 ກີບ). ຈາກນັ້ນ ບໍລິສັດໄດ້ຕົກລົງໃຫ້ມີການເພີ່ມທຶນດ້ວຍການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ດ້ວຍຈຳນວນຮຸ້ນ 217,149,000 ຮຸ້ນ, ໃນວັນທີ 07 ມັງກອນ 2011, ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3,474,388,200,000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868,597,050 ຮຸ້ນ.ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບລາວ ເພື່ອ

ຈຳໜ່າຍຮຸ້ນໃນຕະຫຼາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ສັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອີກ 25% ແມ່ນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ໃນກາງປີ 2012, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນສາມັນແບບສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ ແລະ ແບບສະເໜີຂາຍຕໍ່ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງປະກອບມີ: ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມສັດສ່ວນການຖືຮຸ້ນ) ເຮັດໃຫ້ກຳລັງຕິດຕັ້ງທັງໝົດຂອງຜ-ຟຟລ ເພີ່ມຂຶ້ນເປັນ 881 MW. ດັ່ງນັ້ນ ໃນທ້າຍປີ 2012, ຜ-ຟຟລ ມີທຶນຈົດທະບຽນເປັນເງິນ 4,904,867,060,000 ກີບ ແລະ ມີຮຸ້ນທັງໝົດ 1,226,216,765 ຮຸ້ນ, ໃນນັ້ນ ຟຟລ ແມ່ນຍັງຮັກສາສັດສ່ວນການຖືຮຸ້ນໃນ ຜ-ຟຟລ 75% ເໝືອນເດີມ.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6,500 ລ້ານ ບາດ. ທຶນຈຳນວນດັ່ງກ່າວນີ້ແມ່ນຖືກນຳໃຊ້ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມຈຳນວນ 392 MW, ໃນນັ້ນມີໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອີກ 5 ໂຄງການລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນເດືອນກັນຍາ 2015, ຜ-ຟຟລ ໄດ້ອອກຮຸ້ນເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2,754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດເພີ່ມຕື່ມຈຳນວນ 386.2 MW, ໃນນັ້ນມີໂຄງການຜະລິດໄຟຟ້າທີ່ຈະຮັບໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277.9 MW, ການລົງທຶນໃນຮຸ້ນຂອງ ຟຟລ ໃນບັນດາໂຄງການ IPP ຈຳນວນ 6 ໂຄງການລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108.3 MW. ເຮັດໃຫ້ທຶນຈົດທະບຽນເປັນເງິນ 6,717,214,788,000 ກີບ ແລະ ມີຮຸ້ນທັງໝົດ 1,679,303,697 ຮຸ້ນ, ໃນນັ້ນ ຟຟລ ແມ່ນຍັງຮັກສາສັດສ່ວນການຖືຮຸ້ນໃນ ຜ-ຟຟລ 75% ເໝືອນເດີມ.

ໃນວັນທີ 24 ທັນວາປີ 2015, ຜ-ຟຟລ ໄດ້ຮັບໂອນເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ເຮັດໃຫ້ມີກຳລັງຕິດຕັ້ງ ທັງໝົດເພີ່ມຂຶ້ນເປັນ 1,131 MW.

ໃນວັນທີ 2 ກັນຍາ 2016, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາ ສະຫະລັດ ທີ່ປະເທດໄທ, ທຶນຈຳນວນດັ່ງກ່າວນີ້ແມ່ນໄດ້ຖືກນຳໃຊ້ໃນ 10 ໂຄງການ ປະກອບມີ: ໂຄງການເຊລະບ້ຳພາກຂະຫຍາຍ, ໂຄງການເຊເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

ວັນທີ 14 ທັນວາ 2017, ໄດ້ສ້າງຕັ້ງບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ.

ວັນທີ 18 ມັງກອນ ປີ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້ານ້ຳແບ່ງ (10%) ຕາມສັດສ່ວນ ຟຟລ ຖືຮຸ້ນເທົ່າກັບ 3.4 MW, ວັນທີ 4 ກຸມພາ ປີ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້າດອນສະໂຮງ (20%) ຕາມສັດສ່ວນ ຟຟລ ຖືຮຸ້ນເທົ່າກັບ 52 MW. ໃນວັນທີ 13 ກໍລະກົດ 2018, ຜ-ຟຟລ ໄດ້ອອກຈຳ

ໜ່າຍຮຸ້ນກູ້ສະກຸນເງິນບາດທີ່ປະເທດໄທ ຊຶ່ງສາມາດຂາຍໄດ້ 13,660.40 ລ້ານບາດ ເພື່ອລົງທຶນເຂົ້າໃນການຊື້ຮຸ້ນ ຂອງໂຄງການ ເຂື່ອນໄຟຟ້າໄຊຍະບູລີ ແລະ ດອນສະໂຮງ; ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້ານ້ຳລອງ (20%) ຕາມ ສັດສ່ວນ ຟຟລ ຖືຮຸ້ນເທົ່າກັບ 1 MW ແລະ ໂຮງງານຜະລິດໄຟຟ້າພະລັງງານແສງຕາເວັນ (60%) ຕາມສັດສ່ວນ ຜ-ຟຟລ ຖືຮຸ້ນເທົ່າກັບ 19.2 MW.

ໃນປີ 2019, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້າໄຊຍະບູລີໃນວັນທີ 19 ມີນາ 2019 ຕາມສັດສ່ວນ ທີ່ ຟຟລ ຖືຮຸ້ນ 20% ເທົ່າກັບກຳລັງການຕິດຕັ້ງ 257 MW; ໃນເດືອນ ພຶດສະພາ 2019, ຜ-ຟຟລ ໄດ້ຮັບໂອນ ຮຸ້ນ ຂອງເຂື່ອນໄຟຟ້ານ້ຳມັງ 1 ຕາມສັດສ່ວນ ຟຟລ ຖືຮຸ້ນ 10% ເທົ່າກັບ 6.4 MW ແລະ ເຂື່ອນໄຟຟ້ານ້ຳອູ 2.5 ແລະ 6 ຕາມສັດສ່ວນທີ່ ຟຟລ ຖືຮຸ້ນ 15% ເທົ່າກັບ 18 MW, 36 MW ແລະ 27 MW ຕາມລຳດັບເຮັດໃຫ້ ຜ-ຟຟລ ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 1,551 MW.

ໃນປີ 2020 ກຳລັງການຕິດຕັ້ງຂອງໂຄງການພະລັງງານໄຟຟ້າ ທີ່ມີການດຳເນີນການຜະລິດແລ້ວຂອງ ຜ-ຟຟລ ທັງໝົດ 1,682.6 MW, ໃນນັ້ນໂຄງການພະລັງງານໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງຮ້ອຍເປີເຊັນມີທັງໝົດ 10 ໂຄງການ ລວມເປັນກຳລັງຕິດຕັ້ງ 699 MW (ນັບລວມໂຄງການພາກຂະຫຍາຍນ້ຳງື່ມ 1), ແລະ ໂຄງການຜູ້ ຜະລິດໄຟຟ້າເອກະລາດ (IPPs) ທີ່ ຜ-ຟຟລ ເຂົ້າຖືຮຸ້ນທັງໝົດ 16 ໂຄງການ, ໃນນັ້ນມີໂຄງການໄຟຟ້າ ພະລັງງານນ້ຳຈຳນວນ 15 ໂຄງການ ແລະ ໂຄງການໄຟຟ້າພະລັງງານແສງຕາເວັນ ລວມກຳລັງຕິດຕັ້ງຕາມສັດສ່ວນ ທັງຫມົດ 983.6 MW.

ວັນທີ 19 ກຸມພາ ປີ 2021 ໄດ້ມີການໂອນຮຸ້ນ ຜ-ຟຟລ ທີ່ ລັດວິສາຫະກິດໄຟຟ້າລາວ ຖືຄອງ ຈຳນວນ 24% ໃຫ້ແກ່ ບໍລິສັດ ພີງຊັບທະວີກໍ່ສ້າງ ຂົວ-ທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ແລະ ຕໍ່ ມາໃນວັນທີ 28 ກຸມພາ 2024, ກພຊອ ໄດ້ຂາຍຮຸ້ນ ຜ-ຟຟລ ສັດສ່ວນ 24% ຄືນໃຫ້ ຟຟລ.

ປີ 2022 ກຳລັງການຕິດຕັ້ງຂອງໂຄງການພະລັງງານໄຟຟ້າ ທີ່ມີການດຳເນີນການຜະລິດແລ້ວຂອງ ຜ-ຟຟລ ທັງໝົດ 1,776.22 MW, ໃນນັ້ນໂຄງການພະລັງງານໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງຮ້ອຍເປີເຊັນມີທັງໝົດ 10 ໂຄງການ ລວມເປັນກຳລັງຕິດຕັ້ງ 699 MW (ນັບລວມໂຄງການພາກຂະຫຍາຍນ້ຳງື່ມ 1), ແລະ ໂຄງການຜູ້ ຜະລິດໄຟຟ້າເອກະລາດ (IPPs) ທີ່ ຜ-ຟຟລ ເຂົ້າຖືຮຸ້ນທັງໝົດ 18 ໂຄງການ, ລວມກຳລັງຕິດຕັ້ງຕາມສັດສ່ວນ 1,077.22 MW.

ທ້າຍປີ 2023 ກຳລັງການຕິດຕັ້ງຂອງໂຄງການພະລັງງານໄຟຟ້າ ທີ່ມີການດຳເນີນການຜະລິດແລ້ວຂອງ ຜ-ຟຟລ ທັງໝົດ 1,736.72 MW, ໃນນັ້ນໂຄງການພະລັງງານໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງ 100% ມີທັງໝົດ 10 ໂຄງການ ລວມເປັນກຳລັງຕິດຕັ້ງ 717 MW (ລວມໂຄງການພາກຂະຫຍາຍນ້ຳງື່ມ 1 ຈັກເບີ 7&8, ເຊເສັດ 2 ແລະ ເຊລະບໍ) ແລະ ໂຄງການຜູ້ຜະລິດໄຟຟ້າເອກະລາດ (IPPs) ທີ່ ຜ-ຟຟລ ເຂົ້າຖືຮຸ້ນ ລວມກຳລັງຕິດຕັ້ງຕາມ ສັດສ່ວນ 1,019.72 MW.

ປີ 2024 ຜ-ຟຟລ ສາມາດສົ່ງລວມຕົວເລກການຜະລິດຕົວຈິງໄດ້ທັງໝົດ 6,969.65 GWh ເທົ່າກັບ 98.54% ຂອງແຜນການ ແລະ ທຽບໃສ່ປີຜ່ານມາ ເທົ່າກັບ 93.77% ຊຶ່ງມີລາຍລະອຽດດັ່ງນີ້: ການຜະລິດຂອງ ບັນດາເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ 100% ສາມາດປະຕິບັດຕົວຈິງໄດ້ 2,558.17 GWh ຫລື ເທົ່າກັບ 102.06% ຂອງແຜນການ, ໂດຍທຽບໃສ່ປີຜ່ານມາ ເທົ່າກັບ 85.42%. ການຜະລິດຈາກບັນດາໂຄງການຜູ້ຜະລິດໄຟຟ້າ ເອກະລາດຕາມສັດສ່ວນ ທີ່ ຜ-ຟຟລ ເຂົ້າຖືຮຸ້ນ ສາມາດປະຕິບັດໄດ້ 4,411.48 GWh ຫຼື ເທົ່າ 96.60% ຂອງ ແຜນການ ແລະ ເທົ່າ 99.41% ທຽບໃສ່ປີຜ່ານມາ.

2.3 ການດຳເນີນທຸລະກິດ

ນັບແຕ່ປີ 2010 ເຖິງປະຈຸບັນ ຜ-ຟຟລ, ໄດ້ດຳເນີນທຸລະກິດ ໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ຜ-ຟຟລ ໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງໃນແຕ່ລະໄລຍະກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວຂ້ອງກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານ, ສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ຜ່ານການຈັດຕັ້ງປະຕິບັດ ຜົນການດຳເນີນທຸລະກິດ ປະຈຳໄຕມາດ 03 ປີ 2025 ສາມາດສັງລວມໄດ້ດັ່ງນີ້:

<u>ດ້ານການຜະລິດ</u>: ປະຈຳໄຕມາດ 03 ປີ 2025 ສາມາດສັງລວມໄດ້ດັ່ງນີ້: ແຜນການຜະລິດທົ່ວ ຜ-ຟຟລ ແມ່ນເທົ່າກັບ 2,261.62 GWh, ປະຕິບັດຕົວຈິງໄດ້ 2,665.98 GWh ຫຼື ເທົ່າກັບ 117.88% ຂອງແຜນການ. ສຳລັບການຜະລິດຂອງເຂື່ອນທີ ຜ-ຟຟລ ຄຸ້ມຄອງ 100% ແມ່ນສາມາດປະຕິບັດໄດ້ 1,003.05 GWh ເກີນແຜນການ 7.64% ແລະ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາແມ່ນ ເພີ່ມຂຶ້ນ 0.27%, ສາເຫດທີ່ເກີນແຜນການ ແມ່ນເນື່ອງມາຈາກ ມີຝົນຕົກຫຼາຍໃນບໍລິເວນເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເຮັດໃຫ້ປະລິມານນ້ຳໄຫຼເຂົ້າອ່າງຂອງເຂື່ອນທີ່ ຜ-ຟຟລ ຄຸ້ມຄອງເກີນແຜນ ເປັນຕົ້ນແມ່ນເຂື່ອນໄຟຟ້າ ນ້ຳຄານ 2 ເກີນແຜນການ 115.77%, ເຂື່ອນໄຟຟ້ານ້ຳຊອງ ເກີນແຜນ 106.49% ແລະ ເຂື່ອນໄຟຟ້າເຊເສັດ 1 ເກີນແຜນ 55.00%.

ຕາຕະລາງ ການຜະລິດພະລັງງານໄຟຟ້າປະຈຳ ໄຕມາດ 03 ປີ 2025

ລາຍລະອຽດ	ປະຈຳໄຕມາດ 3 ປີ 2025			ປະຈຳໄຕມາດ 3 ປີ 2024	
	ປະຕິບັດໄດ້ຕົວຈິງ	ແຜນການ	ທຽບແຜນການ	ປະຕິບັດໄດ້ຕົວຈິງ	ທຽບເປັນ
	GWh	GWh	%	GWh	%
ເຂື່ອນ ຜ-ຟຟລ ຄຸ້ມຄອງ	1,003.05	931.88	107.64	1,000.35	100.27
ການຜະລິດໂຄງການ IPPs	1,662.93	1,329.74	125.06	1,433.02	116.04
ລວມ	2,665.98	2,261.62	117.88	2,433.37	109.56

<u>ດ້ານລາຍຮັບ</u>: ຜ-ຟຟລ ມີລາຍຮັບ ໃນໄຕມາດ 03 ປີ 2025 ລວມທັງໝົດຈຳນວນ 2,697,934 ລ້ານກີບ, ທຽບໃສ່ໄລຍະດຽວກັນເພີ່ມຂຶ້ນ 1,627,372 ລ້ານກີບ, ສາເຫດມາຈາກລາຍຮັບຈາກການຂາຍກະແສໄຟ, ລາຍຮັບອື່ນໆ ແລະ ກຳໄລຂອງຮຸ້ນຈາກການເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ.

<u>ດ້ານລາຍຈ່າຍ</u>: ຜ-ຟຟລ ມີລາຍຈ່າຍລວມທັງໝົດຈຳນວນ 636,182 ລ້ານກີບ, ທຽບໃສ່ໄລຍະດຽວກັນຫຼຸດລົງ 1,597,306 ລ້ານກີບ, ສາເຫດຫຼັກມາຈາກການຮັດກຸມທາງດ້ານຕົ້ນທຶນການຂາຍ ເປັນຕົ້ນແມ່ນບັນດາລາຍຈ່າຍ, ຄ່າສ້ອມແປງຂອງບັນດາເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ແລະ ການຂາດທຶນ ຈາກອັດຕາແລກປ່ຽນຫຼຸດລົງ.

<u>ກຳໄລສຸດທິໃນການດຳເນີນທຸລະກິດ</u>: ຜົນການດຳເນີນທຸລະກິດ ຂອງ ຜ-ຟຟລ ໃນໄຕມາດ 03 ປີ 2025 ມີກຳໄລ 2,061,752 ລ້ານກີບ.

ຕາຕະລາງ ລາຍຮັບ, ລາຍຈ່າຍ ແລະ ກຳໄລ (ຂາດທຶນ) ປະຈຳໄຕມາດ 3 ປີ 2025

ລ/ດ	ເນື້ອໃນ	ໄຕມາດ 3 ປີ 2025 (ລ້ານກີບ)	ໄຕມາດ 3 ປີ 2024 (ລ້ານກີບ)	ຈຳນວນປ່ຽນແປງ (ລ້ານກີບ)	ທຽບໃສ່ໄຕມາດ 3 ປີ 2024 ເປັນ (%)
		1	2	3=1-2	4=3/2
I	ລາຍຮັບລວມ	2,697,934	1,070,562	1,627,372	152.01
1	ລາຍຮັບຈາກການຂາຍກະແສໄຟ	1,002,281	478,809	523,472	109.33
2	ລາຍຮັບອື່ນໆ	900,578	33,969	866,609	2551.18
3	ກຳໄລຂອງຮຸ້ນຈາກການເງິນລົງທຶນໃນວິສາຫະກິດຂາຮຸ້ນແລະບໍລິສັດຮຸ້ນສ່ວນ	795,075	557,784	237,291	42.54
II	ລາຍຈ່າຍລວມ	636,182	2,233,488	(1,597,306)	(71.52)
1	ລາຍຈ່າຍຕົ້ນທຶນການຂາຍ	169,035	176,458	(7,423)	(4.21)
2	ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	82,862	102,154	(19,292)	(18.89)
3	ລາຍຈ່າຍທາງການເງິນ	361,770	338,337	23,433	6.93
4	ຂາດທຶນຈາກອັດຕາແລກປ່ຽນ	22,465	1,616,519	(1,594,054)	(98.61)
5	ອາກອນກຳໄລ	50	20	30	150
	ກຳໄລສຸດທິ	2,061,752	(1,162,926)	3,224,678	277.29

ໝາຍເຫດ: ອີງຕາມໃບລາຍງານການເງິນແບບລວມ

2.4 ທຶນຈົດທະບຽນ

ຜ-ຟຟລ ມີທຶນຈົດທະບຽນມູນຄ່າ 6,717,214,788,000 ກີບ ໂດຍແບ່ງເປັນຮຸ້ນສາມັນທັງໝົດ 1,679,303,697 ຮຸ້ນ ແຕ່ລະຮຸ້ນມີມູນຄ່າກຳນົດ (Par Value) 4,000 ກີບ/ຮຸ້ນ.

2.5 ໂຄງສ້າງການຖືຮຸ້ນ

ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດ ອີງຕາມວັນທີປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ 10 ກຸມພາ 2026 ມີລາຍລະອຽດດັ່ງລຸ່ມນີ້:

ລ/ດ	ລາຍຊື່ຜູ້ຖືຮຸ້ນ	ຈຳນວນຮຸ້ນ	ສັດສ່ວນຖືຄອງຮຸ້ນ (%)
1	ລັດວິສາຫະກິດໄຟຟ້າລາວ	1,285,588,553	76.55%
2	ບໍລິສັດ ຣາຊ-ລາວ ບໍລິການ ຈຳກັດ	94,848,324	5.65%

3	RH INTERNATIONAL (SINGAPORE) CORPORATION PTE., LTD	74,929,210	4.46%
4	ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ	38,350,000	2.28%
5	KRUNG THAI BANK PUBLIC COMPANY LIMITED	25,839,533	1.54%
6	KRUNGTHAI XSPRING SECURITIES COMPANY LIMITED FOR INDIVIDUAL CLIENT	15,491,884	0.92%
7	ທ່ານ ແສງລາຕີ ສະຫວັນຄຳ	11,528,200	0.69%
8	PT SOLE CO., LTD	10,430,800	0.62%
9	GULF INTERNATIONAL INVESTMENT HONG KONG LIMITED	7,766,666	0.46%
10	BANGKOK LIFE ASSURANCE PUBLIC COMPANY LIMITED	6,701,100	0.40%
11	Others	107,829,527	6.42%
ລວມທັງໝົດ		**1,679,303,697**	**100.00%**

ໝາຍເຫດ: ແຫຼ່ງຂໍ້ມູນຈາກ ຜ-ຟຟລ.

2.6 ຜູ້ມີອຳນາດຄວບຄຸມຂອງບໍລິສັດ

ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019, ມາດຕາທີ 3 ຂໍ້ທີ 8 ລະບຸວ່າ ຜູ້ມີອຳນາດຄວບຄຸມ ໝາຍເຖິງຜູ້ຖືຮຸ້ນທີ່ມີສິດອອກສຽງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຫຼາຍກວ່າ 25% ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ ຫຼື ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ບໍລິສັດ ທີ່ມີສ່ວນກ່ຽວຂ້ອງກັບການກຳນົດນະໂຍບາຍ, ການບໍລິຫານ ຫຼື ການເຄື່ອນໄຫວທຸລະກິດທີ່ສຳຄັນຂອງ ບໍລິສັດ.

ອີງຕາມໂຄງສ້າງຜູ້ຖືຮຸ້ນຂອງ ຜ-ຟຟລ, ລັດວິສາຫະກິດ ໄຟຟ້າລາວ ເປັນຜູ້ຖືຮຸ້ນລາຍໃຫຍ່ ກວມເອົາ 76.55% ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດ, ດັ່ງນັ້ນ, ລັດວິສາຫະກິດ ໄຟຟ້າລາວ ຈຶ່ງເປັນຜູ້ມີອຳນາດ ຄວບຄຸມ ໃນ ຜ-ຟຟລ. ໃນນັ້ນ, ຜູ້ຖືຮຸ້ນລາຍໃຫຍ່ຂອງ ລັດວິສາຫະກິດ ໄຟຟ້າລາວ ແມ່ນ ກະຊວງການເງິນ ຖືຮຸ້ນໃນອັດຕາສ່ວນ 100% ທຽບກັບຈຳນວນຮຸ້ນທັງໝົດໃນ ລັດວິສາຫະກິດ ໄຟຟ້າລາວ ຊຶ່ງຖືວ່າເປັນຜູ້ຖືຮຸ້ນທີ່ ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ.

2.7 ສະພາບໍລິຫານ


ສະພາບໍລິຫານຂອງ ຜ-ຟຟລ ປະກອບມີສະມາຊິກທັງໝົດ 7 ທ່ານ ມີລາຍລະອຽດດັ່ງນີ້:

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີຮັບຮອງ
1	ທ່ານ ສຸລິວັດ ສຸວັນນະຈູມຄຳ	ປະທານສະພາບໍລິຫານ	31 ມີນາ 2025
2	ທ່ານ ປອ. ອາຄົມເດດ ວົງໄຊ	ຮອງປະທານສະພາບໍລິຫານ	31 ມີນາ 2025
3	ທ່ານ ວິເລດ ກົມນາວົງ	ກຳມະການສະພາບໍລິຫານ	31 ມີນາ 2025
4	ທ່ານ ສຸກສະຫວາດ ໂສສຸພັນ	ກຳມະການສະພາບໍລິຫານ	31 ມີນາ 2025
5	ທ່ານ ຊົນລະວິດ ວິນິດໄສ	ກຳມະການສະພາບໍລິຫານ	26 ເມສາ 2023

6	ທ່ານ ສຈ ປອ. ພູເພັດ ກ້ຽວພິອາວົງ	ກຳມະການອິດສະລະ	31 ມີນາ 2025
7	ທ່ານ ພັນປານີ ສິດທິລາດ	ກຳມະການອິດສະລະ	31 ມີນາ 2025

2.8 ໂຄງປະກອບການຈັດຕັ້ງ

ໂຄງຮ່າງການຈັດຕັ້ງ ຜ-ຟຟລ ປະກອບດ້ວຍ ຄະນະຜູ້ອຳນວຍການໃຫຍ່ 5 ທ່ານ, ມີ 10 ຝ່າຍ, 29 ພະແນກ ແລະ 13 ເຂື່ອນ. ລວມມີຈຳນວນພະນັກງານຂອງ ຜ-ຟຟລ ແລະ ບໍລິສັດໃນເຄືອ ມີທັງໝົດ 810 ຄົນ, ໃນນີ້ຍິງມີ 154 ຄົນ.



2.9 ຄະນະອຳນວຍການ

ຄະນະຜູ້ອຳນວຍການໃຫຍ່ຂອງ ຜ-ຟຟລ ປະກອບມີທັງໝົດ 5 ທ່ານ ດັ່ງນີ້:

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີຮັບຮອງ
1	ທ່ານ ສຸກາສະຫວາດ ໂສສຸພັນ	ຜູ້ອຳນວຍການໃຫຍ່	31 ມີນາ 2025
2	ທ່ານ ດາວວຽງ ສຸນັນທະລາດ	ຮອງຜູ້ອຳນວຍການໃຫຍ່	31 ມີນາ 2025
3	ທ່ານ ຄຳໃບ ຫຼວງໄຊ	ຮອງຜູ້ອຳນວຍການໃຫຍ່	31 ມີນາ 2025
4	ທ່ານ ນາງ ໂພຄົນ ອັບໄພ	ຮອງຜູ້ອຳນວຍການໃຫຍ່	31 ມີນາ 2025
5	ທ່ານ ສີລິພົມ ແສງອ່ອນແກ້ວ	ຮອງຜູ້ອຳນວຍການໃຫຍ່	31 ມີນາ 2025

2.10 ຕົວເລກຖານະການເງິນ ແລະ ອັດຕາສ່ວນທາງການເງິນ

2.10.1 ໃບລາຍງານຖານະການເງິນ

ຫົວໜ່ວຍ (ລ້ານກີບ)

ໃບລາຍງານຖານະການເງິນ	2021	2022	2023	2024	ໄຕມາດ 3/2025
ຊັບສິນບໍ່ໝຸນວຽນ					
ເງິນລົງທຶນໃນບໍລິສັດລູກ	-	-	-	-	-
ເງິນລົງທຶນ ໃນວິສາຫະກິດຮ່ວມ	5,151,967	6,093,283	5,061,613	5,389,015	5,946,483
ເງິນລົງທຶນໃນບໍລິສັດຮຸ້ນສ່ວນ	3,264,319	3,689,092	4,067,647	4,199,393	3,596,978
ເງິນລົງທຶນທົ່ວໄປ	375,688	375,688	375,688	375,688	375,688
ເງິນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້ການ ສຳປະທານ ແລະ ເງິນລົງທຶນ	1,973,406	2,000,534	1,973,407	1,973,407	1,973,407
ຊັບສິນຄົງທີ່ມີຕົວຕົນ	8,975,510	8,307,936	8,111,267	7,701,842	7,312,684
ຊັບສິນຄົງທີ່ບໍ່ມີຕົວຕົນ	-	45	568	132	349
ໜີ້ຕ້ອງຮັບຈາກສັນຍາ swap	16,131	-	-	-	-
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ ແລະ ໂຄງການກໍ່ສ້າງ	341,075	341,075	341,075	341,075	341,075
ຊັບສິນບໍ່ໝຸນວຽນອື່ນ	27,233	1,719	7,126	31,310	297,238
ລວມຊັບສິນບໍ່ໝຸນວຽນ	**20,125,329**	**20,809,372**	**19,938,391**	**20,011,862**	**19,843,902**
ຊັບສິນໝຸນວຽນ					
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	202,585	220,311	1,059,391	648,548	365,439
ເງິນລົງທຶນໄລຍະສັ້ນ	33,489	52,005	61,563	-	-
ເງິນກູ້ໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	337,574	-	-	-	
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	2,221,934	684,428	1,749,478	1,189,748	2,328,168
ອາໄຫ່ ແລະ ເຄື່ອງໃນສາງ ສຸດທິ	3,771	1,582	2,795	3,104	4,746
ຊັບສິນໝຸນວຽນອື່ນ	3,627,485	7,901,524	9,309,316	7,696,183	7,386,677
ລວມຊັບສິນໝຸນວຽນ	**6,426,838**	**8,859,850**	**12,182,543**	**9,537,583**	**10,085,030**
ລວມຍອດຊັບສິນ	**26,552,167**	**29,669,222**	**32,120,934**	**29,549,445**	**29,928,932**
ໜີ້ສິນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ໄລຍະຍາວສຸດທິ	3,178,012	50,885	45,318	32,168	1,744,192
ຮຸ້ນກູ້ສຸດທິ	10,751,211	13,475,146	13,827,294	11,994,844	8,785,609
ໜີ້ຕ້ອງສິ່ງຕາມສັນຍາ SWAP ສຸດທິ	-	87,169	-	-	-
ລວມໜີ້ສິນບໍ່ໝຸນວຽນ	**13,929,223**	**13,613,200**	**13,872,612**	**12,027,012**	**10,529,801**
ໜີ້ສິນໝຸນວຽນ					

ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ	280,424	503,538	818,625	4,725,373	3,653,237
ເງິນກູ້ໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	1,669,676	128,227	101,572	48,253	-
ເງິນກູ້ໄລຍະສັ້ນ ສຸດທິ	106,739	216,766	1,486,770	828,547	454,754
ຮຸ້ນກູ້ໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	378,281	2,922,856	4,616,831	2,638,597	3,613,488
ລາຍຈ່າຍຄ້າງຈ່າຍ	955,765	697,519	676,093	556,639	363,298
ໜີ້ສິນຈາກສັນຍາສະວັບ (Swap) ສຸດທິ	-	-	85,468	-	-
ໜີ້ສິນໝຸນວຽນອື່ນໆ	1,465	1,548	30,759	7,493	5,448
ລວມໜີ້ສິນໝຸນວຽນ	**3,392,350**	**4,470,454**	**7,816,118**	**8,804,902**	**8,090,225**
ລວມຍອດໜີ້ສິນ	**17,321,573**	**18,083,654**	**21,688,730**	**20,831,914**	**18,620,026**
ສ່ວນຂອງຜູ້ຖືຮຸ້ນ					
ທຶນຈົດທະບຽນ	6,717,215	6,717,215	6,717,215	6,717,215	6,717,215
ສ່ວນເພີ່ມມູນຄ່າຮຸ້ນ	985,621	985,621	985,621	985,621	985,621
ຄັງສຳຮອງຕາມລະບຽບການ	565,708	776,685	778,598	779,623	779,895
ຄັງສຳຮອງຈາກການຕີມູນຄ່າ ເງິນຕາຕ່າງປະເທດ	134,944	443,608	468,988	474,482	520,477
ກຳໄລ/(ຂາດທຶນສະສົມ)	823,602	2,667,088	1,483,786	(227,756)	2,317,397
ສ່ວນຂອງຜູ້ຖືຮຸ້ນ	9,227,090	11,590,217	10,434,208	8,729,185	11,320,605
ສ່ວນໄດ້ເສຍບໍ່ມີອຳນາດຄວບຄຸມ	3,504	(4,649)	(2,004)	(11,654)	(11,699)
ລວມສ່ວນຂອງຜູ້ຖືຮຸ້ນ	**9,230,594**	**11,585,568**	**10,432,204**	**8,717,531**	**11,308,906**
ລວມຍອດໜີ້ສິນ ແລະ ສ່ວນຜູ້ຖືຮຸ້ນ	**26,552,167**	**29,669,222**	**32,120,934**	**29,549,445**	**29,928,932**

2.10.2 ໃບລາຍງານຜົນການດຳເນີນງານ

ຫົວໜ່ວຍ (ລ້ານກີບ)

ໃບລາຍງານຜົນການດຳເນີນງານ	2021	2022	2023	2024	ໄຕມາດ 3/2025
ລາຍຮັບຈາກການຂາຍໄຟຟ້າ ແລະ ການບໍລິການ	1,196,664	1,267,355	1,410,011	1,218,842	1,002,281
ຕົ້ນທຶນໃນການຂາຍ ແລະ ການບໍລິການ	(585,971)	(632,991)	(693,656)	(655,601)	(169,035)
ກຳໄລຂັ້ນຕົ້ນ	610,693	634,364	716,355	563,241	833,246
ລາຍຮັບອື່ນໆ	55,292	4,027,326	462,865	153,451	900,578
ລາຍຈ່າຍໃນການດຳເນີນງານ ແລະ ການບໍລິຫານ	(154,090)	(210,120)	(241,219)	(388,986)	(82,862)
ກຳໄລ/(ຂາດທຶນ)ຈາກອັດຕາແລກປ່ຽນ	(612,913)	(2,623,348)	(2,077,036)	(2,381,086)	(22,465)
ສ່ວນແບ່ງກຳໄລ ຈາກການລົງທຶນໃນວິສາຫະກິດຮ່ວມ ແລະ ບໍລິສັດຮ່ວມ	960,715	1,439,306	1,279,641	1,630,986	795,075
ກຳໄລກ່ອນຕົ້ນທຶນທາງການເງິນ ແລະ ອາກອນກຳໄລ	859,697	3,267,528	140,606	(422,394)	2,423,572
ລາຍຈ່າຍທາງການເງິນ	(855,815)	(1,049,068)	(1,233,223)	(1,284,996)	(361,770)
ກຳໄລ/(ຂາດທຶນ)ກ່ອນອາກອນ	3,882	2,218,460	(1,092,617)	(1,707,390)	2,061,802
ອາກອນກຳໄລ	-	(80,447)	(1,119)	(3,127)	(50)
ກຳໄລ/(ຂາດທຶນ) ສຳລັບຮອບເວລາ	**3,882**	**2,138,013**	**(1,093,736)**	**(1,710,517)**	**2,061,752**
ສ່ວນຂອງກຳໄລທີ່ເປັນຂອງ					
ສ່ວນຂອງບໍລິສັດແມ່	4,392	2,138,428	(1,096,381)	(1,700,867)	2,061,785
ສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມ	(510)	(415)	2,645	(9,650)	(33)

2.10.3 ໃບລາຍງານກະແສເງິນສົດ

ຫົວໜ່ວຍ (ລ້ານກີບ)

ໃບລາຍງານກະແສເງິນສົດ	2021	2022	2023	2024	ໄຕມາດ 3/2025
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ	(53,999)	(316,399)	(1,158,169)	(767,013)	(298,219)
ເງິນສົດສຸດທິຈາກກິດຈະກຳການລົງທຶນ	383,005	411,666	1,842,427	5,277,339	1,595,050
ເງິນສົດສຸດທິຈາກກິດຈະກຳການເງິນ	(434,332)	(153,939)	154,822	(4,921,169)	(1,460,238)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍປີ	202,585	220,311	1,059,391	648,548	365,439

2.10.4 ອັດຕາສ່ວນການເງິນທີ່ສຳຄັນ

ອັດຕາສ່ວນທາງການເງິນ	ຫົວໜ່ວຍ	2021	2022	2023	2024	ໄຕມາດ 3/2025
ອັດຕາສ່ວນເງິນທຶນໝຸນວຽນ (Current ratio)	ເທົ່າ	1.89	1.98	1.56	1.08	1.25
ອັດຕາສ່ວນກຳໄລກ່ອນຫັກລາຍຈ່າຍດອກເບ້ຍ, ອາກອນ, ຄ່າຫຼ້ຍຫ້ຽນແລະຄ່າເສື່ອມ (EBITDA margin)	%	90.07	95.50	88.51	83.13	94.39
ອັດຕາສ່ວນກຳໄລສຸດທິ (Net profit margin)	%	0.18	31.75	-34.69	-56.95	76.42
ອັດຕາສ່ວນຜົນຕອບແທນຕໍ່ສ່ວນຂອງຜູ້ຖືຮຸ້ນ (ROE)	%	0.04	20.54	-9.94	-17.86	20.02
ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (ROA)	%	0.02	7.61	-3.54	-5.55	6.80
ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ (D/E)	ເທົ່າ	1.88	1.56	2.08	2.39	1.65

❖ **ນິຍາມຂອງອັດຕາສ່ວນທາງການເງິນ:**

- ອັດຕາສ່ວນເງິນທຶນໝຸນວຽນ (Current ratio) = ລວມຊັບສິນໝຸນວຽນ / ລວມໜີ້ສິນໝຸນວຽນ;
- ອັດຕາສ່ວນກຳໄລກ່ອນຫັກລາຍຈ່າຍດອກເບ້ຍ, ອາກອນ, ຄ່າຫຼ້ຍຫ້ຽນແລະຄ່າເສື່ອມ (EBITDA Margin) = ກຳໄລກ່ອນຫັກລາຍຈ່າຍດອກເບ້ຍ, ອາກອນ, ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ (ທີ່ບໍ່ນັບລວມກຳໄລ/(ຂາດທຶນ)ສຸດທິຈາກອັດຕາແລກປ່ຽນ) / ລາຍຮັບລວມ;
- ອັດຕາກຳໄລສຸດທິ (Net Profit Margin) = ກຳໄລສຸດທິ / ລາຍຮັບລວມ;
- ອັດຕາສ່ວນຜົນຕອບແທນຕໍ່ສ່ວນຂອງຜູ້ຖືຮຸ້ນ (ROE) = ກຳໄລສຸດທິ / ລວມສ່ວນຂອງຜູ້ຖືຮຸ້ນສະເລ່ຍຈາກປີປະຈຸບັນ ແລະ ປີກ່ອນໜ້າ;
- ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (ROA) = ກຳໄລສຸດທິ / ລວມຍອດຊັບສິນສະເລ່ຍຈາກປີປະຈຸບັນ ແລະ ປີກ່ອນໜ້າ;
- ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ (D/E) = ລວມຍອດໜີ້ສິນ / ລວມສ່ວນຂອງຜູ້ຖືຮຸ້ນ.

ພາກທີ III

ຂໍ້ມູນ ກ່ຽວກັບຊັບສິນ

1. ຂໍ້ມູນທົ່ວໄປກ່ຽວກັບ ຊັບສິນ

- ຊື່ຊັບສິນ : ບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ
- ປະເພດທຸລະກິດ : ຜະລິດໄຟຟ້າເພື່ອຈຳໜ່າຍໃຫ້ກັບພາຍໃນ ແລະ ຕ່າງປະເທດ, ໃຫ້ບໍລິການໃນການບໍລິຫານ ແລະ ບຳລຸງຮັກສາໂຄງການຜະລິດໄຟຟ້າອື່ນໆ.
- ວັນທີສ້າງຕັ້ງ : 13 ຕຸລາ 1994
- ສັນຍາລັກ : ທຫທ ຫຼື THPC
- ສຳນັກງານຕັ້ງຢູ່ : ສູນການຄ້າວຽງຈັນເຊັນເຕີ, ຊັ້ນ 8, ຖະໜົນຄູວຽງ ນະຄອນຫຼວງວຽງຈັນ ສປປ ລາວ
- ໃບທະບຽນວິສາຫະກິດເລກທີ : 2553/ຈທວ
- ເລກປະຈຳຕົວຜູ້ເສຍອາກອນ : 448322125-9-00
- ທຶນຈົດທະບຽນ : 55,000,000 ໂດລາ ສະຫະລັດ
- ຈຳນວນຮຸ້ນ : 1,100,000 ຮຸ້ນ
- ມູນຄ່າກຳນົດຮຸ້ນລະ : 50 ໂດລາ ສະຫະລັດ
- ເວັບໄຊ : http://www.thpclaos.com
- ໂທລະສັບ : (+856-21) 217 515
- ແຟັກ : (+856-21) 2017 529

2. ການດຳເນີນທຸລະກິດ

ໂຄງການ ເທີນ-ຫີນບູນເດີມ ແມ່ນໄດ້ດຳເນີນເພື່ອສະໜັບສະໜູນການຈະເລີນເຕີບໂຕເສດຖະກິດຂອງ ລາວ ໂດຍເສີມສ້າງລາຍໄດ້ເປັນເງິນຕາຕ່າງປະເທດຜ່ານການສົ່ງອອກໄຟຟ້າ. ໃນທ້າຍຊຸມປີ 1980 ລັດຖະບານໄດ້ ກຳນົດທ່າແຮງເຂື່ອນໄຟຟ້າຂອງປະເທດ ເປັນຊັບພະຍາກອນທຳມະຊາດທີ່ສຳຄັນ ທີ່ຈະສາມາດຊ່ວຍສ້າງລາຍຮັບ ແລະ ພະລັງງານທີ່ຈຳເປັນ ເພື່ອເປັນຈຸດເລີ່ມຕົ້ນການພັດທະນາເສດຖະກິດຂອງລາວຢ່າງໄວວາ.

ທ່າແຮງດ້ານພະລັງງານຂອງແມ່ນ້ຳເທີນ ເປັນທີ່ຍອມຮັບເປັນເວລາດົນນານ. ໃນປີ 1991, ລັດຖະບານໄດ້ ເລີ່ມຕົ້ນການສຶກສາເພື່ອກຳນົດໃຫ້ເປັນໂຄງການທີ່ເໝາະສົມເພື່ອສະໜອງໄຟຟ້າສຳລັບການສົ່ງອອກ ແລະ ການສະ ໜອງພາຍໃນປະເທດໃນພາກກາງຂອງປະເທດລາວ. ການສຶກສາຄວາມເປັນໄປໄດ້ທີ່ໄດ້ເລີ່ມຕົ້ນໃນປີ 1992, ໃນ ເບື້ອງຕົ້ນສຳລັບໂຄງການພາກລັດ. ຊຶ່ງເຫັນໄດ້ຊັດເຈນວ່າຕ້ອງການທຶນເພີ່ມ ແລະ ມີນັກລົງທຶນຕ່າງປະເທດໄດ້ເຂົ້າ ຮ່ວມໃນປີ 1993.

ການຜະລິດໄຟຟ້າ ແລະ ການບໍລິໂພກພາຍໃນ ໃນເວລານັ້ນແມ່ນຕ່ຳ: ປະເທດໄທແມ່ນແຫຼ່ງຕະຫຼາດສຳລັບ ພະລັງງານສ່ວນໃຫຍ່ ທີ່ໄດ້ພັດທະນາໃນປະເທດລາວ. ໃນເດືອນ ມິຖຸນາ ປີ 1993 ປະເທດລາວ ແລະ ປະເທດໄທ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈວ່າ ປະເທດລາວ ຈະສົ່ງອອກພະລັງງານໄຟຟ້າໄປໃຫ້ປະເທດໄທ. ໂຄງການເທີນ-ຫີນບຸນໄດ້ ເປັນໂຄງການທີ່ເໝາະສົມທີ່ສຸດ ເປັນໂຄງການພັດທະນາທີ່ລິເລີ່ມ.

ບໍລິສັດ ເທີນ-ຫີນບຸນ ພາວເວີ ຈຳກັດ (ທຫບ) ໄດ້ສ້າງຕັ້ງຂຶ້ນໃນປີ 1994 ໂດຍຜ່ານສັນຍາຜູ້ຖືຮຸ້ນລະຫວ່າງ ລັດຖະບານ ສປປລາວ, ບໍລິສັດ MDX ລາວພາບບິກ ປະເທດໄທ ແລະ Nordic Hydropower AB. ການ ສ້າງຕັ້ງ THPC ແມ່ນເປັນສິ່ງສຳຄັນສຳລັບ ສປປ ລາວ ໃນເວລານັ້ນ, ເປັນສັນຍາລັກຂອງນະໂຍບາຍເສດຖະກິດ ໃໝ່ ແລະ ການຮ່ວມມືກັບບັນດາປະເທດໃກ້ຄຽງ ແລະ ນັກລົງທຶນພາກເອກະຊົນ. ທຫບ ໄດ້ເປັນຂີດ ໝາຍການລົງທຶນທີ່ໃຫຍ່ຄັ້ງທຳອິດພາຍໃຕ້ນະໂຍບາຍການລົງທຶນຕ່າງປະເທດໃໝ່ ແລະ ເປັນຄັ້ງທຳອິດທີ່ ລັດຖະບານທີ່ເຄີຍໄດ້ເຂົ້າຮ່ວມກັບພາກເອກະຊົນໃນການກໍ່ສ້າງເຂື່ອນໄຟຟ້າໄດ້ຢ່າງເປັນທາງການ

ລັດຖະບານໄດ້ ໄດ້ແຕ່ງຕັ້ງໃຫ້ ລັດວິສະຫະກິດໄຟຟ້າລາວ (ຟຟລ) ເປັນຜູ້ຖືຜົນປະໂຫຍດຂອງຕົນໃນ ໂຄງການ 60%, ໂດຍມີອີກສອງຜູ້ຖືຮຸ້ນ ຝ່າຍລະ 20%. ຈາກນັ້ນ THPC ໄດ້ເຊັນຂໍ້ຕົກລົງໃບອະນຸຍາດກັບ ລັດຖະບານ, ກ່ອນການເຈລະຈາຕໍ່ລອງສັນຍາຊື້ຂາຍໄຟຟ້າກັບລູກຄ້າຂອງຕົນ ຄື EGAT ແລະ ຟຟລ. MDX ຕໍ່ ມາໄດ້ກາຍເປັນ GMS ລາວ, ໃນຂະນະທີ່ Nordic ເປັນສາຂາທີ່ເປັນເຈົ້າຂອງທັງໝົດຂອງ Scatec. ໃນປີ 2012 ຟຟລ ໄດ້ໂອນຮຸ້ນຂອງຕົນໃນ ທຫບ ໃຫ້ແກ່ ຜ-ຟຟລ.

- **ຄວາມສຳຄັນຂອງ ເຂື່ອນໄຟຟ້າເທີນ-ຫີນບຸນ ຕໍ່ກັບ ທຸລະກິດຂອງ ຜ-ຟຟລ**

ຜ-ຟຟລ ໄດ້ລົງທຶນຖືຮຸ້ນ 60% ໃນໂຄງການເທີນຫີນບຸນ ນັບແຕ່ຊ່ວງກາງປີ 2012 ເປັນຕົ້ນມາ. ປະຈຸບັນ ໂຄງການມີກຳລັງຕິດຕັ້ງລວມ 520 MW, ເຮັດໃຫ້ ຜ-ຟຟລ ມີກຳລັງຕິດຕັ້ງ ຕາມສັດສ່ວນຖືຮຸ້ນ ໃນໂຄງການເທີນ ຫີນບຸນ ຈຳນວນ 312 MW ຈຶ່ງຖືວ່າເປັນໂຄງການທີ່ໃຫຍ່ທີ່ສຸດຂອງ ຜ-ຟຟລ. ພ້ອມກັນນີ້ ຍັງເປັນໂຄງການຍຸດ ທະສາດຂອງ ຜ-ຟຟລ ເພາະເປັນໂຄງການທີ່ມີອ່າງເກັບນ້ຳ ແລະ ສົ່ງອອກໄຟຟ້າໄປຕ່າງປະເທດເປັນຫຼັກ ເຮັດໃຫ້ມີ ແຫຼ່ງລາຍຮັບທີ່ໝັ້ນຄົງ, ຄວາມສ່ຽງຕ່ຳ ແລະໄດ້ຮັບເງິນປັນຜົນເປັນເງິນຕາຕ່າງປະເທດ, ມີບົດບາດສູງໃນການ ປະກອບສ່ວນສັດສ່ວນກຳໄລ ແລະ ກະແສເງິນສົດໃຫ້ ຜ- ຟຟລ ທັງໃນໄລຍະຜ່ານມາ ແລະ ໃນອະນາຄົດ. ນັບແຕ່ ປີ 2025 ເປັນຕົ້ນໄປ ໂຄງການດັ່ງກ່າວ ຍິ່ງຈະມີບົດບາດສຳຄັນສູງຂຶ້ນ ເນື່ອງຈາກສຳເລັດການຊຳລະໜີ້ເງິນກູ້ ໂຄງການໃນທ້າຍໄຕມາດ 3/2024, ຈຶ່ງຄາດວ່າ ຈະສາມາດສ້າງກຳໄລ ໄດ້ຢ່າງເຕັມເມັດເຕັມໜ່ວຍ ແລະ ສ້າງ ກະແສເງິນສົດ ຜ່ານເງິນປັນຜົນ ໃຫ້ ຜ-ຟຟລ ໄດ້ສູງຂຶ້ນກວ່າເດີມ ເປັນຈຳນວນຫຼາຍ.

ສະຖິຕິໂຕເລກການຈ່າຍປັນຜົນຂອງໂຄງການເຂື່ອນເທີນ-ຫີນບຸນ ໃຫ້ ຜ-ຟຟລ ໃນໄລຍະຜ່ານມາ

ຫົວໜ່ວຍ: ລ້ານ ໂດລາ ສະຫະລັດ

ປີ	2013	2014	2015	2016	2017	2018	2019	2020	2021	2022	2023	2024	ລວມ
ເທີນຫີນບຸນ 60%	35.11	24.00	18.01	-	32.20	50.49	23.56	9.51	38.66	27.22	16.54	28.18	**303.48**

3. ໂຄງສ້າງການຖືຮຸ້ນ

ຜູ້ຖືຮຸ້ນຂອງ ທຫບ ປະກອບດ້ວຍ 3 ຂາຮຸ້ນໃຫຍ່ຄື:

ລ/ດ	ລາຍຊື່ຜູ້ຖືຮຸ້ນ	ຈຳນວນຮຸ້ນ	ສັດສ່ວນຖືຄອງຮຸ້ນ (%)
1	ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ	660,000	60%
2	Nordic Hydropower AB	220,000	20%
3	GMS Power	220,000	20%
ລວມທັງໝົດ		**1,100,000**	**100%**

ໝາຍເຫດ: ແຫຼ່ງຂໍ້ມູນຈາກ ທຫບ.

ຊື່ຜູ້ຖືຮຸ້ນ	ສັດສ່ວນຖືຄອງ	ໝາຍເຫດ
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation	60%	ເປັນບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕລຊລຊຶ່ງມີຜູ້ຖືຮຸ້ນລາຍໃຫຍ່ແມ່ນ ລັດວິສະຫະກິດໄຟຟ້າລາວ (ຟຟລ), ຜ-ຟຟລ ສ້າງຕັ້ງຂຶ້ນໃນປີ 2010 ຊຶ່ງຖືຮຸ້ນ 60% ໃນ ທຫບ.
GMS Power	20%	ເປັນບໍລິສັດຂອງປະເທດໄທ, ເປັນບໍລິສັດຜະລິດໄຟຟ້າເອກະລາດໃນອະນຸພາກພື້ນແມ່ນ້ຳຂອງ (GMS). GMS ຖືຮຸ້ນ 20% ໃນ ທຫບ ຕັ້ງແຕ່ເບື້ອງຕົ້ນ ຊຶ່ງໃນເມື່ອກ່ອນແມ່ນເປັນທີ່ຮູ້ຈັກກັນໃນຊື່ MDX Power.
Nordic Hydropower AB	20%	ຖືຮຸ້ນ 20% ໃນ ທຫບ, ເປັນບໍລິສັດແຖວໜ້າໃນການພັດທະນາພະລັງງານທົດແທນ ເຊັ່ນ: ພະລັງງານແສງຕາເວັນ, ພະລັງງານລົມ ແລະ ພະລັງງານນ້ຳ. ຊຶ່ງມີຜູ້ຖືຮຸ້ນລາຍໃຫຍ່ແມ່ນ ບໍລິສັດ **Scatec.**

4. ສະພາບໍລິຫານ


ສະພາບໍລິຫານຂອງ ພຫບ ປະກອບມີສະມາຊິກທັງໝົດ 9 ທ່ານ ມີລາຍລະອຽດດັ່ງນີ້:

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ວິເລດ ກົມມາວົງ	ປະທານສະພາບໍລິຫານ
2	ທ່ານ ສຸກສະຫວາດ ໂສສຸພັນ	ກຳມະການສະພາບໍລິຫານ
3	ທ່ານ ຊິນ ອິນທະວົງ	ກຳມະການສະພາບໍລິຫານ

4	ທ່ານ ສົມໄຊ ແກ້ວອັນດີ	ກຳມະການສະພາບໍລິຫານ
5	ທ່ານ ດາວວຽງ ສຸນັນທະລາດ	ກຳມະການສະພາບໍລິຫານ
6	Mr. Robert Kay	ກຳມະການສະພາບໍລິຫານ
7	Mr. David Michaels	ກຳມະການສະພາບໍລິຫານ
8	Mr. Jan Cederwall	ກຳມະການສະພາບໍລິຫານ
9	Mr. Kristian Haneberg	ກຳມະການສະພາບໍລິຫານ

5. ໂຄງຮ່າງການຈັດຕັ້ງ

ໂຄງຮ່າງການຈັດຕັ້ງ ທຫບ ປະກອບດ້ວຍ ຜູ້ອຳນວຍການ, ຄະນະຝ່າຍ, ພະແນກ ແລະ ໜ່ວຍງານ ດັ່ງລາຍ ລະອຽດລຸ່ມນີ້:



6. ຄະນະອຳນວຍການ

ຄະນະອຳນວຍການຂອງ ທຫບ ປະກອບມີທັງໝົດ 1 ທ່ານ ດັ່ງນີ້:

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ຈີຊິງ ຈີຫວ່າໄຊກິ	ຜູ້ອຳນວຍການ

7. ຕົວເລກຖານະການເງິນ ແລະ ອັດຕາສ່ວນທາງການເງິນ

7.1 ໃບລາຍງານຖານະການເງິນ

ຫົວໜ່ວຍ (ໂດລາ ສະຫະລັດ)

ໃບລາຍງານຖານະການເງິນ	2021	2022	2023	2024	2025
ຊັບສິນ					
ຊັບສິນໂຄງການເຂື່ອນໄຟຟ້ານ້ຳຕົກ	448,065,688	423,070,430	398,075,172	373,011,434	361,441,237
ອາຄານ ແລະ ອຸປະກອນ	819,363	1,450,723	1,743,463	1,495,761	1,460,505
ສິດໃນການນຳໃຊ້ຊັບສິນ	121,340	135,950	67,975	-	141,792
ເງິນກູ້ຢືມໄລຍະຍາວໃຫ້ພາກສ່ວນທີ່ກ່ຽວຂ້ອງ	1,343,073	-	-	-	-
ລາຍຈ່າຍລ່ວງໜ້າໃຫ້ຜູ້ຮັບເໝົາ	-	-	-	14,157,917	9,402,295
ລວມຊັບສິນບໍ່ໝຸນວຽນ	**450,349,464**	**424,657,103**	**399,886,610**	**388,665,112**	**372,445,829**
ຊັບສິນໝຸນວຽນອື່ນໆ	973,563	1,255,280	1,447,821	1,412,663	2,658,730
ເງິນກູ້ຢືມໄລຍະຍາວ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ທີ່ຄົບກຳນົດຊຳລະພາຍໃນໜຶ່ງປີ	2,014,609	2,014,609	671,536	-	-
ເງິນລົງທຶນອື່ນໆ	36,391,000	38,092,000	23,081,000	-	9,800,000
ລູກໜີ້ການຄ້າ	26,501,241	15,174,984	17,082,435	25,050,113	28,373,821
ລາຍຈ່າຍຈ່າຍລ່ວງໜ້າ	534,755	555,840	569,048	407,729	412,659
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	39,606,784	37,219,108	45,222,637	19,038,308	11,858,797
ລວມຊັບສິນໝຸນວຽນ	**106,021,952**	**94,311,821**	**88,074,477**	**45,908,813**	**53,104,007**
ລວມຍອດຊັບສິນ	**556,371,416**	**518,968,924**	**487,961,087**	**434,573,925**	**425,549,836**
ສ່ວນຂອງຜູ້ຖືຮຸ້ນ					
ທຶນຈົດທະບຽນ	55,000,000	55,000,000	55,000,000	55,000,000	55,000,000
ກຳໄລສະສົມ	281,303,260	309,958,072	343,761,559	353,334,034	338,955,142
ລວມສ່ວນຂອງຜູ້ຖືຮຸ້ນ	**336,303,260**	**364,958,072**	**398,761,559**	**408,334,034**	**393,955,142**
ໜີ້ສິນ					
ເງິນກູ້ຢືມ	130,403,664	65,905,143	-	-	-
ໜີ້ສິນຕາມສັນຍາເຊົ່າ	-	70,330	-	-	76,344
ການສານອະນຸພັນທາງການເງິນ	1,332,530	-	-	-	-
ຜົນປະໂຫຍດພະນັກງານ	749,689	527,113	486,834	553,545	742,511
ອາກອນໜີ້ສິນເຍື້ອນຊຳລະ	7,391,966	7,302,609	6,943,127	6,519,012	6,048,269
ລວມໜີ້ສິນບໍ່ໝຸນວຽນ	**139,877,849**	**73,805,195**	**7,429,961**	**7,072,557**	**6,867,124**

ເງິນກູ້ຢືມສ່ວນທີ່ຄົບກຳນົດພາຍໃນໜຶ່ງປີ	59,977,165	62,421,217	66,196,881	-	-
ໜີ້ສິນຕາມສັນຍາເຊົ່າ ສ່ວນທີ່ຄົບກຳນົດຊຳລະພາຍໃນໜຶ່ງປີ	96,836	67,948	70,330	-	70,760
ເຈົ້າໜີ້ການຄ້າ ພາກສ່ວນທີ່ກ່ຽວຂ້ອງ	3,562	82,863	80,000	80,000	37,727
ອາກອນກຳໄລຄ້າງຈ່າຍ	12,681,304	12,004,920	10,843,832	14,696,689	19,534,910
ໜີ້ສິນໝຸນວຽນອື່ນໆ	7,431,440	5,628,709	4,578,524	4,390,645	5,084,173
ລວມໜີ້ສິນໝຸນວຽນ	**80,190,307**	**80,205,657**	**81,769,567**	**19,167,334**	**24,727,570**
ລວມຍອດໜີ້ສິນ	**220,068,156**	**154,010,852**	**89,199,528**	**26,239,891**	**31,594,694**
ລວມສ່ວນຜູ້ຖືຮຸ້ນ ແລະ ໜີ້ສິນ	**556,371,416**	**518,968,924**	**487,961,087**	**434,573,925**	**425,549,836**

7.2 ໃບລາຍງານຜົນການດຳເນີນງານ

ຫົວໜ່ວຍ (ໂດລາ ສະຫະລັດ)

ໃບລາຍງານຜົນການດຳເນີນງານ	2021	2022	2023	2024	2025
ລາຍຮັບ	172,217,808	131,652,247	119,149,434	141,177,649	173,834,120
ຕົ້ນທຶນໃນການຂາຍ	(41,469,071)	(40,101,356)	(40,725,151)	(41,258,485)	-43,589,739
ກຳໄລຂັ້ນຕົ້ນ	**130,748,737**	**91,550,891**	**78,424,283**	**99,919,164**	**130,244,381**
ລາຍຮັບອື່ນໆ	-	18,638		-	
ລາຍຈ່າຍບໍລິຫານ	(3,872,212)	(3,009,464)	(3,330,663)	(3,628,459)	-4,024,650
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ ສຸດທິ	8,037,674	2,617,354	401,261	1,190,745	826,198
ກຳໄລຈາກການດຳເນີນງານ	**134,914,199**	**91,177,419**	**75,494,881**	**97,481,450**	**127,045,929**
ລາຍຮັບທາງການເງິນ	582,042	1,104,670	2,096,793	1,540,998	641,590
ລາຍຈ່າຍທາງການເງິນ	(5,483,097)	(5,347,714)	(5,736,837)	(2,456,399)	-11,245
ລາຍຈ່າຍທາງການເງິນ ສຸດທິ	(4,901,055)	(4,243,044)	(3,640,044)	(915,401)	630,345
ກຳໄລກ່ອນອາກອນ	**130,013,144**	**86,934,375**	**71,854,837**	**96,566,049**	**127,676,274**
ລາຍຈ່າຍອາກອນ	(19,476,519)	(12,915,563)	(10,484,350)	(14,272,574)	-19,064,166
ກຳໄລສຸດທິປະຈຳປີ	**110,536,625**	**74,018,812**	**61,370,487**	**82,293,475**	**108,612,108**
ລາຍຮັບອື່ນໆປະຈຳປີ, ສຸດທິຫຼັງຫັກອາກອນ	-	-	-	-	-
ລວມກຳໄລສຸດທິປະຈຳປີ	**110,536,625**	**74,018,812**	**61,370,487**	**82,293,475**	**108,612,108**

7.3 ໃບລາຍງານກະແສເງິນສົດ

ຫົວໜ່ວຍ (ໂດລາ ສະຫະລັດ)

ໃບລາຍງານກະແສເງິນສົດ	2021	2022	2023	2024	2025
ເງິນສົດສຸດທິຈາກກິດຈະກຳດຳເນີນງານ	69,834,201	90,404,278	69,834,201	94,292,291	123,787,487
ເງິນສົດສຸດທິຈາກກິດຈະກຳການລົງທຶນ	16,246,784	(2,260,282)	16,246,784	10,510,682	-18,360,914
ເງິນສົດສຸດທິຈາກກິດຈະກຳການເງິນ	(78,654,303)	(91,239,671)	(78,654,303)	(131,002,728)	112,781,098
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍປີ	45,222,637	37,219,108	45,222,637	19,038,308	11,858,797

7.4 ອັດຕາສ່ວນການເງິນທີ່ສຳຄັນ

ອັດຕາສ່ວນທາງການເງິນ	ຫົວໜ່ວຍ	2021	2022	2023	2024	2025
ອັດຕາສ່ວນເງິນທຶນໝຸນວຽນ (Current ratio)	ເທົ່າ	1.32	1.18	1.08	2.40	2.15
ອັດຕາສ່ວນກຳໄລຈາກການດຳເນີນງານ (Operating profit margin)	%	78.34	69.25	63.36	69.05	73.08
ອັດຕາສ່ວນກຳໄລສຸດທິ (Net profit margin)	%	64.18	56.22	51.51	58.29	62.48
ອັດຕາສ່ວນຜົນຕອບແທນຕໍ່ສ່ວນຂອງຜູ້ຖືຮຸ້ນ (ROE)	%	32.87	20.28	15.39	20.15	27.57
ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (ROA)	%	19.87	14.26	12.58	18.94	25.52
ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ (D/E)	ເທົ່າ	0.65	0.42	0.22	0.06	0.08

ພາກທີ IV

ຂໍ້ມູນ ກ່ຽວກັບການປະເມີນມູນຄ່າ ຫຼື ການກຳນົດລາຄາຊັບສິນ

1. ວິທີການ ແລະ ຜົນການປະເມີນ

ຈາກຜົນການດຳເນີນງານຜ່ານມາເຫັນວ່າ ທຫບ ມີລາຍຮັບ ແລະ ມີກິດຈະກຳກະແສເງິນສົດຮັບຈາກການດຳເນີນງານຂ້ອນຂ້າງແນ່ນອນ. ສະນັ້ນ, ການປະເມີນ ທຫບ ຈຶ່ງໄດ້ນຳໃຊ້ວິທີການຄິດໄລ່ລາຄາຮຸ້ນ ແບບຄິດຫຼຸດມູນຄ່າກະແສເງິນສົດສຳລັບກິດຈະການ (Free Cash Flow to Firm "FCFF") ທີ່ຄາດວ່າຈະເກີດຂຶ້ນໃນອະນາຄົດ ໂດຍນຳກະແສເງິນສົດຂອງກິດຈະການ (FCFF) ມາຄິດຫຼຸດດ້ວຍອັດຕາຕົ້ນທຶນສະເລ່ຍຖ່ວງນ້ຳໜັກ (Weighted Average Cost of Capital – WACC) ທີ່ໄດ້ຈາກການເອົາອັດຕາດອກເບ້ຍ 8% ຂອງພັນທະບັດລັດຖະບານສະກຸນເງິນໂດລາ ສະຫະລັດ ໄລຍະເວລາ 10 ປີ ບວກກັບສ່ວນຊົດເຊີຍຄວາມສ່ຽງຂອງຮຸ້ນ ຜ-ຟຟລ ເມື່ອທຽບກັບພາບລວມຂອງຕະຫຼາດສາກົນ ແລະ ສປປ ລາວ 2.62% ຊຶ່ງຈະມີຄ່າ K_e ເທົ່າກັບ 10.62% ແລະ ນຳໃຊ້ WACC ມາເປັນ Discount Rate ຊຶ່ງເຫັນວ່າ ມີຄ່າເທົ່າກັບ 10.62% ເພື່ອໃຫ້ໄດ້ມາຊຶ່ງມູນຄ່າຮຸ້ນ ທຫບ ໃນປະຈຸບັນ ລາຍລະອຽດຂອງການຄິດໄລ່ Discount Rate ດັ່ງນີ້:

ຕົ້ນທຶນສ່ວນຂອງທຶນ (K_e)		**ຕົ້ນທຶນຂອງໜີ້ສິນ (K_d)**	
ຂໍ້ສົມມຸດຖານ (%):		**ຂໍ້ສົມມຸດຖານ (%):**	
ອັດຕາຜົນຕອບແທນທີ່ບໍ່ມີຄວາມສ່ຽງ (ພັນທະບັດລັດຖະບານ ສະກຸນເງິນໂດລາ ສະຫະລັດ ອາຍຸ 10 ປີ)	:8.00%	ຕົ້ນທຶນໜີ້ສິນກ່ອນຫັກອາກອນ - ອັດຕາດອກເບ້ຍເງິນກູ້ທະນາຄານທຸລະກິດ (%)	:8.3598%
ສ່ວນຊົດເຊີຍຄວາມສ່ຽງຂອງຕະຫຼາດຮຸ້ນ (ERP)	:19.00%	ອັດຕາອາກອນກຳໄລ	:15.00%
ສ່ວນຊົດເຊີຍຄວາມສ່ຽງອື່ນໆ	:0.00%		
ຄ່າເບຕ້າ (ກໍລະນີບໍ່ມີໜີ້ສິນ - ຜ-ຟຟລ)	:0.1381		
ຄ່າເບຕ້າ (ກໍລະນີມີໜີ້ສິນ)	:0.1381		
ຕົ້ນທຶນສ່ວນຂອງທຶນ, K_e	**:10.62%**	**ຕົ້ນທຶນໜີ້ສິນຫຼັງຫັກອາກອນ, K_d**	**:7.1058%**
ສັດສ່ວນຂອງທຶນທີ່ນຳໃຊ້ (E/(D+E))	:100%	ສັດສ່ວນຂອງໜີ້ສິນທີ່ນຳໃຊ້(D/(D+E))	:0.00%
WACC (ຫຼັງຫັກອາກອນ WACC)	:10.62%		
ຕົວເລກຖ້ວນ	:10.62%		

ແຫຼ່ງທີ່ມາ: ບົດລາຍງານປະເມີນຊັບສິນ (ຮຸ້ນ) ຈາກບໍລິສັດ ເອເຊຍ ໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ

ການຄິດໄລ່ K_e

- K_e = ອັດຕາຜົນຕອບແທນທີ່ບໍ່ມີຄວາມສ່ຽງ (R_f) + ຄ່າເບຕ້າ (β) x ສ່ວນຊົດເຊີຍຄວາມສ່ຽງຂອງຕະຫຼາດຮຸ້ນ (ERP) + ສ່ວນຊົດເຊີຍຄວາມສ່ຽງອື່ນໆ
- K_e = 8.00% + (0.1381x19.00%) + 0.00%
- K_e = 8.00% + 2.6239%
- **K_e = 10.62%**

ການຄິດໄລ່ ຕົ້ນທຶນສະເລ່ຍຖ່ວງນ້ຳໜັກ (WACC):

- WACC = (K_e × ສັດສ່ວນຂອງທຶນ) + (K_d × (1-ອາກອນກຳໄລ) × ສັດສ່ວນຂອງໜີ້ສິນ)
- WACC = (10.62% × 100%) + (7.1058% × 0%)
- WACC = 10.62% + 0%
- **WACC = 10.62%**

ເຖິງຢ່າງໃດກໍຕາມ ຫາກມີການປ່ຽນແປງຂອງສະພາບເສດຖະກິດໃນແຕ່ລະໄລຍະ ອາດຈະສົ່ງຜົນກະທົບຕໍ່ຂໍ້ສົມມຸດຖານຕາມທີ່ ທີ່ປຶກສາດ້ານການເງິນກຳນົດໄວ້ ຊຶ່ງສອດຄ່ອງກັບສົມມຸດຖານຂອງບໍລິສັດປະເມີນຊັບສິນ ແລະ ອາດຈະກະທົບຕໍ່ມູນຄ່າຮຸ້ນ ທຫບ ຢ່າງຫຼີກລ່ຽງບໍ່ໄດ້.

ໃນການປະເມີນມູນຄ່າຮຸ້ນແບບ Discounted Cash Flow ທີ່ປຶກສາດ້ານການເງິນໄດ້ນຳໃຊ້ເອກະສານລາຍງານການເງິນທີ່ໄດ້ຮັບຈາກ ບໍລິສັດ ແຕ່ປີ 2021 – 2025 ເປັນພື້ນຖານໃນການວິເຄາະລາຄາ, ຂໍ້ມູນທີ່ໄດ້ຈາກການສອບຖາມ ແລະ ໄດ້ຄາດຄະເນຜົນການດຳເນີນງານໃນອະນາຄົດ ດ້ວຍການວິເຄາະສະພາບເສດຖະກິດມະຫາພາກ, ຂະແໜງອຸດສາຫະກຳໄຟຟ້າ. ແຜນທຸລະກິດ ແລະ ຄາດຄະເນລາຍຮັບບໍລິສັດອີກ 26 ປີຕໍ່ໜ້າ ໂດຍເປັນການຕັ້ງຂໍ້ສົມມຸດຖານວ່າຂໍ້ມູນທັງໝົດຂ້ອນຂ້າງເໝາະສົມ. ນອກຈາກນັ້ນ, ທີ່ປຶກສາດ້ານການເງິນຍັງໄດ້ພິຈາລະນາເຖິງເຫດທີ່ ທຫບ ຍັງມີຄວາມສ່ຽງທີ່ຕິດພັນກັບການດຳເນີນທຸລະກິດທີ່ຈະຍັງສືບເນື່ອງໃນອະນາຄົດ (Going Concern Basic).

ການຄາດຄະເນທາງດ້ານການເງິນ (ຄາດຄະເນກະແສເງິນສົດ) ເພື່ອປະເມີນມູນຄ່າຊັບສິນ (ຮຸ້ນ) ມີລາຍລະອຽດ ດັ່ງລຸ່ມນີ້:

ລາຍການ	ຫົວໜ່ວຍ	2026F(1)	2027F(2)	2028F(3)	2029F(4)	2030F(5)
ກຳໄລສຸດທິ	(USD)	88,144,566	89,990,664	86,604,586	81,390,612	80,818,646
ບວກ ຄ່າຫຼ້ຍຫ້ຽນ	(USD)	25,525,097	25,525,097	25,595,028	25,525,097	25,525,097
ບວກ ລາຍຈ່າຍທາງການເງິນ (1-ອັດຕາອາກອນກຳໄລ)	(USD)	5,215	417	9,658	5,216	5,210
ລົບ ຄ່າໃຊ້ຈ່າຍໃນການລົງທຶນ	(USD)	3,711,000	2,354,000	12,800,000	1,355,000	5,754,502
ລົບ ສ່ວນປ່ຽນແປງຂອງທຶນໝຸນວຽນທີ່ບໍ່ແມ່ນເງິນສົດ	(USD)	4,458,359	4,499,528	4,548,146	4,316,033	4,315,877
ກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	(USD)	105,505,519	108,662,650	94,861,126	101,932,032	96,858,368
ໄລຍະເວລາ		1	2	3	4	5
ຕົວຄູນມູນຄ່າປະຈຸບັນ (PV factor)		0.9040	0.8172	0.7388	0.6678	0.6037
ອັດຕາຄິດຫຼຸດທີ່ເໝາະສົມ	%	10.62%	10.62%	10.62%	10.62%	10.62%
ມູນຄ່າປັດຈຸບັນ (PV) ຂອງກະແສເງິນສົດອິດສະລະໃຫ້ແກ່ວິສາຫະກິດທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	**(USD)**	**95,376,531**	**88,800,004**	**70,078,906**	**68,073,184**	**58,474,818**

ລາຍການ	ຫົວໜ່ວຍ	2031F(6)	2032F(7)	2033F(8)	2034F(9)	2035F(10)
ກຳໄລສຸດທິ	(USD)	80,732,391	80,583,824	80,552,358	80,458,435	80,361,807
ບວກ ຄ່າຫຼ້ຍຫ້ຽນ	(USD)	25,525,097	25,595,028	25,525,097	25,525,097	25,525,097
ບວກ ລາຍຈ່າຍທາງການເງິນ (1-ອັດຕາອາກອນກຳໄລ)	(USD)	5,210	5,210	5,210	5,210	5,210
ລົບ ຄ່າໃຊ້ຈ່າຍໃນການລົງທຶນ	(USD)	5,754,502	5,754,502	5,754,502	5,754,502	5,754,502
ລົບ ສ່ວນປ່ຽນແປງຂອງທຶນໝຸນວຽນທີ່ບໍ່ແມ່ນເງິນສົດ	(USD)	4,315,877	4,315,877	4,315,877	4,315,877	4,315,877
ກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	(USD)	96,772,112	96,693,477	96,592,080	96,498,157	96,401,529
ໄລຍະເວລາ		6	7	8	9	10
ຕົວຄູນມູນຄ່າປະຈຸບັນ (PV factor)		0.5458	0.4934	0.4460	0.4032	0.3645
ອັດຕາຄິດຫຼຸດທີ່ເໝາະສົມ	%	10.62%	10.62%	10.62%	10.62%	10.62%
ມູນຄ່າປະຈຸບັນ (PV) ຂອງກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	**(USD)**	**52,813,907**	**47,704,747**	**43,079,662**	**38,905,960**	**35,135,601**

ລາຍການ	ຫົວໜ່ວຍ	2036F(11)	2037F(12)	2038F(13)	2039F(14)	2040F(15)
ກຳໄລສຸດທິ	(USD)	80,202,568	80,160,120	80,054,898	73,284,424	80,054,898
ບວກ ຄ່າຫຼ້ຍຫ້ຽນ	(USD)	25,595,028	25,525,097	25,525,097	23,398,006	25,525,097
ບວກ ລາຍຈ່າຍທາງການເງິນ (1-ອັດຕາອາກອນກຳໄລ)	(USD)	5,210	5,210	5,210	4,776	5,210
ລົບ ຄ່າໃຊ້ຈ່າຍໃນການລົງທຶນ	(USD)	5,754,502	5,754,502	5,754,502	5,274,960	5,754,502
ລົບ ສ່ວນປ່ຽນແປງຂອງທຶນໝຸນວຽນທີ່ບໍ່ແມ່ນເງິນສົດ	(USD)	4,315,877	4,315,877	4,315,877	3,956,220	4,315,877
ກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	(USD)	96,312,221	96,199,842	96,094,620	87,987,502	95,514,827
ໄລຍະເວລາ		11	12	13	14	15
ຕົວຄູນມູນຄ່າປະຈຸບັນ (PV factor)		0.3295	0.2978	0.2693	0.2434	0.2200
ອັດຕາຄິດຫຼຸດທີ່ເໝາະສົມ	%	10.62%	10.62%	10.62%	10.62%	10.62%
ມູນຄ່າປະຈຸບັນ (PV) ຂອງກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	**(USD)**	**31,733,005**	**28,653,027**	**25,873,881**	**21,416,566**	**21,016,770**

ລາຍການ	ຫົວໜ່ວຍ	2041F(16)	2042F(17)	2043F(18)	2044F(19)	2045F(20)
ກຳໄລສຸດທິ	(USD)	79,946,644	79,835,270	79,720,687	79,602,800	79,481,515
ບວກ ຄ່າຫຼ້ຍຫ້ຽນ	(USD)	25,525,097	25,525,097	25,525,097	25,525,097	25,525,097
ບວກ ລາຍຈ່າຍທາງການເງິນ (1-ອັດຕາອາກອນກຳໄລ)	(USD)	5,210	5,210	5,210	5,210	5,210
ລົບ ຄ່າໃຊ້ຈ່າຍໃນການລົງທຶນ	(USD)	5,754,502	5,754,502	5,754,502	5,754,502	5,754,502
ລົບ ສ່ວນປ່ຽນແປງຂອງທຶນໝຸນວຽນທີ່ບໍ່ແມ່ນເງິນສົດ	(USD)	4,315,877	4,315,877	4,315,877	4,315,877	4,315,877
ກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	(USD)	95,406,573	95,295,199	95,180,615	95,062,729	94,941,444
ໄລຍະເວລາ		16	17	18	19	20
ຕົວຄູນມູນຄ່າປະຈຸບັນ (PV factor)		0.1989	0.1798	0.1626	0.1469	0.1328
ອັດຕາຄິດຫຼຸດທີ່ເໝາະສົມ	%	10.62%	10.62%	10.62%	10.62%	10.62%
ມູນຄ່າປະຈຸບັນ (PV) ຂອງກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	**(USD)**	**18,977,536**	**17,135,584**	**15,471,867**	**13,969,178**	**12,611,965**

ລາຍການ	ຫົວໜ່ວຍ	2046F(21)	2047F(22)	2048F(23)	2049F(24)	2050F(25)
ກຳໄລສຸດທິ	(USD)	79,356,733	79,228,353	79,096,270	78,960,377	78,820,565
ບວກ ຄ່າຫຼ້ຍຫ້ຽນ	(USD)	25,525,097	25,525,097	25,525,097	25,525,097	25,525,097
ບວກ ລາຍຈ່າຍທາງການເງິນ (1-ອັດຕາອາກອນກຳໄລ)	(USD)	5,210	5,210	5,210	5,210	5,210
ລົບ ຄ່າໃຊ້ຈ່າຍໃນການລົງທຶນ	(USD)	5,754,502	5,754,502	5,754,502	5,754,502	5,754,502
ລົບ ສ່ວນປ່ຽນແປງຂອງທຶນໝຸນວຽນທີ່ບໍ່ແມ່ນເງິນສົດ	(USD)	4,315,877	4,315,877	4,315,877	4,315,877	4,315,877
ກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	(USD)	94,816,662	94,688,281	94,556,198	94,420,306	94,280,494
ໄລຍະເວລາ		21	22	23	24	25
ຕົວຄູນມູນຄ່າປະຈຸບັນ (PV factor)		0.1201	0.1086	0.0981	0.0887	0.0802
ອັດຕາຄິດຫຼຸດທີ່ເໝາະສົມ	%	10.62%	10.62%	10.62%	10.62%	10.62%
ມູນຄ່າປະຈຸບັນ (PV) ຂອງກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	**(USD)**	**11,386,177**	**10,279,118**	**9,279,316**	**8,376,406**	**7,561,022**

ລາຍການ	ຫົວໜ່ວຍ	2051F(26)
ກຳໄລສຸດທິ	(USD)	72,120,326
ບວກ ຄ່າຫຼ້ຍຫ້ຽນ	(USD)	23,398,006
ບວກ ລາຍຈ່າຍທາງການເງິນ (1-ອັດຕາ ອາກອນກຳໄລ)	(USD)	4,776
ລົບ ຄ່າໃຊ້ຈ່າຍໃນການລົງທຶນ	(USD)	5,274,960
ລົບ ສ່ວນປ່ຽນແປງຂອງທຶນໝຸນວຽນທີ່ບໍ່ແມ່ນເງິນສົດ	(USD)	3,956,220
ກະແສເງິນສົດອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງ ກິດຈະການ (ບໍ່ມີ)	(USD)	86,291,927
ໄລຍະເວລາ		26
ຕົວຄູນມູນຄ່າປະຈຸບັນ (PV factor)		0.0725
ອັດຕາຄິດຫຼຸດທີ່ເໝາະສົມ	%	10.62%
ມູນຄ່າປະຈຸບັນ (PV) ຂອງກະແສເງິນສົດ ອິດສະລະຂອງກິດຈະການທີ່ຖືກປະເມີນ + ມູນຄ່າສຸດທ້າຍຂອງກິດຈະການ (ບໍ່ມີ)	**(USD)**	**6,255,977**
ມູນຄ່າກິດຈະການ		**624,944,839**
% ທີ່ຖືຄອງໂດຍ ຜ-ຟຟລ	**60%**	**374,966,903**

ມູນຄ່າກິດຈະການ (Enterprise Value) ຕາມວິທີ Discounted Cash Flow ເທົ່າກັບ 858,440,713 USD (ແປດຮ້ອຍຫ້າສິບແປດລ້ານສີ່ແສນສີ່ສິບພັນເຈັດຮ້ອຍສິບສາມ ໂດລາ ສະຫະລັດ) ແຕ່ເນື່ອງຈາກຜ່ານມາ ການຜະລິດໄຟຟ້າ, ການສ້າງລາຍຮັບ ແລະ ກະແສເງິນສົດໄຫຼເຂົ້າຕົວຈິງ ເຫັນວ່າມີການຜັນຜວນ 20%-30%, ສະນັ້ນເພື່ອໃຫ້ລາຄາມີຄວາມເໝາະສົມກັບຄວາມເປັນຈິງ, ພ້ອມທັງສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງຂອງ ຮຸ້ນ ທຫບ ຈຶ່ງໄດ້ຄິດຫຼຸດ 27.20% ຈາກລາຄາການປະເມີນ; ດັ່ງນັ້ນ, ມູນຄ່າຊັບສິນ ຫຼື ຮຸ້ນຂອງ ທຫບ ຈຶ່ງເທົ່າກັບ 624,944,839 USD (ຫົກຮ້ອຍຊາວສີ່ລ້ານເກົ້າແສນສີ່ສິບສີ່ພັນແປດຮ້ອຍສາມສິບເກົ້າ ໂດລາ ສະຫະລັດ ຖ້ວນ), ຖ້າຄິດຕາມສັດສ່ວນການຖືຮຸ້ນຂອງ ຜ-ຟຟລ ເທົ່າກັບ 374,966,903 USD (ສາມຮ້ອຍເຈັດສິບສີ່ລ້ານ ເກົ້າແສນຫົກສິບຫົກພັນເກົ້າຮ້ອຍສາມ ໂດລາ ສະຫະລັດ ຖ້ວນ) ຫຼື 375,000,000 USD (ສາມຮ້ອຍເຈັດສິບ ຫ້າລ້ານໂດລາ ສະຫະລັດ ຖ້ວນ) ຊຶ່ງໄດ້ຄຳນຶງເຖິງປັດໃຈຄວາມສ່ຽງ ແລະ ໂອກາດທາງທຸລະກິດທີ່ມີຄວາມເປັນ ໄປໄດ້ໃນການສ້າງກຳໄລຂອງ ທຫບ ໃນອະນາຄົດ. ***ດັ່ງນັ້ນ, ທີ່ປຶກສາດ້ານການເງິນຈຶ່ງເຫັນວ່າການປະເມີນມູນຄ່າ ຮຸ້ນ ດັ່ງກ່າວ ດ້ວຍວິທີນີ້ເປັນວິທີທີ່ມີຄວາມເໝາະສົມ.***

2. ສົມມຸດຖານ ແລະ ປັດໄຈທີ່ສົ່ງຜົນກະທົບ

ການຄິດໄລ່ມູນຄ່າຊັບສິນ (ຮຸ້ນ) ດ້ວຍວິທີ Discounted Cash Flow (DCF) ສຳລັບໂຄງການເຂື່ອນເທີນຫີນບູນ 60% ທີ່ ຜ-ຟຟລ ຖືຄອງ ຊຶ່ງແມ່ນການຄິດໄລ່ຫາ "ມູນຄ່າປະຈຸບັນ" ຂອງກະແສເງິນສົດທີ່ຈະເກີດຂຶ້ນໃນອະນາຄົດ.

ອີງຕາມຂໍ້ມູນທີ່ໄດ້ຮັບຈາກແຫຼ່ງຕ່າງໆເຊັ່ນ: ທຫບ, ຜ-ຟຟລ, ບົດລາຍງານປະເມີນຊັບສິນ (ຮຸ້ນ) ຈາກ ບໍລິສັດ ເອເຊຍ ໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ ສົມທົບກັບຂໍ້ມູນສາທາລະນະ, ສະພາບເສດຖະກິດ ລວມ ເຖິງການວິເຄາະສະຖານະການຕະຫຼາດທັງພາຍໃນ ແລະ ຕ່າງປະເທດ ແລະ ຫຼັກການການເງິນສາກົນ ເຫັນວ່າ ສົມມຸດຖານ ແລະ ປັດໄຈທີ່ສົ່ງຜົນກະທົບມີດັ່ງນີ້:

2.1 ສົມມຸດຖານຫຼັກໃນການສ້າງແບບຈຳລອງ DCF

ການຄິດໄລ່ຈະສົມມຸດເອົາກະແສເງິນສົດທີ່ຄາດວ່າຈະໄດ້ຮັບຕະຫຼອດອາຍຸສັນຍາສຳປະທານ:

- ລາຍຮັບຈາກການຂາຍໄຟຟ້າ (Revenue): ອີງຕາມສັນຍາຊື້-ຂາຍໄຟ (PPA) ທີ່ມີຢູ່, ອັດຕາຄ່າໄຟຟ້າ (Tariff) ແລະ ປະລິມານການຜະລິດໄຟຟ້າສະເລ່ຍຕໍ່ປີ.
- ອາຍຸສັນຍາສຳປະທານ (Concession Period): ໄລຍະເວລາທີ່ຍັງເຫຼືອຂອງໂຄງການ ເພາະ DCF ຈະຢຸດຄິດໄລ່ເມື່ອສັນຍາສິ້ນສຸດລົງ.
- ອັດຕາສ່ວນການຖືຮຸ້ນ: ຄິດໄລ່ສະເພາະສ່ວນແບ່ງກຳໄລ ຫຼື ເງິນປັນຜົນ (Dividend) ທີ່ ຜ-ຟຟລ ຈະໄດ້ຮັບໃນສັດສ່ວນ 60%.

2.2 ປັດໄຈທີ່ສົ່ງຜົນກະທົບຕໍ່ການຄິດໄລ່ (Key Drivers)

ປັດໄຈເຫຼົ່ານີ້ຈະເຮັດໃຫ້ຕົວເລກມູນຄ່າຮຸ້ນ "ເພີ່ມຂຶ້ນ" ຫຼື "ຫຼຸດລົງ":

1) ອັດຕາຄິດຫຼຸດ (Discount Rate / WACC)

ແມ່ນປັດໄຈທີ່ສຳຄັນທີ່ສຸດໃນ DCF. ຖ້າອັດຕາຄິດຫຼຸດສູງ ມູນຄ່າຮຸ້ນຈະຕ່ຳ, ຖ້າອັດຕາຄິດຫຼຸດຕ່ຳ ມູນຄ່າຈະສູງ ຊຶ່ງການຄິດໄລ່ຫາ Discount Rate / WACC ໄດ້ມີການພິຈາລະນາຈາກຫຼາຍປັດໄຈເຊັ່ນ:

- ຄວາມສ່ຽງຂອງປະເທດ (Country Risk): ສະພາບເສດຖະກິດມະຫາພາກ;
- ຕົ້ນທຶນທາງການເງິນ: ອັດຕາດອກເບ້ຍໃນຕະຫຼາດ ແລະ ຄວາມສາມາດໃນການຊຳລະໜີ້ຂອງ ທຫບ;
- ຄວາມເຊື່ອໝັ້ນຂອງເຈົ້າໜີ້: ເນື່ອງຈາກຕ້ອງໄດ້ຮັບການຍິນຍອມ (Consent) ຈາກຕົວແທນຜູ້ຖືຮຸ້ນກູ້ (Bondholders), ຄວາມສ່ຽງທີ່ເຈົ້າໜີ້ຈະບໍ່ເຫັນດີອາດຖືກນຳມາຄິດໄລ່ເປັນຄ່າຄວາມສ່ຽງເພີ່ມ.

2) ກະແສເງິນສົດສຸດທິ (Free Cash Flow)

- ຄ່າໃຊ້ຈ່າຍໃນການດຳເນີນງານ (OPEX): ຕົ້ນທຶນການບໍລິຫານ ແລະ ການບຳລຸງຮັກສາເຂື່ອນ;
- ການລົງທຶນເພີ່ມ (CAPEX): ງົບປະມານສ້ອມແປງໃຫຍ່ທີ່ອາດເກີດຂຶ້ນໃນອະນາຄົດ;
- ພາສີ ແລະ ອາກອນ: ນະໂຍບາຍອາກອນພາຍໃຕ້ສັນຍາສຳປະທານ;
- ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນອະນາຄົດ: ອາດເກີດມີຄ່າໃຊ້ຈ່າຍເພີ່ມຂຶ້ນເນື່ອງຈາກເຂື່ອນຖືກນຳໃຊ້ມາໄລຍະໜຶ່ງ ຊຶ່ງອາດມີການສ້ອມແປງໃຫຍ່ສູງກ່ວາເດີມ.

3. ຂໍ້ມູນ ແລະ ບ່ອນອີງໃນການປະເມີນ ຫຼື ການກຳນົດລາຄາ

- ຜົນການດຳເນີນທຸລະກິດຂອງ ທຫບ ໄລຍະຜ່ານມາ;
- ແຜນການດຳເນີນທຸລະກິດຂອງ ທຫບ ໄລຍະປີ 2026-2051;
- ບົດລາຍງານການປະເມີນມູນຄ່າທຸລະກິດ ແລະ ຊັບສິນ ສະບັບເລກທີ 006-2024 ຈາກບໍລິສັດ ເອເຊຍ ໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ;
- ອັດຕາດອກເບ້ຍຂອງພັນທະບັດລັດຖະບານສະຫະລັດ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ລາວ ໄລຍະເວລາ 10 ປີ;
- ສັນຍາສຳປະທານຂອງ ທຫບ ກັບ ລັດຖະບານ ສປປ ລາວ;
- ຂໍ້ມູນສະພາບຕະຫຼາດຂອງຮຸ້ນ ຜ-ຟຟລ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ.

4. ຂໍ້ມູນກ່ຽວກັບຜູ້ປະເມີນ ຄຳເຫັນຂອງສະພາບໍລິຫານຕໍ່ການປະເມີນ ຫຼື ການກຳນົດລາຄາ ແລະ ອື່ນໆ

4.1 ຂໍ້ມູນກ່ຽວກັບ ທີ່ປຶກສາດ້ານການເງິນ (ຜູ້ປະເມີນ)

- ຊື່ : ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ
- ປະເພດທຸລະກິດ : ທີ່ປຶກສາດ້ານການເງິນ (Financial Advisory);
  ຄ້ຳປະກັນການຈັດຈຳໜ່າຍຫຼັກຊັບ (Underwriter);
  ບໍລິການນາຍໜ້າຊື້-ຂາຍຫຼັກຊັບ (Brokerage).
- ສຳນັກງານຕັ້ງຢູ່ : ບ້ານ ສີຫອມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ
- ເວັບໄຊ : www.ldb-s.com.la
- ໂທລະສັບ : (+856-21) 224 001-3

5. ຄຳເຫັນຂອງສະພາບໍລິຫານຕໍ່ການປະເມີນ ຫຼື ການກຳນົດລາຄາ

ສະພາບໍລິຫານ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ສຶກສາ, ກວດກາ ແລະ ພິຈາລະນາຢ່າງລະອຽດຮອບຄອບ ບົນພື້ນຖານຂໍ້ມູນທີ່ໄດ້ຮັບຈາກທີ່ປຶກສາທາງດ້ານການເງິນ ແລະ ທີ່ປຶກສາກົດໝາຍ ເພື່ອປົກປ້ອງສິດຜົນປະໂຫຍດສູງສຸດຂອງບໍລິສັດ ແລະ ຜູ້ຖືຮຸ້ນ, ຊຶ່ງມີຄຳເຫັນດັ່ງນີ້:

1) ຄວາມສົມເຫດສົມຜົນຂອງວິທີການ ແລະ ຜົນການປະເມີນມູນຄ່າ

ສະພາບໍລິຫານມີຄວາມເຫັນວ່າ ວິທີການປະເມີນມູນຄ່າຮຸ້ນໂດຍນຳໃຊ້ວິທີການຄິດໄລ່ມູນຄ່າປະຈຸບັນຂອງກະແສເງິນສົດ (Discounted Cash Flow - DCF) ແມ່ນມີຄວາມເໝາະສົມ ແລະ ສອດຄ່ອງກັບມາດຕະຖານການປະເມີນມູນຄ່າສາກົນ (IVS). ລາຄາທີ່ຖືກກຳນົດຂຶ້ນນັ້ນໄດ້ສະທ້ອນເຖິງມູນຄ່າທີ່ແທ້ຈິງ (Fair Value) ໂດຍໄດ້ຄຳນຶງເຖິງສົມມຸດຖານດ້ານເຕັກນິກ, ອັດຕາຄ່າໄຟຟ້າຕາມສັນຍາຊື້-ຂາຍໄຟຟ້າ (PPA), ໄລຍະເວລາສຳປະທານທີ່ເຫຼືອຢູ່, ຄວາມສ່ຽງທາງດ້ານເສດຖະກິດມະຫາພາກ, ຄວາມຜັນຜວນຂອງແຜນການໃນອະນາຄົດຂອງ ທຫບ ຢ່າງຄົບຖ້ວນ.

2) **ຄຸນສົມບັດ ແລະ ຄວາມເປັນອິດສະລະຂອງທີ່ປຶກສາດ້ານການເງິນ (ຜູ້ປະເມີນ)**

ສະພາບໍລິຫານຢັ້ງຢືນວ່າ ທີ່ປຶກສາດ້ານການເງິນ (ຜູ້ປະເມີນມູນຄ່າຮຸ້ນ) ທີ່ຖືກຄັດເລືອກ ແມ່ນເປັນນິຕິບຸກຄົນທີ່ມີຄວາມເປັນອິດສະລະ, ບໍ່ມີສ່ວນໄດ້ສ່ວນເສຍທີ່ອາດກໍ່ໃຫ້ເກີດຄວາມຂັດແຍ່ງທາງຜົນປະໂຫຍດ (Conflict of Interest) ແລະ ເປັນຜູ້ທີ່ມີລາຍຊື່ໃນບັນຊີທີ່ໄດ້ຮັບອະນຸຍາດຈາກ ສຄຄຊ.

ພາກທີ V

ຂໍ້ມູນ ກ່ຽວກັບເນື້ອໃນ ແລະ ເງື່ອນໄຂສຳຄັນຂອງສັນຍາຕ່າງໆທີ່ຕິດພັນ

1. ຂໍ້ຈຳກັດໃນການໂອນຮຸ້ນ (Restrictions on transfer) ແລະ ເງື່ອນໄຂບັງຄັບໃຊ້ກ່ອນ ໃນສັນຍາຂາຍ (Conditions Precedent)

ການໂອນຮຸ້ນ 60% ໃນ ທຫບ ຈະສຳເລັດສົມບູນໄດ້ ກໍຕໍ່ເມື່ອບັນດາຂໍ້ຈຳກັດໃນການໂອນຮຸ້ນ ແລະ ເງື່ອນໄຂບັງຄັບກ່ອນ ທີ່ກຳນົດໄວ້ໃນສັນຍາສຳຄັນຕ່າງໆເປັນຕົ້ນແມ່ນ: ສັນຍາຮ່ວມຮຸ້ນ (Shareholder Agreement), ສັນຍາຂາຍ (Share Purchase Agreement) ຊຶ່ງຕ້ອງໄດ້ຮັບການປະຕິບັດໃຫ້ສຳເລັດຄົບຖ້ວນ ຫຼື ໄດ້ຮັບການຜ່ອນຜັນ ລາຍລະອຽດດັ່ງນີ້:

ເງື່ອນໄຂ ທີ່ຕ້ອງປະຕິບັດກ່ອນ	ລາຍລະອຽດ	ສະຖານະ
1. ການອະນຸມັດຈາກ ພາກສ່ວນລັດຖະບານ ແລະ ອົງການພາກລັດ ທີ່ກ່ຽວຂ້ອງ:	• ຕ້ອງໄດ້ຮັບການເຫັນດີ ຫຼື ອະນຸມັດການເຮັດທຸລະກຳ ຈາກ ລັດຖະບານ ແລະ ກະຊວງການເງິນ ກ່ອນວັນທີ່ສຳເລັດການໂອນຮຸ້ນ (Closing Date).	ສຳເລັດແລ້ວ
	• ຕ້ອງມີການລາຍງານໃຫ້ ສຄຄຊ ແລະ ກະຊວງ ແຜນການ ແລະ ການລົງທຶນ ຊາບຢ່າງເປັນທາງການ.	ຢູ່ໃນໄລຍະດຳເນີນ ການ
2. ການປະເມີນມູນຄ່າ:	• ຕ້ອງໄດ້ຮັບບົດລາຍງານການປະເມີນມູນຄ່າຍຸຕິທຳ (Appraisal of Fair Value) ຈາກບໍລິສັດປະເມີນ ອິດສະລະທີ່ໄດ້ຮັບການຍອມຮັບ.	ສຳເລັດແລ້ວ
3. ການອະນຸມັດພາຍໃນ ອົງກອນ:	• ຕ້ອງໄດ້ຮັບການອະນຸມັດຈາກສະພາບໍລິຫານ ຜ-ຟຟລ.	ສຳເລັດແລ້ວ
	• ຕ້ອງໄດ້ຮັບການສະຫຼະສິດໃນການຊື້ຮຸ້ນກ່ອນ (Waiver of Pre-emptive rights or Rights of First Refusal) ຈາກຜູ້ຖືຮຸ້ນລາຍອື່ນໆ ໃນ ທຫບ.	ຢູ່ໃນໄລຍະດຳເນີນ ການ
	• ຕ້ອງໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ ຂອງ ຜ-ຟຟລ.	ຢູ່ໃນໄລຍະດຳເນີນ ການ
4. ການເຫັນດີຈາກເຈົ້າໜີ້:	• ຕ້ອງໄດ້ຮັບການອະນຸມັດຈາກທະນາຄານຜູ້ໃຫ້ກູ້ພາຍ ໃນ ຂອງ ຜ-ຟຟລ.	ຢູ່ໃນໄລຍະດຳເນີນ ການ
	• ຕ້ອງໄດ້ຮັບການເຫັນດີ (Consent) ຫຼື ການຜ່ອນຜັນ (Waiver) ຈາກຕົວແທນຜູ້ຖືຮຸ້ນກູ້ (Bondholders' Representative) ທີ່ກ່ຽວຂ້ອງກັບເອກະສານຮຸ້ນກູ້ (Bond Documents) ຂອງ ຜ-ຟຟລ.	ຢູ່ໃນໄລຍະດຳເນີນ ການ

ພາກທີ VI

ຄຳເຫັນ ກ່ຽວກັບການຊີ້ຂາດຊັບສິນ

1. ຄຳເຫັນຂອງສະພາບໍລິຫານ ກ່ຽວກັບການຊີ້ຂາດຊັບສິນ

ຊັບສິນທີ່ ຜ-ຟຟລ ຖືຄອງໃນ ທຫບ ສັດສ່ວນ 60% ແມ່ນຊັບສິນທີ່ມີຄຸນນະພາບ (Core Asset) ຊຶ່ງ ການດຳເນີນທຸລະກິດຖືວ່າຢູ່ໃນເກນທີ່ດີ ແລະ ຍັງມີລັກສະນະ ໃຫ້ຜົນຕອບແທນທີ່ສູງ (High Margin) ແລະ ຕົ້ນທຶນປ່ຽນແປງຕ່ຳ (Low Variable Cost) ເຖິງແມ່ນວ່າຈະມີຕົ້ນທຶນຄົງທີ່ສູງໃນເບື້ອງຕົ້ນ ແຕ່ເມື່ອດຳເນີນ ງານໄປໄລຍະໜຶ່ງ ຄວາມສາມາດໃນການສ້າງກຳໄລຈະເພີ່ມຂຶ້ນຢ່າງຕໍ່ເນື່ອງ. ເຖິງຢ່າງໃດກໍ່ຕາມ, ພາຍໃຕ້ການ ວິເຄາະສະພາບທາງການເງິນໃນປະຈຸບັນຂອງ ຜ-ຟຟລ, ສະພາບໍລິຫານມີຄຳເຫັນວ່າ: ເຖິງແມ່ນວ່າ ທຫບ ຈະມີ ຜົນການດຳເນີນງານທີ່ດີ, ມີລາຍຮັບຈາກການຂາຍໄຟຟ້າ ສົ່ງອອກ ເປັນເງິນຕາຕ່າງປະເທດ ແລະ ການຈ່າຍເງິນ ປັນຜົນໃຫ້ ຜ-ຟຟລ ໃນແຕ່ລະປີ ແຕ່ປະລິມານກະແສເງິນສົດດັ່ງກ່າວ ຍັງບໍ່ພຽງພໍທີ່ຈະນຳມາປັບປຸງໂຄງສ້າງທາງ ດ້ານຊັບສິນ, ໜີ້ສິນ ແລະ ທຶນຂອງ ຜ-ຟຟລ ຊຶ່ງຈະສົ່ງຜົນຕໍ່ຄວາມໜ້າເຊື່ອຖືຂອງບໍລິສັດໃນຕະຫຼາດທຶນທັງພາຍ ໃນ ແລະ ຕ່າງປະເທດ.

ການຊີ້ຂາດຊັບສິນໃນຄັ້ງນີ້ ແມ່ນການພິຈາລະນາ ແລະ ການຕັດສິນໃຈທາງຍຸດທະສາດໃນການປ່ຽນຊັບ ສິນໄລຍະຍາວ ໃຫ້ເປັນ ຊັບສິນທີ່ມີສະພາບຄ່ອງ ເພື່ອນຳເງິນທີ່ໄດ້ຈາກການຂາຍໄປຊຳລະໜີ້ສິນ ເພື່ອຫຼຸດຜ່ອນ ພາລະຜູກພັນທາງການເງິນດ້ານຕົ້ນທຶນ ແລະ ດອກເບ້ຍຢ່າງມີສາລະສຳຄັນ ຊຶ່ງຈະຊ່ວຍເຮັດໃຫ້ໂຄງສ້າງທາງການ ເງິນຂອງ ຜ-ຟຟລ ມີຄວາມເຂັ້ມແຂງຂຶ້ນ.

ຫຼັງຈາກ ຜ-ຟຟລ ໄດ້ຂາຍຮຸ້ນ 60% ທີ່ຖືຢູ່ ທຫບ ອອກໄປ, ໃນນາມສະພາບໍລິຫານ ເຫັນວ່າ ຜ-ຟຟລ ຍັງ ສາມາດດຳເນີນທຸລະກິດໄດ້ຢ່າງຕໍ່ເນື່ອງ ຈາກການຄາດການວ່າໂຄງສ້າງທາງການເງິນຈະເຂັ້ມແຂງຂຶ້ນ ແລະ ຜ-ຟຟລ ຈະແໝໃສ່ການບໍລິຫານຊັບສິນ ແລະ ໂຄງການອື່ນໆທີ່ບໍລິສັດຖືຄອງ ໃຫ້ສາມາດສ້າງກຳໄລ ແລະ ຜົນຕອບ ແທນມາທົດແທນສ່ວນທີ່ສູນເສຍລາຍຮັບໄປຈາກການຊີ້ຂາດຊັບສິນໃນຄັ້ງນີ້.

ພາກທີ VII

ປັດໄຈຄວາມສ່ຽງທີ່ຕິດພັນກັບ ການຊີ້ຂາດຊັບສິນ

1. ຄວາມສ່ຽງໃນການດຳເນີນທຸລະກິດ

- ຄວາມສ່ຽງຈາກຜົນໄດ້ຮັບຈາກການຜະລິດໄຟຟ້າຈະຫຼຸດລົງ;
- ຄວາມສ່ຽງຈາກຄວາມບໍ່ແນ່ນອນຂອງລາຍໄດ້ ແລະ ຜົນການດຳເນີນງານ;
- ຄວາມສ່ຽງຈາກຄວາມບໍ່ເຊື່ອໝັ້ນໃນການດຳເນີນທຸລະກິດ ຜ-ຟຟລ ຈາກຜູ້ລົງທຶນ;
- ຄວາມສ່ຽງຈາກການທີ່ຈະບໍ່ສາມາດຊຳລະໜີ້ ທັງພາຍໃນ ແລະ ຕ່າງປະເທດ ໄດ້ໃນໄລຍະຍາວ;
- ຄວາມສ່ຽງຈາກການຖືກປັບຫຼຸດໃນການຈັດອັນດັບຄວາມໜ້າເຊື່ອຖື ແລະ ພົບຄວາມຫຍຸ້ງຍາກໃນການໄປຊອກຫາແຫຼ່ງທຶນໃນອະນາຄົດ.

2. ຄວາມສ່ຽງທາງດ້ານການເງິນ

- ຄວາມສ່ຽງຈາກສະຖານະພາບທາງການເງິນໃນໄລຍະຍາວ;
- ຄວາມສ່ຽງຈາກການຜັນຜວນຂອງອັດຕາແລກປ່ຽນ;
- ຄວາມສ່ຽງຈາກອັດຕາດອກເບ້ຍເງິນກູ້;
- ຄວາມສ່ຽງດ້ານຄວາມພຽງພໍຂອງເງິນທຶນໝຸນວຽນ;
- ຄວາມສ່ຽງຈາກແຫຼ່ງລາຍຮັບທີ່ເປັນເປັນເງິນຕາຕ່າງປະເທດຫຼຸດລົງ ເນື່ອງຈາກເປັນໂຄງການທີ່ຂາຍໄຟຟ້າສົ່ງອອກໄປຕ່າງປະເທດ (EGAT).

3. ຄວາມສ່ຽງໃນການຄຸ້ມຄອງບໍລິຫານ

- ຄວາມສ່ຽງດ້ານຄວາມເຊື່ອໝັ້ນຂອງບັນດາສະຖາບັນການເງິນ, ນັກລົງທຶນ ແລະ ຜູ້ຖືຮຸ້ນຕ່າງໆ ຕໍ່ກັບການຄຸ້ມຄອງບໍລິຫານ.

ພາກທີ VIII

ແຜນການນຳໃຊ້ທຶນທີ່ໄດ້ຈາກການຊື້ຂາດຊັບສິນ

ແຜນການນຳໃຊ້ທຶນທີ່ໄດ້ຈາກການຂາຍຮຸ້ນ 60% ຂອງໂຄງການເທີນຫິນບູນ ແມ່ນເພື່ອປັບປຸງໂຄງສ້າງ ທາງດ້ານຊັບສິນ, ໜີ້ສິນ ແລະ ທຶນຂອງ ຜ-ຟຟລ.

ພາກທີ IX

ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນ

1. ການຢັ້ງຢືນຈາກທີ່ປຶກສາທາງດ້ານການເງິນ

ບົດລາຍງານສະບັບນີ້ ຖືກສ້າງຂຶ້ນໂດຍທີ່ປຶກສາດ້ານການເງິນ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກ ຜ-ຟຟລ ເພື່ອເຮັດບົດລາຍງານການໂອນ (ຂາຍ) ຮຸ້ນ ບໍລິສັດ ເທີນຫິນບຸນ ພາວເວີ ຈຳກັດ ທີ່ຖືໂດຍ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ໂດຍອີງຕາມສັນຍາວ່າດ້ວຍການໃຫ້ບໍລິການເປັນທີ່ປຶກສາທາງດ້ານການເງິນ.

ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ ໃນນາມທີ່ປຶກສາດ້ານການເງິນ ຂໍຢັ້ງຢືນວ່າ:

- ການເຮັດບົດລາຍງານສະບັບນີ້ ແມ່ນໄດ້ອີງຕາມຂໍ້ມູນຕ່າງໆ, ເອກະສານລາຍງາຍການເງິນ ແລະ ບົດປະເມີນມູນຄ່າຊັບສິນຈາກຜູ້ປະເມີນອິດສະລະ ທີ່ໄດ້ຮັບການສະໜອງຈາກ ຜ-ຟຟລ ລວມເຖິງຂໍ້ມູນທີ່ ຜ-ຟຟລ ຮຽກເອົາກັບພາກສ່ວນທີ່ກ່ຽວຂ້ອງ. ທີ່ປຶກສາດ້ານການເງິນ ໄດ້ກວດສອບຂໍ້ມູນດັ່ງກ່າວຕາມຄວາມເໝາະສົມ;
- ເນື້ອໃນ, ຂໍ້ມູນ, ສົມມຸດຖານ ແລະ ການວິເຄາະທັງໝົດທີ່ຢູ່ໃນບົດລາຍງານສະບັບນີ້ ໄດ້ຜ່ານການນຳສະເໜີ, ການກວດກາ ແລະ ໄດ້ຮັບການເຫັນດີຈາກຄະນະຜູ້ບໍລິຫານຂອງ ຜ-ຟຟລ ແລະ ພາກສ່ວນທີ່ກ່ຽວຂ້ອງແລ້ວ;
- ການວິເຄາະ ແລະ ການຄາດຄະເນຕ່າງໆ ແມ່ນອີງຕາມສົມມຸດຖານພາຍໃຕ້ສະພາວະເສດຖະກິດປະຈຸບັນ. ຫາກມີການປ່ຽນແປງຂອງປັດໄຈພາຍນອກທີ່ບໍ່ສາມາດຄວບຄຸມໄດ້ ອາດມີຜົນຕໍ່ຕົວເລກໃນອະນາຄົດ.

ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ

ຊື່ ແລະ ນາມສະກຸນ	**ຕຳແໜ່ງ**	**ລາຍເຊັນ**
ທ່ານ ນາງ ວິໄລທອງ ທຳມະວົງສາ	ຜູ້ອຳນວຍການ	_____

ບົດລາຍງານກ່ຽວກັບຄຳເຫັນຂອງທີ່ປຶກສາດ້ານກົດໝາຍ ກ່ຽວກັບການໂອນຮຸ້ນ ທີ່ ຜ-ຟຟລ ຖືຄອງ ໃນບໍລິສັດ ເຫີນ-ຫີນບູນ ພາວເວີ ຈຳກັດ ໃນສັດສ່ວນ 60%

ໂດຍບໍລິສັດ LS Horizon (Lao) ຈຳກັດຜູ້ດຽວ

LSHORIZON
ATTORNEYS-AT-LAW

ບົດລາຍງານ

ເຖິງ: ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ	**ຈາກ: ບໍລິສັດ ແອລ ແອສ ຮໍຣາຍຊອນ (ລາວ) ຈຳກັດຜູ້ດຽວ**
ສຳເນົາສົ່ງເຖິງ:	**ວັນທີ: 27 ເມສາ 2026**
ເລື່ອງ: ບົດລາຍງານກ່ຽວກັບຄຳເຫັນຂອງທີ່ປຶກສາດ້ານກົດໝາຍກ່ຽວກັບການໂອນຮຸ້ນຂອງ ຜ-ຟຟລ ໃນ ບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ.	

ພວກຂ້າພະເຈົ້າ, ບໍລິສັດ ແອລແອສ ຮໍຣາຍຊອນ (ລາວ) ຈຳກັດຜູ້ດຽວ ໄດ້ກະກຽມບົດລາຍງານສະບັບນີ້ ຕາມການຮຽກຮ້ອງຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“**ຜ-ຟຟລ**” ຫຼື “**ບໍລິສັດ**”) ເພື່ອປະກອບຄຳເຫັນທາງດ້ານກົດໝາຍ ໂດຍສອດຄ່ອງກັບຂໍ້ຕົກລົງວ່າດ້ວຍການໄດ້ມາ ແລະ ການຊື້ຂາດຊັບສິນຂອງບໍລິສັດຈົດທະບຽນ ເລກທີ 09/ຄຄຊ, ລົງວັນທີ 22 ກໍລະກົດ 2022 (“**ຂໍ້ຕົກລົງ**”) ໂດຍອີງໃສ່ຂໍ້ມູນ ດັ່ງຕໍ່ໄປນີ້:

A. ຂໍ້ເທັດຈິງ

ບໍລິສັດ ໄດ້ຮັບການຊີ້ນຳຈາກລັດຖະບານ ແຫ່ງ ສປປ ລາວ (“**ລັດຖະບານ**”) ໃຫ້ຂາຍຮຸ້ນທັງໝົດຂອງຕົນ ໃນ ບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ (“**ບໍລິສັດ ເທີນ-ຫີນບູນ**”) ຊຶ່ງເທົ່າກັບ 60% ຂອງຮຸ້ນທັງໝົດຂອງບໍລິສັດ ເທີນ-ຫີນບູນ (“ຊັບສິນ”) ໃຫ້ແກ່ກຸ່ມບໍລິສັດ ຟົງຊັບທະວີ ຈຳກັດຜູ້ດຽວ (“**ກພຊວ**” ຫຼື “**ຜູ້ຮັບໂອນຮຸ້ນ**”) (“**ທຸລະກຳ**”). ລາຄາຊື້ - ຂາຍຮຸ້ນ ແມ່ນ 375,000,000 ດອນລາສະຫະລັດ (ສາມຮ້ອຍເຈັດສິບຫ້າລ້ານ ດອນລາສະຫະລັດ).

ການຊື້ - ຂາຍຮຸ້ນຖືວ່າເປັນການຊື້ - ຂາຍຊັບສິນຂອງບໍລິສັດພາຍໃຕ້ຂໍ້ຕົກລົງ. ພວກຂ້າພະເຈົ້າໄດ້ອີງໃສ່ຂະໜາດຂອງທຸລະກຳ ທີ່ໄດ້ມີການຄິດໄລ່ ໂດຍບໍລິສັດ ແລະ ທີ່ປຶກສາດ້ານການເງິນ ແລະ ບໍ່ໄດ້ມີການກວດກາຄືນດ້ວຍຕົນເອງ.

ອີງໃສ່ຂໍ້ມູນທີ່ໄດ້ຮັບ, ຂະໜາດຂອງທຸລະກຳ, ທີ່ຄິດໄລ່ ບົນພື້ນຖານຊັບສິນສຸດທິ ແມ່ນ 61,36%. ການຄິດໄລ່ດັ່ງກ່າວແມ່ນໄດ້ມາຈາກ ບົດລາຍງານການເງິນຂອງບໍລິສັດ ທີ່ຖືກກວດສອບ ໃນວັນທີ 31 ທັນວາ 2024 ແລະ ບົດລາຍງານທີ່ຖືກກວດສອບຂອງບໍລິສັດ ເທີນ-ຫີນບູນ ໃນວັນທີດຽວກັນຊຶ່ງທັງສອງບົດລາຍງານໄດ້ຖືກກວດສອບ ແລະ ຮັບຮອງໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ (“**ຄຄຊ**”).

ເນື່ອງຈາກວ່າ: ຂະໜາດຂອງທຸລະກຳ ເທົ່າກັບ ຫຼື ເກີນ 50% ແຕ່ ບໍ່ເຖິງ 100% ຂອງທຸລະກຳຈະຕົກຢູ່ໃນ ຂອບເຂດຂອງມາດຕາ 12 (2) ຂອງຂໍ້ຕົກລົງ. ເພາະສະນັ້ນ, ບໍລິສັດຕ້ອງແຕ່ງຕັ້ງທີ່ປຶກສາທາງດ້ານກົດໝາຍ ເພື່ອ ສະໜອງຄຳເຫັນທາງດ້ານກົດໝາຍ ໂດຍສອດຄ່ອງກັບມາດຕາ 20 ຂອງຂໍ້ຕົກລົງ.

ເພາະສະນັ້ນ, ບົດລາຍງານສະບັບນີ້ ໄດ້ຖືກກະກຽມເພື່ອ ໃຫ້ການວິນິໃສຕາມ ມາດຕາ 20 ຂອງຂໍ້ຕົກລົງ.

B. ການວິນິໃສທາງດ້ານກົດໝາຍ ພາຍໃຕ້ມາດຕາ 20 ຂອງຂໍ້ຕົກລົງ

1. ການປະຕິບັດຕາມຂໍ້ຕົກລົງ

ພາຍໃຕ້ຂໍ້ຕົກລົງ, ບໍລິສັດ ຕ້ອງປະຕິບັດຕາມພັນທະກ່ຽວກັບການຊື້ຂາດຊັບສິນ.

1) ພັນທະໃນການຄິດໄລ່ຂະໜາດຂອງທຸລະກິດພາຍໃຕ້ມາດຕາ 7

ພາຍໃຕ້ ມາດຕາ 7 ຂອງຂໍ້ຕົກລົງ ບໍລິສັດ ຕ້ອງຄິດໄລ່ຂະໜາດຂອງທຸລະກຳໂດຍນຳໃຊ້ຮູບແບບ ສີ່ອັນ. ບໍລິສັດຕ້ອງຖືເອົາຂະໜາດທຸລະກຳ ທີ່ສູງສຸດມາເປັນພື້ນຖານໃນການກຳນົດຂັ້ນຂອງການ ຮັບຮອງທຸລະກຳ.

ອີງຕາມບົດລາຍງານຂອງທີ່ປຶກສາດ້ານການເງິນທີ່ພວກຂ້າພະເຈົ້າໄດ້ຮັບ ທີ່ເຮັດໂດຍ ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ (“**ບໍລິສັດຫຼັກຊັບ ແອລ໌ດີບີ**”), ປາກົດວ່າຂະໜາດຂອງທຸລະກຳໄດ້ຖືກຄິດໄລ່ ຕາມທີ່ກຳນົດໃນມາດຕາ 7 ແລະ ມູນຄ່າສູງສຸດ ໄດ້ຖືກນຳໃຊ້ເພື່ອກຳນົດຂັ້ນຂອງການຮັບຮອງ. ພວກ ຂ້າພະເຈົ້າ ບໍ່ໄດ້ກວດສອບຄືນການຄິດໄລ່ດັ່ງກ່າວ.

ອີງໃສ່ການຄິດໄລ່ດັ່ງກ່າວ, ຂະໜາດຂອງທຸລະກຳ ເກີນ ຫຼື ເທົ່າກັບ 50% ແຕ່ບໍ່ເກີນ 100% ຂອງ ຂັ້ນທີ່ກຳນົດໄວ້, ສະນັ້ນຈຶ່ງຕົກຢູ່ໃນກອບຂອງມາດຕາ 12 (2) ຂອງຂໍ້ຕົກລົງ ແລະ ບໍລິສັດຕ້ອງ ປະຕິບັດຕາມມາດຕາ 12 (2) ໃນການຮັບຮອງທຸລະກຳ.

2) ພັນທະໃນການແຕ່ງຕັ້ງທີ່ປຶກສາ ພາຍໃຕ້ມາດຕາ 12(2)

ພາຍໃຕ້ມາດຕາ 12 (2) ຂອງຂໍ້ຕົກລົງ ໃນກໍລະນີ ຂະໜາດຂອງທຸລະກຳ ເທົ່າກັບ ຫຼື ເກີນ 50% ແຕ່ ບໍ່ເກີນ 100% ບໍລິສັດ ຜ-ຟຟລ ຕ້ອງດຳເນີນການບາງຢ່າງກ່ຽວກັບທຸລະກຳ.

ໂດຍສະເພາະແລ້ວ, ບໍລິສັດ ຕ້ອງ (i) ແຕ່ງຕັ້ງບໍລິສັດຫຼັກຊັບທີ່ຈົດທະບຽນ ໃຫ້ເປັນທີ່ປຶກສາທາງການ ເງິນ, ຊຶ່ງຮັບຜິດຊອບກະກຽມບົດລາຍງານກ່ຽວກັບການຊື້ຂາດຊັບສິນ ໂດຍສອດຄ່ອງກັບມາດຕາ 18 ຂອງຂໍ້ຕົກລົງ, ແຕ່ງຕັ້ງທີ່ປຶກສາການເງິນອິດສະຫຼະ ເພື່ອໃຫ້ຄຳເຫັນຕໍ່ ຄຄຊ ແລະ ຕະຫຼາດຫຼັກຊັບ ລາວ ພາຍໃຕ້ມາດຕາ 21, ຊຶ່ງຄຳເຫັນດັ່ງກ່າວຕ້ອງລວມເອົາບັນຫາ ທີ່ລະບຸໃນມາດຕາ 19 ຂອງຂໍ້ ຕົກລົງ, (iii) ແຕ່ງຕັ້ງທີ່ປຶກສາທາງດ້ານກົດໝາຍ ເພື່ອໃຫ້ຄຳເຫັນທາງດ້ານກົດໝາຍ ໂດຍສອດຄ່ອງ

ກັບມາດຕາ 20 ຂອງຂໍ້ຕົກລົງ ສຳລັບເປີດເຜີຍໂດຍສອດຄ່ອງກັບມາຕາ 21 ຂອງຂໍ້ຕົກລົງ, ແລະ (iv) ແຕ່ງຕັ້ງຜູ້ປະເມີນຊັບສິນ.

ອີງໃສ່ເອກະສານທີ່ສະໜອງໃຫ້ພວກຂ້າພະເຈົ້າ, ບໍລິສັດ ໄດ້ແຕ່ງຕັ້ງ (i) ບໍລິສັດຫຼັກຊັບ ແອລ໌ດີບີ ເປັນທີ່ປຶກສາດ້ານການເງິນ ທີ່ໄດ້ກະກຽມບົດລາຍງານຂອງທີ່ປຶກສາດ້ານການເງິນ, (ii) ບໍລິສັດ ເອເຊຍໂລ ຕັດ ປະເມີນມູນຄ່າຊັບສິນ ຈຳກັດ ທີ່ເປັນຜູ້ປະເມີນຊັບສິນ.

ພວກຂ້າພະເຈົ້າໄດ້ຖືກແຕ່ງຕັ້ງໃຫ້ເປັນທີ່ປຶກສາດ້ານກົດໝາຍ ແລະ ພວກຂ້າພະເຈົ້າໄດ້ກະກຽມ ຄຳເຫັນທາງດ້ານກົດໝາຍ ໂດຍສອດຄ່ອງກັບ ມາດຕາ 20 ຂອງຂໍ້ຕົກລົງ.

ເຖິງຢ່າງໃດກໍຕາມ, ອີງຕາມເອກະສານທີ່ໄດ້ສະໜອງໃຫ້ພວກຂ້າພະເຈົ້າ, ພວກຂ້າພະເຈົ້າຍັງບໍ່ເຫັນເອກະສານຢັ້ງຢືນກ່ຽວກັບການແຕ່ງຕັ້ງທີ່ປຶກສາດ້ານການເງິນອິດສະຫຼະ ຕາມການກຳນົດຂອງ ມາດຕາ 12 (2) ຂອງຂໍ້ຕົກລົງ. ບໍລິສັດໄດ້ແຈ້ງຕໍ່ພວກຂ້າພະເຈົ້າວ່າ: ການແຕ່ງຕັ້ງທີ່ປຶກສາດ້ານການເງິນອິດສະຫຼະຢູ່ໃນຂັ້ນຕອນຂອງການຈັດຊື້. ພວກຂ້າພະເຈົ້າບໍ່ໄດ້ກວດກາຄືນຂໍ້ມູນດັ່ງກ່າວ.

3) <u>ພັນທະໃນການຊີ້ແຈງ ແລະ ວິນິໃສພາຍໃຕ້ມາດຕາ 13</u>

ພາຍໃຕ້ມາດຕາ 13 ຂອງຂໍ້ຕົກລົງ, ບໍລິສັດ ຕ້ອງອະທິບາຍ ແລະ ວິນິໃສ ຢ່າງຈະແຈ້ງກ່ຽວກັບລາຍລະອຽດໃນການຊື້ຂາດຊັບສິນ. ພັນທະດັ່ງກ່າວລວມມີການອະທິບາຍວິທີການ, ຂໍ້ມູນ ແລະ ປັດໃຈອື່ນໆ ທີ່ນຳໃຊ້ໃນການປະເມີນຊັບສິນ ຫຼື ໃນການກຳນົດລາຄາທຸລະກຳ, ແລະ ເປີດເຜີຍຂໍ້ມູນດັ່ງກ່າວໃນບົດລາຍງານກ່ຽວກັບການຊື້ຂາດຊັບສິນ.

ນອກຈາກນັ້ນສະພາບໍລິຫານຂອງບໍລິສັດຈົດທະບຽນ ຕ້ອງສະໜອງຄຳເຫັນກ່ຽວກັບຄວາມເໝາະສົມຂອງການສັນນິຖານ, ວິທີການ ແລະ ປັດໃຈຫຼັກອື່ນໆ ທີ່ນຳໃຊ້ໃນການປະເມີນຊັບສິນ ແລະ ຜົນຂອງການປະເມີນດັ່ງກ່າວ ໃນບົດລາຍງານທີ່ກ່ຽວກັບການຊື້ຂາດຊັບສິນ. ສິ່ງດັ່ງກ່າວມີການສົມທຽບລາຄາຕະຫຼາດ, ອັດຕາສ່ວນລາຄາ ແລະ ຜົນຕອບແທນ, ແລະ/ຫຼື ວິທີການປະເມີນອື່ນທີ່ກ່ຽວຂ້ອງ.

ຈາກເອກະສານທີ່ພວກຂ້າພະເຈົ້າໄດ້ຮັບ, ພວກຂ້າພະເຈົ້າຂໍແຈ້ງວ່າ: ໄດ້ມີການເຮັດບົດລາຍງານກ່ຽວກັບການຊື້ຂາດຊັບສິນໂດຍ ບໍລິສັດຫຼັກຊັບ ແອລ໌ດີບີ, ຊຶ່ງເປັນທີ່ປຶກສາທາງການເງິນ ຕາມການກວດກາເບື້ອງຕົ້ນໃນສາລະບານ ແລະ ຫົວຂໍ້ຂອງບົດລາຍງານດັ່ງກ່າວ ປາກົດວ່າ: ບົດລາຍງານດັ່ງກ່າວມີເນື້ອໃນຫຼາຍສ່ວນ ລວມເຖິງສ່ວນທີ່ກ່ຽວຂ້ອງກັບການປະເມີນມູນຄ່າຊັບສິນ ແລະ ການກຳນົດລາຄາທຸລະກຳ ລວມເຖິງຄຳເຫັນຂອງສະພາບໍລິຫານຂອງບໍລິສັດໃນເລື່ອງທີ່ກ່ຽວຂ້ອງເຊັ່ນ: ຄວາມເໝາະສົມຂອງວິທີການປະເມີນມູນຄ່າ ແລະ ຜົນທີ່ໄດ້ຮັບ ລວມເຖິງຄຸນນະສົມບັດ ແລະ ຄວາມເປັນອິດສະຫຼະຂອງທີ່ປຶກສາການເງິນ.

ເຖິງຢ່າງໃດກໍ່ຕາມ, ອີງຕາມເອກະສານທີ່ພວກຂ້າພະເຈົ້າໄດ້ຮັບ, ພວກຂ້າພະເຈົ້າບໍ່ສາມາດຢັ້ງຢືນວ່າ: ບົດລາຍງານດັ່ງກ່າວສອດຄ່ອງກັບທຸກເງື່ອນໄຂທີ່ຕ້ອງໄດ້ປະຕິບັດພາຍໃຕ້ມາດຕາ 13 ຂອງຂໍ້ຕົກລົງ.

4) <u>ພັນທະກ່ຽວກັບການພິຈາລະນາທຸລະກຳ ພາຍໃຕ້ມາດຕາ 14 ແລະ 16</u>

ພາຍໃຕ້ ມາດຕາ 14 ແລະ 16 ຂອງຂໍ້ຕົກລົງ, ບໍລິສັດ ຕ້ອງປະຕິບັດຕາມຂັ້ນຕອນບາງອັນ ແລະ ຂໍ້ກຳນົດສຳຄັນກ່ຽວກັບການພິຈາລະນາ, ການຊື້ຂາດຊັບສິນ.

ໂດຍສະເພາະແລ້ວ, ບໍລິສັດ ຕ້ອງໄດ້ (i) ກະກຽມແຜນການ ການຊື້ຂາດຊັບສິນ ທີ່ມີເນື້ອໃນທີ່ຕອບສະໜອງຂໍ້ກຳນົດພາຍໃຕ້ມາດຕາ 16, (ii) ໄດ້ຮັບຄຳເຫັນ ຂອງຄະນະກຳມະການກວດກາກ່ຽວກັບແຜນດັ່ງກ່າວ ກ່ອນທີ່ຈະສົ່ງໃຫ້ສະພາບໍລິຫານ, (iii) ສົ່ງແຜນໃຫ້ສະພາບໍລິຫານ ເພື່ອພິຈາລະນາ, ແລະ (iv) ຮັບປະກັນວ່າ ກອງປະຊຸມສະພາບໍລິຫານ ທີ່ເປີດຂຶ້ນ ເພື່ອພິຈາລະນາ ແຜນດັ່ງກ່າວໄດ້ມີການເຂົ້າຮ່ວມໂດຍບໍ່ຕ່ຳກວ່າ ເຄິ່ງໜຶ່ງ ຂອງຈຳນວນຜູ້ອຳນວຍການທັງໝົດ ທີ່ເປັນບຸກຄົນບໍ່ກ່ຽວພັນ. ກ່ຽວກັບບັນຫານີ້, ສະພາບໍລິຫານຕ້ອງໄດ້ພິຈາລະນາ ແລະ ອອກຄຳເຫັນກ່ຽວກັບທຸລະກຳ, ລວມທັງໃຫ້ຄຳເຫັນວ່າ ທຸລະກຳດັ່ງກ່າວເປັນທຸລະກຳກ່ຽວພັນ ຫຼື ບໍ່, ແລະ ຜູ້ອຳນວຍການ ທີ່ເປັນບຸກຄົນທີ່ກ່ຽວພັນ ບໍ່ມີສິດລົງຄະແນນສຽງຕໍ່ບັນຫາດັ່ງກ່າວ.

ອີງຕາມບົດບັນທຶກ ກອງປະຊຸມວິສາມັນຂອງສະພາບໍລິຫານ ເລກທີ 1/2026 ລົງວັນທີ 04 ກຸມພາ 2026 (“**ບົດບັນທຶກຂອງສະພາບໍລິຫານ**”), ເຫັນວ່າ ກອງປະຊຸມຄະນະກຳມະການກວດກາ ໄດ້ໄຂຂຶ້ນໃນວັນທີ 22 ມັງກອນ 2026 ເພື່ອພິຈາລະນາບັນຫາທີ່ກ່ຽວຂ້ອງກັບທຸລະກຳ, ລວມທັງລັກສະນະຂອງທຸລະກຳ. ຈາກບົດບັນທຶກຂອງສະພາບໍລິຫານດັ່ງກ່າວ ພວກຂ້າພະເຈົ້າເຫັນໄດ້ວ່າ ຄະນະກຳມະການກວດກາ ໄດ້ໄຂກອງປະຊຸມກ່ຽວກັບທຸລະກຳໃນວັນທີດັ່ງກ່າວ. ເຖິງຢ່າງໃດກໍຕາມ ມັນບໍ່ແຈ້ງວ່າ (i) ການໄດ້ມາເປັນທາງການຂອງແຜນຊື້ຂາດ ໄດ້ຖືກກະກຽມໂດຍສອດຄ່ອງກັບ ມາດຕາ 16 ຂອງຂໍ້ຕົກລົງ ຫຼື ບໍ່, (ii) ກອງປະຊຸມດັ່ງກ່າວ ເປັນການສະໜອງຄຳເຫັນເປັນທາງການ ຂອງຄະນະກຳມະການກວດກາກ່ຽວກັບແຜນດັ່ງກ່າວກ່ອນທີ່ຈະສົ່ງໃຫ້ສະພາບໍລິຫານ, ຕາມການກຳນົດຂອງ ມາດຕາ 14 ຂອງຂໍ້ຕົກລົງ. ນອກຈາກນີ້, ພວກຂ້າພະເຈົ້າບໍ່ໄດ້ຮັບເອກະສານຫຼັກຖານ ຫຼື ບົດບັນທຶກກອງປະຊຸມຂອງຄະນະກຳມະການກວດກາໃນສ່ວນທີ່ກ່ຽວຂ້ອງກັບການປະຊຸມດັ່ງກ່າວ.

ນອກຈາກນັ້ນ, ອີງຕາມບົດບັນທຶກຂອງສະພາບໍລິສັດປຫານ, ປາກົດວ່າ ລັກສະນະຂອງທຸລະກຳ, ລວມທັງບັນຫາທີ່ວ່າ ທຸລະກຳດັ່ງກ່າວເປັນທຸລະກຳກ່ຽວພັນ ຫຼື ບໍ່ ໄດ້ຖືກນຳມາສະເໜີຕໍ່ສະພາບໍລິຫານເພື່ອໃຫ້ພິຈາລະນາ. ກ່ຽວກັບບັນຫານີ້ໄດ້ມີການອ້າງອີງ ເຖິງກອງປະຊຸມຄະນະກຳມະການກວດກາໃນວັນທີ 22 ມັງກອນ 2026 ແລະ ໄດ້ມີການກຳນົດວ່າ (ຕາມການລາຍງານໃຫ້ແກ່ສະພາບໍລິຫານ ແລະ ບັນທຶກລົງໃນບົດບັນທຶກຂອງກອງປະຊຸມສະພາບໍລິຫານ) ທຸລະກຳດັ່ງກ່າວບໍ່ແມ່ນທຸລະກຳກ່ຽວພັນ. ນອກຈາກນັ້ນຜູ້ອຳນວຍການທັງໝົດ (7) ຄົນ ໄດ້ເຂົ້າຮ່ວມກອງປະຊຸມ (ບໍ່ວ່າໂດຍຕົນເອງ ຫຼື ຜ່ານຮູບການເອເລັກໂທນິກ) ແລະ ທຸລະກຳໄດ້ຖືກຮັບຮອງໂດຍການລົງຄະແນນສຽງເຫັນດີຫົກ (6) ຄົນ ແລະ (1) ຄົນ ບໍ່ເຫັນດີ.

ເພາະສະນັ້ນເຫັນໄດ້ວ່າອົງປະຊຸມທີ່ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງໄດ້ຖືກປະຕິບັດຄົບຖ້ວນ.

5) <u>ພັນທະທີ່ກ່ຽວກັບການເປີດເຜີຍການໄດ້ມາ ຫຼື ແຜນຊື້ຂາຍພາຍໃຕ້ມາດຕາ 15</u>

ພາຍໃຕ້ ມາດຕາ 15 ຂອງຂໍ້ຕົກລົງ, ບໍລິສັດ ຕ້ອງລາຍງານແຜນການຊື້ຂາຍເປັນລາຍລັກອັກສອນໃຫ້ແກ່ ຄຄຊ, ນອກຈາກນັ້ນ ບໍລິສັດ ຕ້ອງເປີດເຜີຍຂໍ້ມູນດັ່ງກ່າວໃຫ້ມະຫາຊົນໂດຍຜ່ານເວບໄຊ ຂອງ ຕະຫຼາດຫຼັກຊັບລາວ ("**ຕລຊ**") ແລະ ເວບໄຊຂອງບໍລິສັດ ພາຍໃນ ໜຶ່ງ (1) ວັນທຳການ ຈາກມື້ທີ່ ສະພາບໍລິຫານຕົກລົງຮັບຮອງທຸລະກຳ.

ບໍລິສັດໄດ້ແຈ້ງຕໍ່ພວກຂ້າພະເຈົ້າວ່າ: ເຖິງວ່າບໍລິສັດໄດ້ດຳເນີນການເພື່ອໃຫ້ເປັນໄປຕາມຂໍ້ກຳນົດ ພາຍໃຕ້ມາດຕາ 15 ຂອງຂໍ້ຕົກລົງແລ້ວກໍ່ຕາມ, ການປະຕິບັດດັ່ງກ່າວອາດບໍ່ສາມາດຄອບຄຸມຂໍ້ກຳນົດທັງໝົດທີ່ກຳນົດໄວ້. ພວກຂ້າພະເຈົ້າບໍ່ໄດ້ຮັບຂໍ້ມູນພຽງພໍໃນການກວດຄືນເຖິງຂອບເຂດການປະຕິບັດດັ່ງກ່າວ ຫຼື ຂໍ້ກຳນົດທີ່ບໍລິສັດໄດ້ປະຕິບັດຄົບຖ້ວນແລ້ວ.

6) <u>ພັນທະໃນການປົດປໍ້ມບັນຊີທະບຽນຜູ້ຖືຄອງຮຸ້ນພາຍໃຕ້ມາດຕາ 17</u>

ພາຍໃຕ້ມາດຕາ 17 ຂອງຂໍ້ຕົກລົງ, ສະພາບໍລິຫານຕ້ອງກຳນົດວັນທີປິດປໍ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອໃຫ້ຜູ້ຖືຮຸ້ນສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາການຊື້ຂາຍຊັບສິນ ຫຼັງຈາກທີ່ ສະພາບໍລິຫານໄດ້ກຳນົດວັນທີປິດປໍ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ແລ້ວ, ບໍລິສັດ ຕ້ອງແຈ້ງ ຕລຊ ຢ່າງ ໜ້ອຍ ສິບ (10) ວັນທຳການ ກ່ອນວັນທີປິດປໍ້ມບັນຊີທະບຽນຜູ້ຖືຄອງຮຸ້ນ.

ອີງຕາມບົດບັນທຶກຂອງສະພາບໍລິຫານ, ປາກົດວ່າການກຳນົດວັນທີປິດປໍ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອໃຫ້ບັນດາຜູ້ຖືຮຸ້ນສາມາດເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ເລກທີ 1/2026 ແລະ ກອງ ປະຊຸມປະຈຳປີຂອງຜູ້ຖືຮຸ້ນຂອງປີ 2025 ໄດ້ຮັບການພິຈາລະນາ ແລະ ຮັບຮອງ ໂດຍສະພາບໍລິຫານ.

ບໍລິສັດໄດ້ແຈ້ງຕໍ່ພວກຂ້າພະເຈົ້າວ່າ: ບໍລິສັດໄດ້ດຳເນີນການເພື່ອໃຫ້ເປັນໄປຕາມຂໍ້ກຳນົດ ພາຍໃຕ້ ມາດຕາ 17 ຂອງຂໍ້ຕົກລົງ, ເຖິງຢ່າງໃດກໍ່ຕາມ, ການປະຕິບັດດັ່ງກ່າວອາດບໍ່ສາມາດຄອບຄຸມຂໍ້ກຳນົດ ທັງໝົດທີ່ກຳນົດໄວ້. ພວກຂ້າພະເຈົ້າບໍ່ໄດ້ຮັບຂໍ້ມູນພຽງພໍໃນການກວດຄືນເຖິງຂອບເຂດການ ປະຕິບັດດັ່ງກ່າວ.

7) <u>ພັນທະໃນການເປີດເຜີຍເອກະສານຂອງກອງປະຊຸມຜູ້ຖືຮຸ້ນພາຍໃຕ້ມາດຕາ 21</u>

ພາຍໃຕ້ມາດຕາ 21 ຂອງຂໍ້ຕົກລົງ, ບໍລິສັດ ຕ້ອງເປີດເຜີຍແຈ້ງການກອງປະຊຸມຜູ້ຖືຮຸ້ນ ພ້ອມກັບບົດ ລາຍງານການຊື້ຂາຍຊັບສິນ ພ້ອມທັງຄຳເຫັນຂອງທີ່ປຶກສາການເງິນອິດສະຫຼະ ແລະ ທີ່ປຶກສາກົດໝາຍໃຫ້ແກ່ມະຫາຊົນ ໂດຍຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕລຊ. ການເປີດເຜີຍດັ່ງກ່າວຕ້ອງເຮັດຢ່າງ ໜ້ອຍ ຊາວເອັດ (21) ວັນທຳການ ກ່ອນກອງປະຊຸມຜູ້ຖືຮຸ້ນ. ພວກຂ້າພະເຈົ້າບໍ່ສາມາດຢັ້ງຢືນໄດ້ວ່າ: ຂໍ້ກຳນົດທັງໝົດພາຍໃຕ້ມາດຕາ 21 ຂອງຂໍ້ຕົກລົງໄດ້ຖືກປະຕິບັດຄົບຖ້ວນແລ້ວ ໂດຍສະເພາະ ພວກ

ຂ້າພະເຈົ້າບໍ່ໄດ້ຮັບຫຼັກຖານທີ່ພຽງພໍໃນການກວດກາວ່າເອກະສານ ແລະ ຂໍ້ມູນທັງໝົດທີ່ຈຳເປັນໄດ້ມີການເປີດເຜີຍຕາມໄລຍະເວລາທີ່ກຳນົດໄວ້ຄົບຖ້ວນແລ້ວ.

2. ການປະຕິບັດຕາມຂັ້ນຕອນການຮັບຮອງທຸລະກຳ

ພວກຂ້າພະເຈົ້າເຂົ້າໃຈວ່າທຸລະກຳຕ້ອງມີ (i) ການເຫັນດີ ແລະ ຮັບຮອງຈາກຜູ້ຖືຮຸ້ນອື່ນໃນບໍລິສັດເຫີນ-ຫີນບູນພາຍໃຕ້ສັນຍາຜູ້ຖືຮຸ້ນ, (ii) ການເຫັນດີ ແລະ ການຮັບຮອງຈາກບັນດາຜູ້ຖືພັນທະບັດ, (iii) ການຮັບຮອງຈາກອີແກ໋ດພາຍໃຕ້ສັນຍາຊື້ຂາຍໄຟ ລະຫວ່າງ ອີແກ໋ດ ແລະ ບໍລິສັດ ເຫີນ-ຫີນບູນ ແລະ (iv) ການເຫັນດີຈາກຄູ່ສັນຍາອື່ນ ເຊັ່ນ ຜູ້ໃຫ້ກູ້ ແລະ ເຈົ້າໜີ້ອື່ນໆ ພາຍໃຕ້ສັນຍາການເງິນ ແລະ/ຫຼື ເອກະສານຄ້ຳປະກັນ (ຖ້າມີ).

ອີງຕາມຂໍ້ມູນທີ່ພວກຂ້າພະເຈົ້າໄດ້ຮັບ, ເຂົ້າໃຈວ່າ ການຮັບຮອງ ແລະ ເຫັນດີຢູ່ໃນຂັ້ນຕອນການຂໍ.

ເຖິງຢ່າງໃດກໍ່ຕາມ, ພວກຂ້າພະເຈົ້າບໍ່ມີເອກະສານຢັ້ງຢືນວ່າ ໄດ້ມີການຮັບຮອງ ແລະ ເຫັນດີໃນເວລານີ້.

3. ບັນຫາກ່ຽວກັບວ່າ ທຸລະກຳແມ່ນທຸລະກຳກ່ຽວພັນ ຫຼື ບໍ່ ແລະ ການປະຕິບັດຕາມຂໍ້ກຳນົດກ່ຽວກັບການຮັບຮອງ ແລະ ເປີດເຜີຍລາຍການກ່ຽວພັນ

ໂດຍສອດຄ່ອງກັບມາດຕາ 20 ຂອງຂໍ້ຕົກລົງ, ທີ່ປຶກສາດ້ານກົດໝາຍຕ້ອງໄດ້ໃຫ້ຄຳເຫັນວ່າ ການໄດ້ມາ ຫຼື ການຊື້ຂາດຊັບສິນແມ່ນທຸລະກຳກ່ຽວພັນ ຫຼື ບໍ່ ແລະ ຖ້າແມ່ນໄດ້ມີການຮັບຮອງ ແລະ ເປີດເຜີຍພາຍໃຕ້ລະບຽບກ່ຽວຂ້ອງ ຫຼື ບໍ່.

ຕາມຂໍ້ມູນທີ່ພວກຂ້າພະເຈົ້າມີ ລວມທັງການຢັ້ງຢືນຂອງບໍລິສັດ ແລະ ຕາມບົດບັນທຶກຂອງສະພາບໍລິຫານ, ເຂົ້າໃຈວ່າ ຜູ້ຮັບບໍ່ແມ່ນບຸກຄົນທີ່ກ່ຽວພັນ ຫຼື ນິຕິບຸກຄົນທີ່ກ່ຽວພັນກັບ ບໍລິສັດ ຕາມຄວາມໝາຍທີ່ລະບຸໄວ້ໃນຂໍ້ຕົກລົງ.

ເພາະສະນັ້ນ ເຂົ້າໃຈວ່າ ທຸລະກຳບໍ່ແມ່ນທຸລະກຳທີ່ກ່ຽວພັນພາຍໃຕ້ຂໍ້ຕົກລົງ.

ເຖິງຢ່າງໃດກໍ່ຕາມ ພວກຂ້າພະເຈົ້າບໍ່ໄດ້ມີການກວດກາຄືນບັນດາຂໍ້ມູນທີ່ກ່ຽວຂ້ອງ.

4. ຄວາມສອດຄ່ອງ ແລະ ຜົນທາງດ້ານກົດໝາຍຂອງບັນດາສັນຍາທີ່ກ່ຽວກັບທຸລະກຳ

ອີງຕາມຂໍ້ມູນທີ່ພວກຂ້າພະເຈົ້າໄດ້ຮັບ, ບໍລິສັດ ໄດ້ມີການເຂົ້າເຊັນສັນຍາຊື້ຂາຍຮຸ້ນກ່ຽວກັບທຸລະກຳໃນເມື່ອກ່ອນກັບຜູ້ຮັບໃນປີ 2024.

ພວກຂ້າພະເຈົ້າເຂົ້າໃຈວ່າ ສັນຍາດັ່ງກ່າວມີເງື່ອນໄຂລ່ວງໜ້າ ຊຶ່ງມາຮອດປັດຈຸບັນຍັງບໍ່ທັນຖືກປະຕິບັດ. ເຖິງແມ່ນວ່າໄດ້ເລີ່ມປະຕິບັດບາງເງື່ອນໄຂແຕ່ຍັງບໍ່ທັນສຳເລັດ ເນື່ອງຈາກວ່າມີເງື່ອນໄຂລ່ວງໜ້າຍັງບໍ່ໄດ້ຖືກປະຕິບັດ.

ຍ້ອນສາເຫດຂ້າງເທິງນັ້ນ ແລະ ເນື່ອງຈາກວ່າສະພາບ ແລະ ຂໍ້ເທັດຈິງໄດ້ມີການປ່ຽນແປງນັບແຕ່ມື້ເລີ້ມ ປະຕິບັດສັນຍາ, ບໍລິສັດ ແລະ ຜູ້ຮັບໂອນຮຸ້ນ ກຳລັງພິຈາລະນາວ່າຈະດັດແກ້ສັນຍາປັດຈຸບັນ ຫຼື ສ້າງສັນຍາໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ປົກປ້ອງສິດຜົນປະໂຫຍດຂອງ ບໍລິສັດ.

5. ຄວາມຈະແຈ້ງກ່ຽວກັບກຳມະສິດຮຸ້ນ ແລະ ເອກະສານສະໜັບສະໜຸນການເປັນເຈົ້າຂອງ

ເພື່ອຈຸດປະສົງໃນການກວດກາການເປັນເຈົ້າຂອງຮຸ້ນຂອງບໍລິສັດ ໃນບໍລິສັດ ເທີນ-ຫີນບູນ ແລະ ຄວາມ ຖືກຕ້ອງສົມບູນຂອງສິດໃນຮຸ້ນດັ່ງກ່າວ ພວກຂ້າພະເຈົ້າໄດ້ຮັບສຳເນົາໃບຮຸ້ນເລກທີ 34, ລົງວັນທີ 24 ກໍລະກົດ 2012 ໂດຍສຳເນົາດັ່ງກ່າວລະບຸວ່າ: ບໍລິສັດເປັນຜູ້ຖືຮຸ້ນສາມັນຈຳນວນ 660,000 ຮຸ້ນ ໃນບໍລິສັດ ເທີນ-ຫີນບູນ ໂດຍມີມູນຄ່າຮຸ້ນລະ 50 ໂດລາສະຫະລັດ ຊຶ່ງປາກົດວ່າໄດ້ຊຳລະມູນຄ່າຮຸ້ນຄົບຖ້ວນແລ້ວ.

ເຖິງຢ່າງໃດກໍ່ຕາມ, ພວກຂ້າພະເຈົ້າຂໍແຈ້ງວ່າ: ສຳເນົາທີ່ໄດ້ຮັບມີພຽງດ້ານໜ້າຂອງໃບຮຸ້ນເທົ່ານັ້ນ ແລະ ພວກ ຂ້າພະເຈົ້າບໍ່ໄດ້ຮັບເອກະສານສະບັບສົມບູນ. ນອກຈາກນີ້, ໃບຮຸ້ນດັ່ງກ່າວມີລາຍເຊັນຂອງຜູ້ອຳນວຍການທີ່ ກ່ຽວຂ້ອງ ແຕ່ບໍ່ມີຕາປະທັບຂອງບໍລິສັດ.

ດັ່ງນັ້ນ, ຈາກເອກະສານທີ່ມີຢູ່ໃນປະຈຸບັນ ພວກຂ້າພະເຈົ້າບໍ່ສາມາດຢັ້ງຢືນເຖິງການເປັນເຈົ້າຂອງຮຸ້ນຂອງ ບໍລິສັດ ຫຼື ຄວາມຖືກຕ້ອງສົມບູນຂອງໃບຮຸ້ນດັ່ງກ່າວ.

6. ຂໍ້ຂັດແຍ່ງດ້ານກຳມະສິດຕໍ່ຊັບສິນ

ພວກຂ້າພະເຈົ້າໄດ້ມີການຂໍການຢັ້ງຢືນຈາກສານທີ່ນະຄອນຫຼວງວຽງຈັນ ເພື່ອຂໍໃຫ້ສານຢັ້ງຢືນວ່າມີຂໍ້ຂັດແຍ່ງ ກ່ຽວກັບຊັບສິນ ຫຼື ບໍ່. ການຂໍໃຫ້ສານຢັ້ງຢືນນີ້ແມ່ນຈຳກັດສະເພາະຄະດີໃຫຍ່ ແລະ ບໍ່ກວມເອົາສານຂັ້ນຕົ້ນຢູ່ ນອກເຂດນະຄອນຫຼວງວຽງຈັນ.

ເພາະສະນັ້ນ, ການກວດສອບຂອງພວກຂ້າພະເຈົ້າແມ່ນ ຈຳກັດສະເພາະແຕ່ຂໍ້ມູນທີ່ໄດ້ຮັບຈາກສານທີ່ກ່ຽວຂ້ອງ ໃນນະຄອນຫຼວງວຽງຈັນ ແລະ ພວກຂ້າພະເຈົ້າບໍ່ສາມາດກຳນົດໄດ້ວ່າ ມີຂໍ້ຂັດແຍ່ງເກີດຂຶ້ນຢູ່ສານອື່ນໆ ຫຼື ບໍ່. ຕາມໃບຢັ້ງຢືນທີ່ອອກໂດຍສານປະຊາຊົນນະຄອນຫຼວງວຽງຈັນ (ເລກທີ 15/ສປຊ.ນວ, ລົງວັນທີ 27 ເມສາ 2026) ປາກົດວ່າ: ໃນປະຈຸບັນບໍລິສັດບໍ່ມີຄະດີໃດໆໃນສານດັ່ງກ່າວ.

ເຖິງຢ່າງໃດກໍ່ຕາມ, ຜົນການກວດສອບດັ່ງກ່າວຢູ່ພາຍໃຕ້ຂໍ້ຈຳກັດຂອງຂອບເຂດຕາມທີ່ໄດ້ອະທິບາຍໄວ້ຂ້າງ ເທິງ ແລະ ພວກຂ້າພະເຈົ້າບໍ່ໄດ້ກວດສອບໂດຍອິດສະຫຼະວ່າມີຂໍ້ຂັດແຍ່ງ ຫຼື ມີການດຳເນີນການທາງກົດໝາຍ ໃດໆກ່ຽວກັບຊັບສິນນອກຈາກຂອບເຂດການກວດສອບດັ່ງກ່າວ ຫຼື ບໍ່.

7. ການນຳເອົາຊັບສິນໄປຄ້ຳປະກັນ

ຈາກເອກະສານທີ່ພວກຂ້າພະເຈົ້າໄດ້ຮັບໃນປະຈຸບັນ, ພວກຂ້າພະເຈົ້າບໍ່ສາມາດພິຈາລະນາໄດ້ວ່າ: ຮຸ້ນໃນ ບໍລິສັດ ເທີນ-ຫີນບູນ ມີພາລະຜູກພັນໃດໆ ຫຼື ບໍ່ ຊຶ່ງລວມເຖິງແຕ່ບໍ່ຈຳກັດສະເພາະ ການຈຳນຳ, ສິດຍຶດໝ່ວງ, ການສ້າງພາລະຜູກພັນ ຫຼື ການຄ້ຳປະກັນອື່ນໃດທີ່ບໍລິສັດໄດ້ສ້າງຂຶ້ນ ໂດຍທີ່ ພວກຂ້າພະເຈົ້າຂໍການຢັ້ງຢືນຈາກ

ບໍລິສັດແລ້ວ ແຕ່ບໍລິສັດໄດ້ແຈ້ງຕໍ່ພວກຂ້າພະເຈົ້າວ່າ: ການຢັ້ງຢືນດັ່ງກ່າວຍັງຢູ່ໃນການກວດສອບເພີ່ມເຕີມກັບ ບໍລິສັດ ເທີນ-ຫີນບູນ.

C. ຂໍ້ສະຫງວນ ແລະ ຂໍ້ສັງເກດ

ຄຳເຫັນໃນບົດລາຍງານສະບັບນີ້ແມ່ນມີຂໍ້ສະຫງວນ ແລະ ຂໍ້ສັງເກດ ດັ່ງຕໍ່ໄປນີ້:

(1) ບົດລາຍງານສະບັບນີ້ໄດ້ກະກຽມໂດຍອີງໃສ່ຂໍ້ເທັດຈິງ, ຂໍ້ມູນ, ເອກະສານ ແລະ ການຢັ້ງຢືນຂອງບໍລິສັດ ແລະ ຜົນການຢັ້ງຢືນຂອງສານ. ພວກຂ້າພະເຈົ້າບໍ່ໄດ້ກວດສອບຄືນກ່ຽວກັບຄວາມຊັດເຈນ, ຄວາມຄົບຖ້ວນສົມບູນ ຫຼື ຄວາມເປັນສິ່ງດັ່ງເດີມຂອງເອກະສານ ແລະ ພວກຂ້າພະເຈົ້າຈະບໍ່ຮັບຜິດຊອບຕໍ່ກັບສິ່ງເຫຼົ່ານັ້ນ.

(2) ພວກຂ້າພະເຈົ້າບໍ່ໄດ້ມີຄຳເຫັນຕໍ່ກັບບັນຫາທາງດ້ານການຄ້າ, ຄວາມເປັນໄປໄດ້ທາງດ້ານການເງິນ ຫຼື ມູນຄ່າ ຂອງທຸລະກຳ ລວມທັງຂະໜາດຂອງທຸລະກຳ, ລາຄາ ຫຼື ບັນຫາການເງິນຕ່າງໆ ແລະ ໄດ້ອີງໃສ່ການວິໄຈ ແລະ ບົດລາຍງານຂອງ ບໍລິສັດ ແລະ ທີ່ປຶກສາທາງການເງິນຂອງບໍລິສັດ.

(3) ພວກຂ້າພະເຈົ້າບໍ່ໄດ້ມີຄຳເຫັນກ່ຽວກັບເລື້ອງບັນຊີ, ອາກອນ ຫຼື ການລາຍງານທາງການເງິນທີ່ກ່ຽວຂ້ອງກັບ ທຸລະກຳ.

(4) ບົດລາຍງານສະບັບນີ້ໄດ້ອີງໃສ່ຂໍ້ເທັດຈິງ ແລະ ເງື່ອນໄຂສະພາບການໃນມື້ຂຽນບົດລາຍງານ ແລະ ພວກ ຂ້າພະເຈົ້າບໍ່ມີພັນທະໃນການທົບທວນຄືນບົດລາຍງານສະບັບນີ້ ຖ້າຫາກສະພາບເງື່ອນໄຂມີການປ່ຽນແປງ.

(5) ພວກຂ້າພະເຈົ້າໄດ້ມີການສົມມຸດຕິຖານ ໂດຍບໍ່ມີການກວດກາຄືນວ່າ ລາຍເຊັນຕ່າງໆ, ການປະທັບ ແລະ ເອກະສານທີ່ສະໜອງໃຫ້ພວກຂ້າພະເຈົ້າແມ່ນຖືກຕ້ອງ, ມີຜົນສັກສິດ ແລະ ໄດ້ຮັບອະນຸມັດຢ່າງຖືກຕ້ອງ.

(6) ການວິນິໄສຂອງພວກຂ້າພະເຈົ້າແມ່ນອີງໃສ່ການຕີຄວາມໝາຍກົດໝາຍ ແລະ ລະບຽບການທີ່ມີຜົນສັກສິດໃນ ປັດຈຸບັນ ຊຶ່ງອາດຈະມີການປ່ຽນແປງ ຫຼື ຕີຄວາມໝາຍທີ່ແຕກຕ່າງຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ.

(7) ການໃຫ້ຄຳເຫັນຂອງພວກຂ້າພະເຈົ້າ ແມ່ນຈຳກັດໃນຂອບເຂດທີ່ລະບຸຢ່າງຈະແຈ້ງ ໃນບົດລາຍງານສະບັບນີ້ ແລະ ຈະບໍ່ໄປກວມເອົາບັນຫາທີ່ບໍ່ໄດ້ຍົກຂຶ້ນ ລວມທັງບັນຫາທີ່ຢູ່ນອກອຳນາດຕຸລາການຂອງນະຄອນຫຼວງວຽງ ຈັນ ຫຼື ບໍ່ໄດ້ລະບຸໃນເອກະສານທີ່ສະໜອງໃຫ້ພວກຂ້າພະເຈົ້າ.

D. ຜົນປະໂຫຍດ

ຄຳເຫັນໃນບົດລາຍງານສະບັບນີ້ ແມ່ນໄດ້ກະກຽມສຳລັບຜົນປະໂຫຍດຂອງ ບໍລິສັດ ເທົ່ານັ້ນ ເພື່ອສະເໜີຕໍ່ ຄຄຊ ໂດຍສອດຄ່ອງກັບມາດຕາ 21 ຂອງຂໍ້ຕົກລົງ. ຄຳເຫັນໃນບົດລາຍງານສະບັບນີ້ຈະບໍ່ສາມາດຖືກນຳມາໃຊ້ໂດຍບຸກຄົນອື່ນໃນທັງໝົດ ຫຼື ສ່ວນໃດໜຶ່ງ ແລະ ບໍ່ສາມາດເອົາໄປລະບຸໄວ້ໃນເອກະສານໃດໆ ຫຼື ຍື່ນຕໍ່ກັບບຸກຄົນໃດໆ ໂດຍບໍ່ໄດ້ຮັບການເຫັນດີຈາກພວກຂ້າພະເຈົ້າ.

ດ້ວຍຄວາມນັບຖື,

ບໍລິສັດ ແອລ ແອສ ຮໍຣາຍຊອນ (ລາວ) ຈຳກັດຜູ້ດຽວ



ໃບມອບສັນທະ

PROXY

ວັນທີ.....ເດືອນ.....ປີ.....
Date.....Month.....Year.....

1. ຂ້າພະເຈົ້າ.....ສັນຊາດ.....ວັນທີ, ເດືອນ ແລະ ປີເກີດ.....
I/We.....Nationality.....date/month/year of birth.....
ບັດປະຈຳຕົວເລກທີ.....ຢູ່ເຮືອນເລກທີ.....ບ້ານ.....ເມືອງ.....
ID card number.....Reside at.....Village.....District.....
ແຂວງ.....
Province.....

ເປັນຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
Being a shareholder of EDL-Generation Public Company

ໂດຍຖືຮຸ້ນຈຳນວນ.....ຮຸ້ນ, ຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.
holding a total number of.....shares, which are equivalent to the same number of votes.

2. **ຂໍມອບໝາຍໃຫ້ສະມາຊິກສະພາບໍລິຫານອິດສະຫຼະ** (ໝາຍເລືອກ 1 ທ່ານ) - Hereby assign the Independent Board Member (select only one):

1). ☐ ທ່ານ ສຈ.ປອ ພູເພັດ ກ້ຽວພິລາວົງ
Prof.Dr Phouphet KYOPHILAVONG

2). ☐ ທ່ານ ພັນປານີ ສິດທິລາດ
Mr. Phanpany SITTHILATH

3. ☐ **ຫຼື ບຸກຄົນອື່ນ** (ກະລຸນາລະບຸລາຍລະອຽດ) **/ Or other person,** (please specify)**:**
ຂໍມອບໝາຍໃຫ້ທ່ານ/ທ່ານນາງ.....ອາຍຸ.....ປີ, ສັນຊາດ.....
Hereby assign Mr./Ms.....age.....years, Nationality.....
ຢູ່ເຮືອນເລກທີ.....ບ້ານ.....ເມືອງ.....ແຂວງ.....
reside at.....Village.....District.....Province.....

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ໃນກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນຄັ້ງທີ 01 ປະຈຳປີ 2026 ໃນວັນທີ 19 ພະຈິກ 2026 ເວລາ 15:00 ໂມງ.
Any one of them to be my/our proxy to attend and vote on my/our behalf at the Extraordinary General Meeting of Shareholders No.1/2026 to be on 19th November 2026 at 3:00 pm.

ສະຖານທີ່ຫ້ອງປະຊຸມ ຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງ ບໍລິສັດ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ຫຼື ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.
At Meeting room, 1st floor, EDL Headquarter building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital ,or any adjournment at any date, time and place thereof.

4. ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຄັ້ງນີ້ ດັ່ງນີ້:
I/We hereby authorize the proxy to vote on my/our behalf at this meeting as follows:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິ **"ທຸກວາລະ"** ແທນຂ້າພະເຈົ້າໄດ້ທຸກປະການຕາມເຫັນສົມຄວນ;
To grant my/our proxy to consider and vote on my/our behalf as he/she may deem appropriate in all respect;

☐ ໃຫ້ຜູ້ຕາງໜ້າ ລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ລົງມະຕິແທນຂ້າພະເຈົ້າ **"ໃນບາງວາລະ"**;
(ກະລຸນາໝາຍໃສ່ຊ່ອງ ☐ ໃນວາລະດ້ານລຸ່ມວ່າເຫັນດີ ຫຼື ບໍ່ເຫັນດີ ສະເພາະໃນບາງວາລະທີ່ທ່ານຕ້ອງການລົງຄະແນນສຽງ)
To grant my/our proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects (please specify your vote by ticking on ☐ Approve or ☐ Disapprove only for agenda items for which you intend to cast your votes)

☐ ໃຫ້ຜູ້ຕາງໜ້າ ລົງຄະແນນສຽງ **"ຕາມຄວາມຕ້ອງການຂອງຂ້າພະເຈົ້າ"**.(ກະລຸນາໝາຍ ເຫັນດີ ຫຼື ບໍ່ເຫັນດີ ໃນທຸກວາລະດ້ານລຸ່ມ)
To grant my/our proxy to vote as per my/our intention. (If you choose this option, you need to tick Approve or Disapprove for every Agenda item below);

ວາລະທີ 1: ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025.

Agenda No. 1 To Consider and Adopt the Minutes of the Annual General Meeting of Shareholders for the Year 2025.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 2: ພິຈາລະນາຮັບຮອງການແຕ່ງຕັ້ງ ຮັກສາການຜູ້ອຳນວຍການໃຫຍ່ (ຜູ້ໃຫມ່) ເພື່ອປ່ຽນແທນ ຜູ້ອຳນວຍການໃຫຍ່ (ຜູ້ເກົ່າ) ທີ່ຖືກແຕ່ງຕັ້ງໄປຮັບໜ້າທີ່ໃຫມ່.

Agenda No. 2 To Consider and approve the appointment of a new Acting Director General to replace the Director General (former) who has been appointed to a new position.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 3: ພິຈາລະນາຮັບຮອງຂະບວນການໂອນຮຸ້ນ ຜ-ຟຟລ ທີ່ຖືຄອງ ໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໃນສັດສ່ວນ 60%.

Agenda No. 3 To consider and approve the transfer of 60% of the shares held by EDL-Gen in Theun-Hinboun Power Company Limited.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

5. ການລົງຄະແນນສຽງຂອງຜູ້ຕາງໜ້າໃນວາລະປະຊຸມ ທີ່ບໍ່ເປັນໄປຕາມການລະບຸໄວ້ໃນໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.
Voting of the proxy in any agenda that is not as specified in this Proxy shall be considered as invalid and shall not be my/our voting as a shareholder.

6. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງໃນວາລະປະຊຸມໃດໜຶ່ງ ຫຼື ລະບຸໄວ້ ບໍ່ຈະແຈ້ງໃຫ້ຖືວ່າ ຂ້າພະເຈົ້າລົງຄະແນນສຽງເຫັນດີ.
In case I/we have not specified my/our voting intention in any agenda or not clearly specified, my/our vote in such agenda shall be deemed approved .

7. ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງ ຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກຢ່າງ.
Any business carried out by the proxy at the said meeting, except in case that the proxy does not vote according to my/our intention(s) specified in the Proxy, shall be deemed as having been carried out by myself/ourselves in all respects.

ລົງລາຍເຊັ້ນ/Signed ຜູ້ຖືຮຸ້ນທີ່ມອບໝາຍ/Grantor

(.....)

ລົງລາຍເຊັ້ນ/Signed ຜູ້ຕາງໜ້າ/Proxy

(.....)

ໝາຍເຫດ

1. ຜູ້ຖືຮຸ້ນ ຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງຜູ້ດຽວເປັນຜູ້ເຂົ້າຮ່ວມປະຊຸມແລະລົງຄະແນນສຽງ ແລະ ບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍຄົນເພື່ອແຍກການລົງຄະແນນສຽງໄດ້.
The shareholder must authorize only one proxy to attend and vote at the meeting and may not split the number of shares to several proxies for splitting votes
2. ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍແລະຜູ້ຕາງໜ້າ ອີງຕາມກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 24/ສພຊ, ລົງວັນທີ 29 ທັນວາ 2022, ໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ, ບໍລິສັດມີສິດປະຕິເສດໃບມອບສັນທະໃດໆທີ່ບໍ່ໄດ້ຈົດທະບຽນສານ.
Pursuant to the Law on Notary (Amended) No. 65/NA, dated 29 December 2022, in order for the appointment by the shareholder to the proxy to have legal effect, This Proxy must be certified by your most convenient Court Notary Office to ensure its legal validity. EDL-Gen may reject any Proxies or proxy authorizations without endorsement of the Court Notary Office.

ເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.

ກອງປະຊຸມສາມັນຜູ້ຖືຮຸ້ນ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນຈັດຂຶ້ນເປັນ 2 ລະບົບ ຄື: ຜູ້ຖືຮຸ້ນ ສາມາດເຂົ້າຮ່ວມຜ່ານລະບົບອອນລາຍ ຜ່ານລະບົບ EGM: https://agm-egm.edlgen.com.la/ user/login ແລະ ສາມາດເຂົ້າຮ່ວມແບບຊ່ອງໜ້າ ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງ ບໍລິສັດ ລັດວິສາຫະກິດໄຟຟ້າລາວ, ເຊິ່ງຜູ້ຖືຮຸ້ນຕ້ອງປະຕິບັດຕາມແຕ່ລະກໍລະນີດັ່ງລຸ່ມນີ້:

- ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la

I. **ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ EGM**

ຜູ້ຖືຮຸ້ນ ທີ່ຈະມາເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍໄດ້ ແມ່ນຜູ້ທີ່ໄດ້ຮັບການຕອບຮັບຢືນຢັນການເຂົ້າຮ່ວມຈາກບໍລິສັດເທົ່ານັ້ນ ເຊິ່ງຕ້ອງແຈ້ງຈຸດປະສົງເຂົ້າຮ່ວມປະຊຸມທາງອອນລາຍຜ່ານລະບົບ EGM ທີ່ບໍລິສັດໄດ້ແຈ້ງລາຍລະອຽດຜ່ານອີເມວ, ເລີ່ມລົງທະບຽນປະຊຸມທາງອອນລາຍເລີ່ມແຕ່ວັນທີ່ແຈ້ງອີເມວ ເຖິງ ວັນທີ 19 ພະຈິກ 2026.

1. **ເອກະສານທີ່ຕ້ອງກະກຽມໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ EGM ໃນແຕ່ລະຮູບແບບ ມີດັ່ງນີ້:**

1) ສຳລັບຜູ້ຖືຮຸ້ນທີ່ມາດ້ວຍຕົນເອງ ທີ່ມີຈຸດປະສົງແຈ້ງເຂົ້າປະຊຸມແບບຊ່ອງໜ້າ, ໃນກໍລະນີນີ້ ຜູ້ຖືຮຸ້ນບໍ່ຈຳເປັນຕ້ອງນຳສິ່ງເອກະສານ ອີເລັກໂທຣນິກໃດໆ ເຂົ້າສູ່ລະບົບ EGM.

2) ສຳລັບຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງໜ້າ:

2.1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ ເທົ່ານັ້ນ).

2.2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໃນບາງວາລະ; (ກະລຸນາ ໝາຍໃສ່ຊ່ອງ ເຫັນດີ ຫຼື ບໍ່ເຫັນດີ ສະເພາະໃນວາລະທີ່ທ່ານຕ້ອງການລົງຄະແນນສຽງ)

2.3. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.

- ການເຂົ້າຮ່ວມກອງປະຊຸມຂອງຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງໜ້າລັກສະນະ 2.1 2.2 ແລະ 2.3 ຜູ້ຖືຮຸ້ນ ຈະຕ້ອງ ທຳການສະແກນເອກະສານບັດປະຈຳຕົວ /ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງຜູ້ຖືຮຸ້ນເອງ ເພື່ອຢືນຢັນຕົວຕົນ, ເອກະສານໃບມອບສັນທະ, ເອກະສານສຳຄັນຕ່າງໆ ໂດຍເອກະສານທັງໝົດຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ) ເພື່ອນຳເຂົ້າສູ່ລະບົບ EGM ເພື່ອໃຫ້ເຈົ້າໜ້າທີ່ທຳການລົງຄະແນນສຽງໃຫ້ສຳເລັດ.
- ນອກຈາກນີ້ຜູ້ຖືຮຸ້ນຈະຕ້ອງລົງທະບຽນໃຫ້ຜູ້ຕາງໜ້າ (ຜູ້ຕາງໜ້າທົ່ວໄປທີ່ບໍ່ແມ່ນກຳມະການອິດສະຫຼະ) ໂດຍການອັບໂຫຼດເອກະສານບັດປະຈຳຕົວ/ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງຜູ້ຕາງໜ້າ ເພື່ອຢືນຢັນຕົວຕົນ. ໂດຍຕ້ອງເປັນຟາຍ ນາມສະກຸນ JPG, JPEG ເພື່ອນຳເຂົ້າສູ່ລະບົບ EGM ເພື່ອໃຫ້ເຈົ້າໜ້າທີ່ທຳການລົງຄະແນນສຽງໃຫ້ສຳເລັດ.

3) ສຳລັບຜູ້ຖືຮຸ້ນເຂົ້າຮ່ວມແບບອອນລາຍດ້ວຍຕົນເອງຈະຕ້ອງໄດ້ ອັບໂຫລດເອກະສານບັດປະຈຳຕົວ /ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ເປັນຟາຍນາມສະກຸນ JPG, JPEG ເພື່ອນຳເຂົ້າສູ່ລະບົບ EGM ເພື່ອຢືນຢັນຕົວຕົນເທົ່ານັ້ນ, ສຳລັບກໍລະນີນີ້ຜູ້ຖືຮຸ້ນສາມາດລົງຄະແນນສຽງແບບອອນລາຍໄດ້

ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມທາງອອນລາຍໄດ້. ເຊິ່ງເອກະສານທີ່ຕ້ອງ ຄັດຕິດສົ່ງເຂົ້າມາໃນລະບົບມີດັ່ງນີ້:

1. ການລົງທະບຽນ ເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ EGM.

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມ ຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທາງອອນລາຍ ນັບແຕ່ມື້ສົ່ງແຈ້ງເຊີນຜ່ານອີເມວຂອງຜູ້ຖືຮຸ້ນ ເຖິງວັນທີ 19/11/2026 ໂດຍຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມທາງອອນລາຍຕ້ອງແຈ້ງຈຸດປະສົງເຂົ້າຮ່ວມ ຜ່ານລະບົບ EGM ຄື: https://agm-egm.edlgen.com.la/user/login, ລາຍລະອຽດຕ່າງໆແມ່ນແນບຜ່ານອີເມວ ເຊິ່ງຜູ້ຖືຮຸ້ນຈະໄດ້ຮັບຂໍ້ມູນດັ່ງນີ້:

1) ລິ້ງທີ່ຢູ່ເວັບໄຊສຳລັບການເຂົ້າສູ່ລະບົບ EGM ເພື່ອລົງທະບຽນ ແລະ ລົງຄະແນນສຽງ.
2) ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສຳລັບເຂົ້າສູ່ລະບົບ EGM.

   ພາຍຫຼັງ ກົດລິ້ງ https://agm-egm.edlgen.com.la/user/login ເຂົ້າສູ່ລະບົບຄັ້ງທຳອິດ ຜູ້ຖືຮຸ້ນຈຳເປັນຕ້ອງໄດ້ກົດ "ລືມລະຫັດຜ່ານ" ເພື່ອດຳເນີນຕັ້ງຄ່າ ລະຫັດຜ່ານໃຫມ່ ໂດຍທີ່ ລະບົບຈະສົ່ງຂໍ້ຄວາມໄປທີ່ອີເມວຂອງທ່ານທັນທີ.
3) ເມື່ອເຂົ້າສູ່ລະບົບ ການຕອບຮັບເຂົ້າຮ່ວມປະຊຸມ ຈະມີ 3 ທາງເລືອກເຊັ່ນ:
   3.1. "ຕ້ອງການເຂົ້າຮ່ວມປະຊຸມ ມາດ້ວຍຕົນເອງ (Individual)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແຕ່ເຂົ້າຮ່ວມປະຊຸມແບບຊ່ອງໜ້າ.
   3.2. "ຕ້ອງການເຂົ້າຮ່ວມກອງປະຊຸມ ໂດຍການມອບສັນທະ (Proxy)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ມອບສັນທະ, ເຊິ່ງມີລາຍລະອຽດດັ່ງນີ້ :
   - ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ ເທົ່ານັ້ນ).
   - ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໃນບາງວາລະ.
   - ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.

   3.3. "ຕ້ອງການເຂົ້າຮ່ວມປະຊຸມ ດ້ວຍຕົນເອງ ແບບອອນລາຍ" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ເຂົ້າຮ່ວມປະຊຸມຜ່ານທາງ Microsoft Team ແລະ ໂຫວດຄະແນນສຽງຜ່ານລະບົບ EGM.

2. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຈະຕ້ອງສຳເນົາ ເພື່ອນຳເຂົ້າລະບົບ EGM ເພື່ອໃຊ້ໃນການຢັ້ງຢືນຕົວຕົນ ໃນການເຂົ້າຮ່ວມກອງປະຊຸມອອນລາຍ

- ເອກະສານທີ່ໃຊ້ເພື່ອຢັ້ງຢືນຕົວຕົນເຊັ່ນ: ບັດປະຈຳຕົວ, ບັດໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ແລະ ເອກະສານອື່ນໆທີ່ກ່ຽວກັບເອກະສານຢັ້ງຢືນຕົວຕົນ ຕ້ອງເປັນຟາຍຮູບພາບ ນາມສະກຸນ JPG ຫຼື JPEG.
- ເອກະສານໃບມອບສັນທະ ແລະ ເອກະສານສຳຄັນຕ່າງໆ ຕ້ອງເປັນຟາຍນາມສະກຸນ PDF.

2.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

2.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມອອນລາຍດ້ວຍຕົນເອງ

(1) ໃຫ້ສຳເນົາເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ, ໃນກໍລະນີ

ດັ່ງກ່າວ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ EGM ຫຼື ອີເມວກໍ່ໄດ້.

2.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ສຳເນົາເອກະສານ ດັ່ງລຸ່ມນີ້ :

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ. ຕົວແທນຕ້ອງສຳເນົາເອກະສານໃນຮູບແບບຟາຍ PDF.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 2.1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍໃນຮູບແບບຟາຍ PDF.

- **ເອກະສານ 2 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ສຳເນົາເອກະສານໃນຮູບແບບນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(4) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມເຕີມຜ່ານລະບົບ EGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2 ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ

2.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ອັບໂຫລດເອກະສານໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ),ໃຫ້ສຳເນົາເອກະສານ ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ເຂົ້າສູ່ລະບົບ EGM ເພື່ອຢືນຢັນຕົວຕົນ.

(3) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມເຕີມຜ່ານລະບົບ EGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ ໃຫ້ສຳເນົາເອກະສານເປັນຟາຍດຽວ ເພື່ອສົ່ງເອກະສານໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ EGM.

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ EGM ເພື່ອຢືນຢັນຕົວຕົນ.

(3) ສະແກນເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້ 2.2.1 (1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF).

- **ເອກະສານ 3 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ອັບໂຫຼດເອກະສານໃນຮູບແບບ ນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(5) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມເຕີມຜ່ານລະບົບ EGM ຫຼື ສົ່ງໂດຍກົງຜ່ານອີເມວກ່ຳໄດ້.

2.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 2.2.1 ຫຼື 2.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

3. ການມອບໝາຍເອກະສານ.

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

3.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

- ໃຫ້ສະແກນເອກະສານ ໃບມອບສັນທະ ໃນຮູບແບບຟາຍ (PDF) ເພື່ອສົ່ງເຂົ້າລະບົບ EGM ພາຍໃນວັນທີ 19 ພະຈິກ 2026 ກ່ອນກອງປະຊຸມເລີ່ມຢ່າງໜ້ອຍໜຶ່ງຊົ່ວໂມງ (14:00 ໂມງ) ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

4. ການແຈ້ງຕອບ ຈາກລະບົບ EGM ແລະ ຮັບລົ້ງປະຊຸມອອນລາຍຜ່ານ Microsoft Teams.

- ກໍລະນີ ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງ ຜົນສະຖານະ ແລະ ແຈ້ງລົ້ງເຂົ້າຮ່ວມປະຊຸມຜ່ານ Microsoft Teams ໃນລະບົບບັນຊີຜູ້ໃຊ້ງານ EGM.
- ກໍລະນີ ບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງຜ່ານອີເມວຂອງຜູ້ຖືຮຸ້ນ ແລະ/ຫຼື ອີເມວຂອງຜູ້ຕາງໜ້າ.
- ອີເມວເຈົ້າໜ້າທີ່ລົງທະບຽນຈະສົ່ງຫາຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງດຳເນີນການດ້ານເອກະສານໃຫ້ສຳເລັດ ຕາມໄລຍະເວລາທີ່ກຳນົດ, ອີເມວສຳລັບການແຈ້ງກໍລະນີເອກະສານບໍ່ຜ່ານການອະນຸມັດ ຊື່ທີ່ຢູ່ອີເມວ: agm-egm@edlgen.com.la ສຳລັບຜູ້ຖືຮຸ້ນລົງທະບຽນເຂົ້າຮ່ວມດ້ວຍໂຕເອງແບບອອນລາຍ, ແລະ proxy-register@edlgen.com.la ສຳລັບການລົງທະບຽນແບບແຕ່ງຕັ້ງມອບໝາຍຜູ້ຕາງໜ້າເຂົ້າປະຊຸມແທນ.

5. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ EGM.

5.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ເມື່ອຜູ້ຖືຮຸ້ນເຂົ້າສູ່ລະບົບເພື່ອລົງຄະແນນສຽງ ພາຍໃນລະບົບ ຈະມີ 2 ທາງເລືອກ ເພື່ອກົດລົງຄະແນນສຽງ ເຫັນດີ ຫຼື ບໍ່ເຫັນດີ, ຜູ້ຖືຮຸ້ນຈະເຫັນ ແລະ ສາມາດກົດເຂົ້າສູ່ວາລະ ເພື່ອລົງຄະແນນສຽງໄດ້ ກໍຕໍ່ເມື່ອ ວາລະນັ້ນເປີດໃຫ້ລົງຄະແນນສຽງຢູ່.

5.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມຜ່ານທາງອອນລາຍ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼື ບໍ່, ການົດເວລາບໍ່ເກີນ 2 ນາທີ ໃນການລົງຄະແນນສຽງ, ຜູ້ທີ່ເຫັນດີຕ້ອງກົດເລືອກ “ເຫັນດີ” 

, ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກົດເລືອກ “ບໍ່ເຫັນດີ” 

ໃນໜ້າຕ່າງການລົງຄະແນນ ເພື່ອລະບົບຈະນຳໄປກວດນັບສະຫຼຸບຄະແນນສຽງ, **<u>ຍົກເວັ້ນ:</u>** ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ແລະ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ) ຈະບໍ່ສາມາດລົງຄະແນນສຽງແບບອອນລາຍໄດ້, ເນື່ອງຈາກ ເຈົ້າໜ້າທີ່ຮັບຜິດຊອບລົງຄະແນນສຽງ ໄດ້ທຳການລົງຄະແນນສຽງ ແລະ ບັນທຶກຄະແນນສຽງດັ່ງກ່າວຕາມທີ່ຕົວແທນໄດ້ນຳສົ່ງຟາຍເອກະສານມອບສັນທະ ເຂົ້າສູ່ລະບົບ EGM ກ່ອນໜ້ານີ້ແລ້ວ.

5.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນສຽງ.</u>

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມ, ບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດໃນແຕ່ລະວາລະ, ຜູ້ຖືຮຸ້ນສາມາດຮັບຊົມການສະຫຼຸບ ແລະ ແຈ້ງຄະແນນສຽງຜ່ານກອງປະຊຸມອອນລາຍ ຜ່ານໂປຣແກຣມ Microsoft Teams.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

II. <u>ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບຊ່ອງໜ້າ</u>

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ, ໃບແຈ້ງສິດ ແລະ ໃບມອບສັນທະມາພ້ອມ.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.</u>

1. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງໃຊ້ໃນການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ

1.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

1.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ
ໃຫ້ສະແດງເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 1.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ.

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 <u>ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ</u>

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(3) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້1.2.1(1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື 1.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

2.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

2.2 ນຳສົ່ງໃບມອບສັນທະຄືນໃຫ້ ຄະນະກຳມະການລົງທະບຽນ ກ່ອນວັນທີ **19 ພະຈິກ 2026** ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງຊົ່ວໂມງ (14:00 ໂມງ) ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມ ຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ກ່ອນເປີດກອງປະຊຸມ 01 ຊົ່ວໂມງ ຫຼື ຕັ້ງແຕ່ເວລາ 13:00-14:00 ໂມງ ໃນວັນທີ **19 ພະຈິກ 2026** ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງ ບໍລິສັດ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນຕາມແຜນທີ່ຄັດຕິດມາພ້ອມນີ້.

ໃນນີ້, ໃນແຕ່ລະອາລະປະຊຸມ ກ່ອນເລີ່ມການລົງຄະແນນ ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະອາລະປະຊຸມສຳເລັດ.

4. ການລົງຄະແນນສຽງໃນກອງປະຊຸມວິສາມັນຜູ້ຖືຮຸ້ນ

4.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳຫຼັບທຸກໆ ອາລະປະຊຸມ ທີ່ຕ້ອງມີການລົງຄະແນນສຽງ ໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນ ໃນເວລາທີ່ລົງທະບຽນ, **<u>ຍົກເວັ້ນ</u>** ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມ ໄປຕາມລະບຽບອາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະອາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະອາລະປະຊຸມ</u>

ໃນການລົງຄະແນນສຽງໃນແຕ່ລະອາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼືບໍ່ ຜູ້ທີ່ເຫັນດີບໍ່ຕ້ອງກາເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີກັບອາລະປະຊຸມດັ່ງກ່າວ ໃຫ້ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນ ເພື່ອສົ່ງມອບໃຫ້ແກ່ເຈົ້າໜ້າທີ່ຂອງບໍລິສັດ ເພື່ອນຳໄປກວດນັບ, <u>ຍົກເວັ້ນ</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ສົ່ງບັດລົງຄະແນນ “ບໍ່ເຫັນດີ” ຫຼື “ງົດອອກສຽງ” ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຊາບຜົນການລົງຄະແນນສຽງ ໃນແຕ່ລະອາລະປະຊຸມສິ້ນສຸດລົງແລ້ວ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມ ເປັນຄະແນນສຽງອີກ.

4.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ</u>

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມອາລະປະຊຸມ ໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດການປະຊຸມໃນແຕ່ລະອາລະ.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ຂັ້ນຕອນເຂົ້າລະບົບກອງປະຊຸມຜູ້ຖືຮຸ້ນ ຜ-ຟຟລ ຜ່ານລະບົບອອນລາຍ

ຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າປະຊຸມຜ່ານລະບົບອອນລາຍ ສາມາດປະຕິບັດຕາມຂັ້ນຕອນດັ່ງນີ້:

1. ບໍລິສັດ ຈະສົ່ງ E-mail ແຈ້ງເຊີນປະຊຸມ ແລະ ລາຍລະອຽດການເຂົ້າຮ່ວມປະຊຸມ ໄປຫາຜູ້ຖືຮຸ້ນປະກອບມີ:
   1) ລິ້ງສຳລັບເຂົ້າສູ່ລະບົບ EGM ເພື່ອລົງທະບຽນກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງຜ່ານອອນລາຍ.
   2) ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສຳລັບ ເຂົ້າສູ່ລະບົບ EGM.
   3) File ບັດເຊີນທີ່ຄັດຕິດເພື່ອເປັນຂໍ້ມູນ.
      - ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la
2. ສຳລັບຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍ, ລະບົບລົງທະບຽນອອນລາຍ ຈະເປີດໃຫ້ດຳເນີນການ **ຕັ້ງແຕ່ວັນທີຜູ້ຖືຮຸ້ນໄດ້ຮັບບັດເຊີນ ໂດຍລະບົບຈະປິດຮັບ ການລົງທະບຽນອອນລາຍ ໃນວັນທີ 19/11/2026 ເວລາ 15:00 ໂມງ.**
3. ທ່ານສາມາດ ສະແກນ QR Code ແລະ ນຳໃຊ້ Short link ເພື່ອດາວໂຫລດຄູ່ມືການຕິດຕັ້ງ ໂປຣແກຣມ Microsoft Teams ແລະ ຂັ້ນຕອນການໃຊ້ງານລະບົບ ກອງປະຊຸມຜູ້ຖືຮຸ້ນ ຜ-ຟຟລ ຜ່ານລະບົບອອນລາຍ EGM ເພື່ອສຶກສາກ່ຽວກັບລະບົບ ແລະ ປະຕິບັດຕາມແຕ່ລະຂັ້ນຕອນ.

Short link = shorturl.at/itZwz

ໝາຍເຫດ:

1. ຜູ້ຖືຮຸ້ນຕ້ອງນຳເອົາ ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ທີ່ໄດ້ຮັບຈາກ E-mail ເພື່ອໃຊ້ເປັນ ຊື່ຜູ້ໃຊ້ງານ ເຂົ້າສູ່ລະບົບ EGM, ເພື່ອແຈ້ງຈຸດປະສົງການເຂົ້າຮ່ວມຜ່ານອອນລາຍ, ເມື່ອເອກະສານຢັ້ງຢືນຕົວຕົນ ແລະ ເອກະສານສຳຄັນຕ່າງໆຂອງຜູ້ຖືຮຸ້ນ ຜ່ານການອະນຸມັດໃນຂັ້ນຕອນນີ້ຈະນັບເປັນອົງປະຊຸມໃຫ້ (ຖ້າຫາກຜູ້ຖືຮຸ້ນບໍ່ດຳເນີນການລົງທະບຽນ/ຢືນຢັນຕົວຕົນໃຫ້ສຳເລັດ, ກໍລະນີທີ່ເອກະສານບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ ການເຂົ້າຮ່ວມກອງປະຊຸມ ລະບົບຈະບໍ່ນັບເປັນອົງປະຊຸມ ແລະ ບໍ່ສາມາດໂຫວດຄະແນນຜ່ານອອນລາຍໄດ້ ລວມເຖິງຈະບໍ່ສາມາດຮັບຊົມການຖ່າຍທອດສົດຂອງກອງປະຊຸມໄດ້), ກໍລະນີເຂົ້າຮ່ວມໂຫວດອອນລາຍ ຖ້າຫາກຜູ້ຖືຮຸ້ນກົດປຸ່ມ “ອອກຈາກການປະຊຸມ ຫຼື ອອກຈາກລະບົບໂຫວດຄະແນນສຽງ” ລະຫວ່າງການດຳເນີນກອງປະຊຸມ ລະບົບຈະຕັດຄະແນນສຽງ ອອກຈາກອົງປະຊຸມ.

2. ຜູ້ຖືຮຸ້ນຕ້ອງມີ E-mail ເພື່ອຮັບຂໍ້ມູນແຈ້ງເຊີນເຂົ້າຮ່ວມລົງທະບຽນກອງປະຊຸມຜູ້ຖືຮຸ້ນ ຜ-ຟຟລ ຜ່ານລະບົບ ອອນລາຍ.
3. ຂໍ້ມູນທີ່ປະກອບໃນລະບົບຕ້ອງກົງກັບຂໍ້ມູນ ໃນວັນ Record Date ຈາກຕະຫຼາດຫຼັກຊັບລາວ.
4. ກໍລະນີພົບບັນຫາໃນການໃຊ້ງານລະບົບປະຊຸມຜູ້ຖືຮຸ້ນຜ່ານລະບົບອອນລາຍ ຂອງ ຜ-ຟຟລ ສາມາດຕິດຕໍ່ໄດ້ ທີ່ເບີໂທ: 020 5654 3919 (ທ່ານ ພູຂົງ ສີນຍະສອນ), 020 5153 5595 (ທ່ານ ຄານນະຄອນ ເພັ້ງສະ ຫວັດ), ,ໃຫ້ບໍລິການຈົນເຖິງ ວັນທີ 19 ພະຈິກ 2026 ເວລາ 8:30 - 15:00 ໂມງ.

ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ

Map of the Meeting Place

- ທີ່ຫ້ອງປະຊຸມ ຊັ້ນທີ 1 ອາຄານສຳນັກງານ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ , ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
- At meeting room, 1st floor, EDL Headquarter building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital



ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ລັດວິສາຫະກິດ ໄຟຟ້າລາວ.

On 1st floor, Electricite du Laos headquarters building.